ເມືອງລາວ ເຮືອນຍາວ ເຜົ່າກະໄດ

ທີ່ແຂວງສາລະວັນ ພາກໃຕ້ຂອງປະເທດລາວ



ຂຽນ ແລະ ຮຽບຮຽງ

ສະຖາບັນຄົ້ນຄ້ວາ ວັດທະນະທຳ

ຫ້ອງຄົ້ນຄ້ວາຮາຕະ ຄະນະວິສະວະກຳສາດ ສະຖາບັນເຕັກໂນໂລຊີ ຊິບາອູລະ

Hata Laboratory of Shibaura Institute of Technology



ಶಿಕ್ಷಣದಲ್ಲಿ ಕಂಪ್ಯೂಟರ್ ಬಳಕೆಯ ಬಗ್ಗೆ ಅಧ್ಯಯನ ನಡೆಸಲು ಶಿಬೂರಿನ ಹಾಲಾ ಪ್ರಯೋಗಾಲಯಕ್ಕೆ ಭೇಟಿ ನೀಡಿದ ಸಂದರ್ಭದಲ್ಲಿ ಕಂಪ್ಯೂಟರ್ ಬಳಸಿ ಕಲಿಯುತ್ತಿರುವ ಮಕ್ಕಳು.

ಹಾಲಾ ಪ್ರಯೋಗಾಲಯ
ಶಿಬೂರು ತಂತ್ರಜ್ಞಾನ ಸಂಸ್ಥೆ
Hala Laboratory of Shibaura Institute of Technology

ເມືອງລາວ ເຮືອນຍາວ ເຜົ່າກະໂດ

01 ມີນາ 2005 ພິມຄັ້ງທີ 1

ຂຽນແລະຮຽບຮຽງ : ສະຖາບັນຄົ້ນຄວ້າ ວັດທະນະທຳ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ບ້ານ ສີເມືອງ, ຖະໜົນ ຄູວຽງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ.ປ.ປ.ລາວ.
ຕູ້ ປ.ນ: 5462, ໂທລະສັບ: (856) 21 212008, ໂທລະສານ: (856) 21 212009.

ຫ້ອງຄົ້ນຄວ້າຮາຕະ ຄະນະວິສະວະກຳສາດ ສະຖາບັນເຕັກໂນໂລຊີ ຊິບາອູລະ.
3-9-14 Shibaura, Minato-ku, Tokyo 108-8548, Japan
Tel & Fax: +81 3 5476 3091

ຜູ້ຈັດພິມ : ຫ້ອງຄົ້ນຄວ້າຮາຕະ ຄະນະວິສະວະກຳສາດ ສະຖາບັນເຕັກໂນໂລຊີ ຊິບາອູລະ.

ທະບຽນອະນຸຍາດ : 139ພຈ/23022005

ສະຖານທີ່ພິມ : ໂຮງພິມ ມັນທາຕຸລາດ

Printed in Vientiane, Lao P.D.R.

ຄຳນຳ

ຢູ່ໃນໂລກຂອງເຮົາໃນປະຈຸບັນ ວັດທະນະທຳຂອງຊົນເຜົ່າ ແມ່ນມີແນວໂນ້ມທີ່ຈະສູນຫາຍໄປ ຍ້ອນມີການຂະຫຍາຍຕົວທາງດ້ານເສດຖະກິດຕະຫຼາດ ແລະ ຂໍ້ມູນຂ່າວສານເຕັກໂນໂລຊີ ສ.ປ.ປ.ລາວກໍ່ເປັນປະເທດໜຶ່ງທີ່ບໍ່ອາດຍົກເວັ້ນຈາກແນວໂນ້ມດັ່ງກ່າວນີ້ໄດ້ ຢູ່ໃນໄລຍະຄວາມຈະເລີນຮຸ່ງເຮືອງ ແລະ ກຳລັງພັດທະນານີ້ການໃຫ້ຄວາມສຳຄັນຕໍ່ ວັດທະນະທຳຂອງຊົນເຜົ່າ ແມ່ນບໍ່ຄ່ອຍມັກຖືກປະຕິບັດ ແລະ ມັນກໍ່ເປັນເລື້ອງຍາກຄືກັນ ທີ່ບັນດາຄົນຊົນເຜົ່າຕ່າງໆ ຈະສາມາດປົກປ້ອງວັດທະນະທຳອັນມີຄ່າຂອງຕົນເອົາໄວ້ໄດ້.

ສະຖາບັນຄົ້ນຄ້ວາວັດທະນະທຳ ບໍ່ພຽງແຕ່ຄົ້ນຄ້ວາ ບັນທຶກກ່ຽວກັບເຮືອນຊານ ແລະ ເຄື່ອງໃຊ້ສອຍຕ່າງໆຂອງບັນດາຊົນເຜົ່າໃນປະເທດລາວເທົ່ານັ້ນ ເປັນວາລະໂອກາດດີ ທີ່ສະຖາບັນຄົ້ນຄ້ວາວັດທະນະທຳ ແລະ ຫ້ອງຄົ້ນຄ້ວາຣາຕະ ສະຖາບັນເຕັກໂນໂລຊີ ຊິບາອຸລະ ໄດ້ມີໂຄງການຮ່ວມມືກັນພາຍໃຕ້ກອງທຶນຂອງ Japan Foundation Asia Center ໃນການຄົ້ນຄ້ວາເຮືອນຊົນເຜົ່າຕຽງ ຢູ່ເມືອງດັກຈຶງ ແຂວງເຊກອງ ໃນເດືອນທັນວາ ປີ2002 ແລະກໍ່ໄດ້ຈັດພິມປຶ້ມຜົນການຄົ້ນຄ້ວາດັ່ງກ່າວ ໃນເດືອນ ມີຖຸນາ ປີ 2003 ຢູ່ທີ່ປະເທດລາວ ໜັງສືເຫຼັ້ມນີ້ແມ່ນຜົນການຄົ້ນຄ້ວາຄັ້ງທີ 2 ຂອງພວກເຮົາ ໃນການຮ່ວມມືກັນລົງສຳຫຼວດບ້ານ ແລະ ເຮືອນ ທີ່ເມືອງສະໜ້ວຍ ແຂວງສາລະວັນ.

ຄົນສ່ວນຫຼາຍຄິດວ່າ ການຄົ້ນຄ້ວາເຮືອນວັດທະນະທຳແມ່ນການຄົ້ນຄ້ວາທີ່ງ່າຍໆ ໂດຍອີງໃສ່ສະພາບຮູບຮ່າງ ແລະ ການປົກປັກຮັກສາເຮືອນວັດທະນະທຳ ແຕ່ວ່າສິ່ງດັ່ງກ່າວນີ້ ບໍ່ແມ່ນການຄົ້ນຄ້ວາທັງໝົດຂອງພວກເຮົາ ການຄົ້ນຄ້ວາທັງໝົດຂອງພວກເຮົາ ແມ່ນເພື່ອບັນທຶກຢ່າງໃກ້ຊິດ ກ່ຽວກັບວິທີທາງຂອງການດຳລົງຊີວິດ ຂອງຄົນໃນຊົນເຜົ່າ ວິທີທາງຂອງການປະພຶດໃນການຢູ່ອາໄສໃນບ້ານເຮືອນ ໃນຂະນະດຽວກັນພວກເຮົາກໍ່ໄດ້ວັດແທກແລະສະສົມລວບລວມຕົວຢ່າງ ກ່ຽວກັບຂໍ້ມູນຂອງເຮືອນ ເຖິງຢ່າງໃດກໍ່ຕາມເຮົາມັກເຂົ້າໃຈຜິດວ່າການສຳຫຼວດເຮືອນແມ່ນການເກັບຕົວຢ່າງຂອງເຮືອນຕາມຄວາມງາມ ແລະ ສະພາບທີ່ຮັກສາແຕ່ວ່າການສຳຫຼວດນີ້ ໄດ້ເຮັດຢ່າງລະອຽດໝົດທຸກຫຼັງຄາເຮືອນຂອງທັງສອງບ້ານ ຊຶ່ງປະກອບດ້ວຍການວັດແທກທຸກໆຫຼັງຢູ່ພາຍໃນສອງບ້ານດັ່ງກ່າວພ້ອມກັນນັ້ນກໍ່ໄດ້ມີການ ສຳພາດ ສອບຖາມ ແຕ່ລະເຮືອນກ່ຽວກັບການຢູ່ອາໄສ ແລະ ລະບົບການດຳລົງຊີວິດ ການສຳຫຼວດດັ່ງກ່າວນີ້ ອາດຈະເສຍແຮງງານຫຼາຍ ແລະ ຫາຈຸດປະສົງຍາກ ແຕ່ວ່າເພື່ອທຳຄວາມເຂົ້າໃຈຄວາມຄິດເຫັນກ່ຽວກັບເຮືອນ ແລະ ບັນດາບ້ານເຫຼົ່ານັ້ນ ຈຳເປັນຕ້ອງໄດ້ສຳຫຼວດຕົວຈິງຢ່າງລະອຽດ ກ່ຽວກັບບໍລິເວນການດຳລົງຊີວິດຂອງບັນດາຜູ້ຄົນການ ຄົ້ນຄ້ວານີ້ແມ່ນອາດຈະໃຊ້ເວລາຫຼາຍແລະມີຈຸດປະສົງທີ່ບໍ່ຊັດເຈນ ແຕ່ເຖິງຢ່າງໃດກໍ່ຕາມມັນກໍ່ມີຄວາມຈຳເປັນ ຕ້ອງໄດ້ຄົ້ນຄ້ວາກ່ຽວກັບເນື້ອທີ່ບໍລິເວນຂອງການດຳລົງຊີວິດຂອງຄົນ ໃນນັ້ນເພື່ອທຳຄວາມເຂົ້າໃຈກ່ຽວກັບວິທີການ ຢູ່ອາໄສໃນເຮືອນແລະໃນບ້ານຂອງພວກເຂົາເຈົ້າ ບັນດາແຜນຜັງທີ່ໄດ້ມາຈາກການວັດແທກແລະການສຳພາດ ສອບຖາມ ແມ່ນເປັນເອກະສານທີ່ສຳຄັນ ແລະ ຂາດບໍ່ໄດ້ຂອງພວກຂ້າພະເຈົ້າ ໃນ4ຈຸດປະສົງ ອີກດ້ານໜຶ່ງ ບັນດາບ້ານດັ່ງກ່າວອັນມີເອກະລັກທາງດ້ານປະຫວັດສາດ ແຕ່ລະບ້ານມີທັງວັດທະນະທຳທັງໃໝ່ແລະເກົ່າ ທີ່ມີທັງການປະສົມປະສານ ແລະ ຂັດແຍ່ງກັນລະຫວ່າງຄົນພາຍໃນບ້ານ ຖ້າການຄົ້ນຄ້ວາເປັນພຽງແບບງ່າຍໆ ທຳມະດາເຮົາຈະບໍ່ສາມາດກຳແໜ້ນ ຫຼື ເຂົ້າໃຈ ຕໍ່ຄວາມໃຫຍ່ຂອງຊຸມຊົນທີ່ມີ ໃນມວນມະນຸດເຮົາ.

ຄົນເຜົ່າກະໂດ ມີຊີວິດທີ່ສະຫງ່າຜ່າເຜີຍ ແລະ ມີຄວາມພູມໃຈ ເຖິງແມ່ນວ່າພວກເຂົາເຈົ້າອາດຈະບໍ່ມີຄວາມຈະເລີນທາງດ້ານວັດຖຸກໍ່ຕາມ ແຕ່ວັດທະນະທຳທີ່ສາມາດຈັບຕ້ອງໄດ້ ແລະ ບໍ່ໄດ້ຂອງພວກເຂົາສາມາດເປັນ DNAເຊິ່ງໝາຍຄວາມວ່າມັນໄດ້ມີການພັດທະນາມາໄດ້ຫຼາຍຮ້ອຍປີແລ້ວ ແລະ ມັນບໍ່ສາມາດທຳລາຍໄດ້ອີກ ການຄົ້ນຄ້ວາກ່ຽວກັບຄົນຊົນເຜົ່າກະໂດເຮັດໃຫ້ພວກເຮົາສາມາດຫວນຄິດຄືນວ່າ "ຄວາມຮັ່ງມີ" ໝາຍຄວາມວ່າແນວໃດໂດຍສະເພາະ ສຳລັບນັກຄົ້ນຄ້ວາຄົນຍີ່ປຸ່ນ ຜູ້ທີ່ໄດ້ສູນເສຍວິທີການດຳລົງຊີວິດແບບດັ່ງເດີມໄປ ມັນເປັນທີ່ໜ້າອິດສາຫຼາຍທີ່ຄົນຊົນເຜົ່າກະໂດ ຍັງສາມາດປົກປັກຮັກສາເອກະລັກວັດທະນະທຳ ຂອງເຂົາເຈົ້າຄົງໄວ້ໃນສະພາບເດີມ ໂດຍສະ

ເພາະແມ່ນຮູບແບບການດຳລົງຊີວິດທີ່ດັ່ງເດີມນີ້ໄວ້ໄດ້.

ໜັງສືເຫຼັ້ມນີ້ໃຫ້ເຮົາຮັບຮູ້ກ່ຽວກັບເຮືອນຍາວຂອງເຜົ່າກະໂດ ຊຶ່ງມັນສະທ້ອນໃຫ້ເຫັນເຖິງຮີດຄອງປະເພນີ ແລະ ຊີວິດຈິດໃຈຂອງຄົນເຜົ່າກະໂດ ພວກເຮົາຕັ້ງໃຈຈະພິມໜັງສືຂອງພວກເຮົາເຫຼັ້ມນີ້ຢູ່ປະເທດຍີ່ປຸ່ນ ແລະປະເທດລາວ ໂດຍສະເພາະພວກເຮົາປາດຖະໜາຢ່າງແຮງກ້າວ່າ ຢາກໃຫ້ບັນດາຊົນເຜົ່າທັງໝົດໄດ້ຮູ້ຄວາມອຸດົມສົມບູນຂອງປະເທດຕົນເອງ.

ພວກເຮົາມີຄວາມປິຕິຍິນດີຕໍ່ຄົນໃນບ້ານຕັ້ງໂກແລະບ້ານພັນເບໃນການໃຫ້ຄວາມຮ່ວມໄມ້ ຮ່ວມມື ຕ່ອງກງານຄົ້ນຄ້ວາຂອງພວກເຮົາ ແລະ ຫວັງວ່າວັດທະນະທຳອັນມີຄ່າຂອງເຂົາເຈົ້າ ຈະຄົງຢູ່ຕະຫຼອດການ.

ເດືອນ ມີນາ ປີ 2005.

ທ່ານ ດຣ. ຈັນທະພິລິດ ຈຸມສີສຸລາດ
ອຳນວຍການ
ສະຖາບັນຄົ້ນຄ້ວາວັດທະນະທຳ
ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ສ.ປ.ປ.ລາວ

ທ່ານ ດຣ. ໂຊອິຈິ ຮາຕະ
ສາດສະດາຈານ
ຂະແໜງ ເຄຫາສະຖານ ແລະ ວິສະວະກຳອາຄານ
ພະແນກວິສະວະກຳ
ສະຖາບັນເຕັກໂນໂລຊີ ຊິບາອຸລະ
ປະເທດຍີ່ປຸ່ນ

ຊື່ໂຄງການ : ໂຄງການຄົ້ນຄ້ວາດ້ານສະຖາປັດຕະຍະກຳແລະການດຳລົງຊີວິດ ແບບພື້ນເມືອງດັ່ງເດີມ ທີ່ແຂວງສາລະວັນ.

ທີ່ປຶກສາໂຄງການ :

ທ່ານ ດຣ.ຈັນທະພິລິດ ຈຸມສີສຸລາດ	ຫົວໜ້າສະຖາບັນຄົ້ນຄ້ວາວັດທະນະທຳ
ທ່ານ ດຣ. ບຸນແທງ ສຸກສະຫວັດ	ຮອງຫົວໜ້າສະຖາບັນຄົ້ນຄ້ວາວັດທະນະທຳ

ລາຍຊື່ຜູ້ຮ່ວມຄົ້ນຄ້ວາ

ຝ່າຍສະຖາບັນຄົ້ນຄ້ວາວັດທະນະທຳ

ທ່ານ ທະນົງສອນ ສີບຸນເຮືອງ	ວິຊາການດ້ານຂໍ້ມູນຮູບສຸງ
ທ່ານ ນາງ ສົມພາວັນ ໄຊຍະວົງ	ວິຊາການດ້ານສະຖາປັດຕະຍະກຳ
ທ່ານ ນາງ ດຣ. ກິໂຢມິ ອະໄຣ	ຊ່ຽວຊານປະຈຳໂຄງການ

ຝ່າຍພະແນກຖະແຫຼງຂ່າວແລະວັດທະນະທຳ ແຂວງສາລະວັນ

ທ່ານ ແສງຈະເລີນ ວັນສະເຫຼີມ	ວັດທະນະທຳແຂວງສາລະວັນ
ທ່ານ ບຸນເນີ ປະແລະ	ວັດທະນະທຳເມືອງສະໝ້ວຍ

ຝ່າຍສະຖາບັນເຕັກໂນໂລຊີ ຊິປະອຸລະ

ທ່ານ ດຣ.ໂຊອິຈິ ຣາຕະ	ອາຈານສອນຄະນະວິສະວະກຳ ພະແນກກໍ່ສ້າງ

ນັກສຶກສາ ຄະນະວິສາວະກຳສາດ ພະແນກກໍ່ສ້າງ ສະຖາບັນເຕັກໂນໂລຊີ ຊິບາອູລະ

ທ່ານ ໂຕໂມຕະກະ ຮິຣາຕະ	ປີ 2 ປະລິນຍາໂທ
ທ່ານ ນາງ ໄອ ຟູກຸຢາມະ	ປີ 1 ປະລິນຍາໂທ
ທ່ານ ນາງ ຄາມາໂກະ ຊາກຸຣະປະ	ປີ 4 ປະລິນຍາຕີ
ທ່ານ ນາງ ມິກະ ຊູຊຸກິ	ປີ 4 ປະລິນຍາຕີ

ພາບປະກອບ :

ທ່ານ ຮິໂລມິຊິ ກູລິຫາລະ	ຊ່ຽວຊານຖ່າຍຮູບເຮືອນຊົນເຜົ່າ

ແປພາສາລາວ :

ທ່ານ ດຣ. ໄຊປະຊາ ລຽງສອນ	ປຣິນຍາເອກ ຂະແໜງ ວິສະວະກຳ

ບັນນາທິການ

ປຶ້ມຫົວນີ້ແມ່ນບົດລາຍງານຜົນຂອງການຄົ້ນຄ້ວາ ເກັບກຳຂໍ້ມູນໄດ້ທີ່ເມືອງສະໝ້ວຍແຂວງສາລະວັນ ສປປລາວ ໂດຍໃຊ້ເວລາເລີ້ມຈາກວັນທີ 23 ຫາ 31 ມີນາ ປີ 2004 (9ມື້) ໂຄງການຄົ້ນຄວ້ານີ້ ແມ່ນການຮ່ວມມືກັນລະຫວ່າງ ສະຖາບັນຄົ້ນຄວ້າວັດທະນະທຳ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ຮ່ວມກັບຫ້ອງຄົ້ນຄວ້າຣາຕະ ພະແນກວິ ສະວະກຳ ສະຖາບັນເຕັກໂນໂລຊີ ຊິບາອຸລະ ໂດຍມີຊື່ວ່າ "ໂຄງການຄົ້ນຄ້ວາ ດ້ານສະຖາປັດຕະຍະກຳ ແລະ ການ ດຳລົງຊີວິດແບບພື້ນເມືອງດັ່ງເດີມໃນ ສ.ປ.ປ.ລາວ"

ມາຮອດປະຈຸບັນນີ້ ນອກຈາກບົດລາຍງານສຳຫຼວດເບື້ອງຕົ້ນ ຫຼື ບົດລາຍງານສະຫຼຸບຫຍໍ້ ທາງດ້ານການພັດທະ ນາ ແຂວງສາລະວັນແລ້ວຍັງບໍ່ທັນພົບເຫັນເອກະສານໃດ ທີ່ຄົ້ນຄ້ວາທາງດ້ານສະຖາປັດຕະຍະກຳ ຂອງຊົນເຜົ່າກະ ໂດເທື່ອ ໜັງສືອ້າງອີງທີ່ໄດ້ນຳມາປະກອບສ່ວນໃນການຂຽນບົດນີ້ມີພຽງແຕ່"ປະຫວັດສາດແຂວງສາລະວັນ"(ແຂວງ ສາລະວັນ ປີ 2000) ຫົວດຽວເທົ່ານັ້ນ ໃນບົດທີ 1 ໄດ້ກ່າວເຖິງສະພາບທີ່ຕັ້ງຂອງແຂວງ ແລະ ປະຫວັດຂອງຊົນເຜົ່າ ໂດຍຫຍໍ້ ຊຶ່ງອ້າງອີງຈາກປຶ້ມດັ່ງກ່າວ ແລະ ຍັງໄດ້ຄຳແນະນຳຈາກທ່ານ ຄຳໃບ ຍຸນນະລາດ ຜູ້ເປັນນັກຄົ້ນຄ້ວາທາງ ດ້ານມະນຸດວິທະຍາ ທີ່ສະຖາບັນຄົ້ນຄວ້າວັດທະນະທຳ.

ໃນບົດນີ້ ບົດທີ1 ຫາ ບົດທີ 6 ເຊິ່ງເປັນສ່ວນທີ່ເປັນເນື້ອໃນຫຼັກ ຂຽນດ້ວຍສອງພາສາຄື: ພາສາຍີ່ປຸ່ນ ແລະ ພາ ສາລາວ ລຳດັບໜ້າຂອງພາສາລາວຈະມີຕົວໜັງສື "*L*" ຢູ່ນຳກັນກັບເລກທີ່ນັບໜ້າ ແລະ ເລີ່ມ ຈາກໜ້າທີ່ *1L* ສ່ວນ ພາສາຍີ່ປຸ່ນ ເລີ່ມຈາກ *1J* ບັນດາຂໍ້ມູນແຜນຜັງຈາກການວັດແທກ ແລະ ຂຽນດ້ວຍການພິຈາລະນາຜົນຂອງສະພາບ ທີ່ໄດ້ ແມ່ນຂຽນຂຶ້ນດ້ວຍພາສາອັງກິດ ເປັນເອກະສານແນະນຳເພີ້ມເຕີມ (Appendix) ພ້ອມດ້ວຍ ບົດສະຫຼຸບເປັນ ພາສາອັງກິດ ຊຶ່ງມີຕົວ "*E*" ນຳໜ້າຕົວເລກຂອງລຳດັບໜ້າ ຊຶ່ງມີຢູ່ໃຈກາງຂອງປຶ້ມ ແລະ ເປັນຂໍ້ມູນອ້າງອີງນຳກັນ ໃຫ້ແກ່ເນື້ອໃນຂອງ ພາສາລາວ ແລະ ຍີ່ປຸ່ນ.

ທີມງານຂຽນປຶ້ມຫົວນີ້ ແມ່ນມີຈຳນວນນ້ອຍ ແລະຖ້າຫາກຂາດຜູ້ໃດຜູ້ໜຶ່ງ ກໍ່ຈະບໍ່ສຳເລັດຜົນໄດ້ ຂໍຂອບໃຈນຳ ບັນດາທ່ານທີ່ກ່ຽວຂ້ອງ ໃນການເຮັດປຶ້ມຫົວນີ້ ໂດຍສະເພາະ ທ່ານ ດຣ. ໄຊປະຊາ ລຽງສອນ ເຊິ່ງເປັນຜູ້ ແປເອກະ ສານພາສາຍີ່ປຸ່ນເປັນພາສາລາວ ທີ່ໄດ້ເສຍສະຫຼະເວລາ ໃນການແປເອກະສານນີ້ຫລາຍທີ່ສຸດ ແລະ ຖ້າຫາກບໍ່ມີ ຄວາມພະຍາຍາມ ປຶ້ມຫົວນີ້ກໍ່ບໍ່ສາມາດສຳເລັດລົງໄດ້ ສຳລັບບົດສະຫຼຸບເປັນພາສາອັງກິດໄດ້ການຊ່ວຍເຫຼືອຈາກ ທ່ານ ນາງ ກາໂອລິ ໂມລິ ຢູ່ຄະນະວິສະວະກຳ ສະຖາບັນເຕັກໂນໂລຊີ ຊິບະອູລະ ໃນການກວດແກ້ ແລະ ລວມທັງ ການຮ່ວມມືຈາກກົມພິມຈຳໜ່າຍ ກະຊວງຖະແຫຼງຂ່າວແລະວັດທະນະທຳ ບັນດາຮູບພາບທີ່ໃຊ້ໃນປຶ້ມຫົວນີ້ໄດ້ຮັບ ການ ສະໜັບສະໜູນໂດຍທ່ານ ກູລິຣາລະ ຊຶ່ງເປັນຊ່າງພາບເຮືອນຊົນເຜົ່າ, ຂໍສະແດງຄວາມຂອບໃຈອີກເທື່ອໜຶ່ງ.

ຄະນະຈັດທຳ

ວຽງຈັນ, ມີນາ 2005.

ວິທີການສຳຫລວດ:

ການສຳພາດ:

ແມ່ນສຳພາດກ່ຽວກັບຄວາມເປັນມາຂອງບ້ານ ໂຄງຮ່າງສັງຄົມ ບຸນປະເພນີ ພິທີກຳຕ່າງໆ ວິທີການປຸກສ້າງເຮືອນ ຫົວໜ່ວຍການວັດແທກ ບັນດາຊື່ຫ້ອງພາຍໃນເຮືອນ ຊື່ຂອງຊິ້ນສ່ວນປະກອບຂອງເຮືອນ ເຊື້ອສາຍວົງຕະກຸນ ສຶກສາການດຳລົງຊີວິດຂອງແຕ່ລະຫຼັງເຮືອນ ແລະ ອາຍຸຂອງເຮືອນ.

ການວັດແທກຕົວຈິງ:

ສຳຫລວດທີ່ຕັ້ງເຮືອນ ແລະ ບໍລິເວນບ້ານ (ວັດແທກ ແລະ ແຕ້ມແຜນບ້ານ) ວັດແທກເຮືອນແຕ່ລະຫຼັງ(ແຕ້ມແຜນຜັງພາຍໃນເຮືອນ ແລະ ທາງນອກຂອງບໍລິເວນຢູ່ອາໄສ) ແຕ້ມ ແລະ ວັດແທກໂຄງສ້າງຂອງເຮືອນ.

ການຖ່າຍພາບ:

ບັນທຶກພາບການດຳລົງຊີວິດ ພິທີກຳຕ່າງໆ ຖ່າຍຮູບເພື່ອຊ່ວຍໃນການວັດແທກ.

(ໂດຍ ທ່ານ ຮິໂລມິຊຸ ກູລິຫາລະ).

ສາລະບານ

ຄຳນຳ..... 3ㅣ.

ບັນນາທິການ ..... 6ㅣ.

ສາລະບານ..... 8ㅣ.

ສາລະບານຮູບ..... 11ㅣ.

ໝາຍເຫດຫົວຂໍ້ກ່ຽວກັບສັນຍາລັກຕົວອັກສອນທີ່ໃຊ້ ..... 12ㅣ.

ບົດທີ 1: ພູມສັນຖານທາງພາກໃຕ້ຂອງປະເທດລາວທີ່ຊົນເຜົ່າກະໂດຕຳລົງຊີວິດຢູ່..... 14ㅣ.

1. ແຂວງສາລະວັນ..... 14ㅣ.
2. ເມືອງສະໝ້ວຍ..... 16ㅣ.
3. ບ້ານທີ່ໄດ້ລົງສຳຫຼວດ..... 16ㅣ.

ບົດທີ 2: ການດຳລົງຊີວິດ ຂອງຊົນເຜົ່າກະໂດ ..... 18ㅣ.

1. ອາຊີບ..... 18ㅣ.
2. ປະຕິທິນການຜະລິດ..... 18ㅣ.
3. ຄວາມເຊື່ອ..... 19ㅣ.
4. ໝໍໄສຍະສາດ"ອາລະມົ້ນ" ..... 20ㅣ.
5. ສັດລ້ຽງ ແລະສັດສຳລັບໃຊ້ເຂົ້າໃນພິທີກຳ ..... 21ㅣ.

ບົດທີ 3: ປະຫວັດການຍົກຍ້າຍ ຂອງບ້ານຕ້ຽໂກ ແລະ ພີນເບ..... 22ㅣ.

1. ປະຫວັດການຍົກຍ້າຍ ຂອງບ້ານຕ້ຽໂກ ..... 22ㅣ.
2. ປະຫວັດການຍົກຍ້າຍ ຂອງບ້ານພີນເບ..... 23ㅣ.

ບົດທີ 4: ພິທີກຳທາງສາດສະໜາ ງານບຸນປະເພນີ ແລະ ການດຳລົງຊີວິດ ..... 24ㅣ.

1. ຂໍ້ຫ້າມເວລາຖືພາ ແລະ ເກີດລູກ ..... 24ㅣ.
2. ການແຕ່ງດອງ ແລະ ພິທີຂອງງານດອງ..... 25ㅣ.
3. ພິທີກຳຂອງງານສົບ..... 26ㅣ.
4. ງານບຸນບັນພະບູລຸດ "ຈະລະປົບ" (ຈັດທຸກໆ 30 ປີ) ..... 28ㅣ.
   - 4-1. ພິທີຂ້າຄວາຍ..... 28ㅣ.
   - 4-2. ອານຕຸງກັນໂມ້ຍ ຂອງບ້ານຕ້ຽໂກ ..... 29ㅣ.

24/7 VII
ห้องสมุดประชาชน

ບົດທີ 5: ວິທີການປຸກເຮືອນ ແລະ ຈຸດພິເສດຂອງເຮືອນ 31

1. ການປຸກເຮືອນ 31
2. ການນຳໃຊ້ຫ້ອໜ່ວຍວັກແທກດ້ວຍຮ່າງກາຍຄົນ ຂອງຄົນເຜົ່າກະໂດ 32
3. ການຢູ່ອາໄສ ແລະ ເນື້ອທີ່ບໍລິເວນຂອງມ້ອງຕຸມ້ອຍເຊິ່ງມີຫ້ຽງຢູ່ໃນ 32
   - 3-1. ການຈັດມ້ອງຕຸມ້ອຍ (ຫ້ອງຮັບແຂກ) 35
   - 3-2. ການນຳໃຊ້ມ້ອງຕຸມ້ອຍ 37
4. ການຢູ່ອາໄສຂອງຄອບຄົວ ແລະຊື່ຂອງບັນດາຫ້ອງພາຍໃນເຮືອນ 37

ບົດທີ 6: ບ້ານຂອງເຜົ່າກະໂດ ແລະ ການຢູ່ອາໄສ 40

1. ການປະກອບເນື້ອທີ່ບໍລິເວນຂອງບ້ານ ແລະ ທີ່ຕັ້ງຂອງບ້ານ 40
2. ໂຄງສ້າງສັງຄົມທີ່ມີການຈຳກັດລຳດັບຂອງບໍລິເວນທີ່ຢູ່ອາໄສ ແລະ ບ້ານ 42
   - 2-1. ໂຄງສ້າງສັງຄົມ ແລະ ບໍລິເວນທີ່ຢູ່ອາໄສ ຂອງບ້ານຕັ້ງໂກ 42
   - 2-2. ໂຄງສ້າງສັງຄົມ ແລະ ບໍລິເວນທີ່ຢູ່ອາໄສ ຂອງບ້ານພີນເບ 43
   - 2-3. ໂຄງສ້າງສັງຄົມ ແລະ ບໍລິເວນທີ່ຢູ່ອາໄສ ຂອງເຜົ່າກະໂດ 46
3. ການປະກອບເນື້ອທີ່ບໍລິເວນຂອງເຮືອນຍາວ ແລະ ການຢູ່ອາໄສ 46
   - 3-1. ການຢູ່ອາໄສທີ່ມີການປ່ຽນແປງຫຼາຍແບບ ແລະເຮືອນຍາວຂອງບ້ານຕັ້ງໂກ 46
     - ເຮືອນຍາວແບບ ແຖວດຽວ
     - ເຮືອນຍາວແບບ ສອງແຖວ
     - ເຮືອນຍາວກາງ
     - ເຮືອນນ້ອຍທີ່ບໍ່ສົມບູນແບບ
   - 3-2. ຈຸດສັງເກດປະເພນີການຢູ່ອາໄສໃນເຮືອນຍາວຢູ່ບ້ານພີນເບ 51
     - ເຮືອນຍາວແບບ ແຖວດຽວ
     - ເຮືອນຍາວແບບ ສອງແຖວ
   - 3-3. ການປະກອບເນື້ອທີ່ບໍລິເວນຂອງເຮືອນຍາວ ແລະ ການຢູ່ອາໄສ 53
     - ເຮືອນຍາວ ເຊິ່ງເປັນບ່ອນຢູ່ຂອງເຜົ່າກະໂດ 54
     - ການແຍກສ່ວນຂອງເຮືອນຍາວ ແລະການເກີດຂຶ້ນຂອງເຮືອນຍາວກາງໃໝ່ 56

Houses and Villages of the Kado

-The Longhouses in Salavan of Southern Laos -

Contents of English Edition

Preface (ຄຳນຳ).....*3E*

Editor's note (ບັນນາທິການ).....*5E*

Contents of English Edition (ສາລະບານຂອງພາສາອັງກິດ).....*6E*

Color Plate List (ສາລະບານຮູບ).....*7E*

The Space Arrangement and the Way of Living in the Longhouse (ໃຈຄວາມສຳຄັນເປັນພາສາອັງກິດ).....*8E*

Appendix (ເອກະສານເພີ້ມເຕີມ) *11E*

1. Tanggo Village (ບ້ານ ຕັງໂກ) *11E*

Map of Tanggo Village (ແຜນທີ່ບ້ານ ຕັງໂກ) *11E*

Rough Map and List of House Number (ແຜນທີ່ຫຍາບແລະລາຍການນຳ້ເບີເຮືອນ)..... *12E*

Legend of Genealogical Chart (ແຜນວາດສະແດງປະຫວັດເຊື້ອສາຍວົງຕະກຸນ).....*13E*

Genealogical Chart (ແຜນວາດສະແດງເຊື້ອສາຍວົງຕະກຸນ)..... *14E*

Adeng */14E* Kawa */14E* Lalai */15E* Pare */16E* Pata */14E*
Pual */21E* Prem */22E* Tanggo */22E* Tinel */22E* Troi */23E*

Spatial Composition of House (ແຜນຜັງຂອງເຮືອນ)..... *28E*

2. Pin-B Village (ບ້ານ ພິນເບ).....*41E*

Map of Pin-B Village (ແຜນທີ່ບ້ານ ພິນເບ)..... *41E*

Rough Map and List of House Number (ແຜນທີ່ຫຍາບແລະລາຍການນຳ້ເບີເຮືອນ)..... *41E*

Legend of Genealogical Chart (ແຜນວາດສະແດງປະຫວັດເຊື້ອສາຍວົງຕະກຸນ).....*42E*

Genealogical Chart (ແຜນວາດສະແດງເຊື້ອວົງຕະກຸນ) *43E*

Dang *143E* Talo */43E* Tuwen */43E* Prin */45E* Vien */47E*

Spatial Composition of House (ແຜນຜັງຂອງເຮືອນ) *49E*

ສາລະບານຮູບ

01 ເຮືອນຍາວແບບແຖວດຽວ ທີ່ມີຫຼັງຄາລັກສະນະຮູບເຄິ່ງວົງມົນ(ບ້ານຕ້ຽໂກ)

02 ພາບລວມທັງໝົດເຮືອນຍາວແບບສອງແຖວ(ບ້ານຕ້ຽໂກ)

03 ພາບບ້ານຕ້ຽໂກ ທີ່ປົກຄຸມໄປດ້ວຍໝອກໃນຕອນເຊົ້າ(ບ້ານຕ້ຽໂກ)

04 ແມ່ກຳລັງອຸ້ມລູກ ຂຶ້ນຂັ້ນໄດເຂົ້າເຮືອນ(ບ້ານຕ້ຽໂກ)

05 ຜູ້ຍິງກວດເດີ່ນບ້ານ(ບ້ານ ພັນເບ)

06 ຜູ້ທີ່ດຳລົງຊີວິດເຮືອນຍາວ ກຳລັງຍ່າງຢູ່ເດີ່ນບ້ານ(ບ້ານພັນເບ)

07 ແມ່ ລູກທີ່ແລ້ວຈາກການເຮັດໄຮ່ ກຳລັງຍ່າງເມື່ອບ້ານ(ບ້ານຕ້ຽໂກ)

08 ເຮືອນຍາວຢູ່ແຄມທາງ(ບ້ານຕ້ຽໂກ)

09 ເດັກນ້ອຍກຳລັງຫລິ້ນຢູ່ເດີ່ນກ້ອງຫຼັງຄາເຮືອນ(ບ້ານຕ້ຽໂກ)

10 ຜູ້ຍິງ ກຳລັງເອົາຟືນລົງຈາກຫຼັງ(ບ້ານຕ້ຽໂກ)

11 ແມ່ ລູກ ກຳລັງພັກຜ່ອນຢູ່ເດີ່ນກ້ອງຫຼັງຄາເຮືອນ(ບ້ານຕ້ຽໂກ)

12 ຫ້ອງນອນຄູ່ຜົວເມຍ ທີ່ເປັນແຖວລຽນກັນ(ບ້ານຕ້ຽໂກ)

13 ທາງດ້ານໃນເຮືອນແບບສອງແຖວ(ບ້ານຕ້ຽໂກ)

14 ມ້ອງຕຸມ້ອຍ ຢູ່ເຮືອນແບບສອງແຖວ(ບ້ານຕ້ຽໂກ)

15 ຫ້ອງນອນຂອງຜົວເມຍ ເຮືອນຍາວແບບສອງແຖວ(ບ້ານຕ້ຽໂກ)

16 ຫ້ອງນອນຂອງຜົວເມຍ ເຮືອນຍາວແບບແຖວດຽວ(ບ້ານຕ້ຽໂກ)

17 ຫ້ອງນອນຂອງຜົວເມຍ ເຮືອນຍາວແບບສອງແຖວແລະທາງທຽວ(ບ້ານຕ້ຽໂກ)

18 ຜູ້ຍິງກຳລັງເຈ່ຍລູກ ພ້ອມແຕ່ງກິນຢູ່ເຕົາໄຟ(ບ້ານພັນເບ)

19 ແມ່ ລູກ ຢູ່ຂ້າງເຕົາໄຟ(ບ້ານຕ້ຽໂກ)

20 ເດັກນ້ອຍຕຳເຂົ້າ(ບ້ານພັນເບ)

21 ຜູ້ຍິງກຳລັງກະກຽມອາຫານແລງ(ບ້ານຕ້ຽໂກ)

22 ເດັກນ້ອຍກຳລັງກິນເຂົ້າສວາຍ(ບ້ານຕ້ຽໂກ)

23 ຜູ້ຍິງທີ່ກຳລັງຈະກັບບ້ານເກີດ ພາຍຫຼັງແຕ່ງດອງໄດ້ເດືອນໜຶ່ງແລ້ວ(ບ້ານຕ້ຽໂກ)

24 ຜູ້ຍິງໃນຮູບ 23 ກຳລັງເຮັດພິທີ ຢູ່ມ້ອງຕຸມ້ອຍ ກ່ອນຈະຂຶ້ນເຮືອນເກີດພາຍຫຼັງແຕ່ງດອງ(ບ້ານຕ້ຽໂກ)

25 ຫົວໜ້າບ້ານກຳລັງເອົາໄກ່ຂຶ້ນທີ່ງເສັ້ນທ້າຍ (ບ້ານຕ້ຽໂກ)

26 ພວກສາວນ້ອຍກຳລັງໄປຕັກນ້ຳ(ບ້ານຕ້ຽໂກ)

27 ເດັກນ້ອຍກຳລັງຝັດເຂົ້າ(ບ້ານຕ້ຽໂກ).

ໝາຍເຫດຫົວຂໍ້ກ່ຽວກັບສັນຍາລັກຕົວອັກສອນທີ່ໃຊ້

1) ພາສາຂອງເຜົ່າກະໂດ ແມ່ນມີຕົ້ນກຳເນີດມາຈາກພາສາ ອິດສະໂຕຣເອເຊຍ ພາສາມົ້ງຂະເໝນ ແລະ ເປັນພາສາທີ່ບໍ່ມີຕົວອັກສອນດັ່ງເດີມຂຽນ ເພາະສະນັ້ນ ບັນດາຊື່ ແລະ ຄຳສັບຕ່າງໆ ຂອງເຜົ່າກະໂດທີ່ຂຽນດ້ວຍຕົວອັກສອນຂອງພາສາລາວ ພາສາກາຕາການາຂອງຍີ່ປຸ່ນ ແລະ ພາສາອັງກິດ ຢູ່ໃນປຶ້ມເຫຼັ້ມນີ້ ຂຽນຂຶ້ນໂດຍການທຽບສຽງໃຫ້ຄ້າຍຄືກັບ ການອອກສຽງຂອງເຜົ່າກະໂດເທົ່ານັ້ນ ດັ່ງນັ້ນສຳນຽງອາດມີການຜິດພ້ຽນເລັກນ້ອຍ.

2) ລາຍລະອຽດຂອງຮູບແບບບັນດາເຮືອນ ແລະ ເຊື້ອສາຍຂອງແຕ່ລະຕະກູນ ແມ່ນສະແດງໄວ້ຢູ່ໃນ ເອກະສານແນະນຳເພີ້ມເຕີ້ມ (Appendix) ກ່ຽວກັບແຜນຜັງຂອງເຮືອນແຕ່ລະຫຼັງ ບັນດາຮູບສີ ຕິດຄັດ ແລະ ຮູບສະແດງບ່ອນຢູ່ຂອງແຕ່ລະຄອບຄົວ ຢູ່ໃນແຕ່ລະຫ້ອງຂອງເຮືອນ.

3) ການເອີ້ນເຮືອນແຕ່ລະຫຼັງ ແມ່ນບາງເທື່ອກໍ່ເອີ້ນເປັນ “ເຮືອນຂອງຕະກູນ....., ເຮືອນນ້ຳເບີ.....ຫຼື ເອີ້ນແຕ່ເບີ ... ...” ເຊິ່ງທັງໝົດນີ້ ມີຄວາມໝາຍອັນດຽວກັນ.

4) ບັນດາລາຄາທີ່ກ່າວໄວ້ໃນປຶ້ມເຫຼັ້ມນີ້ ແມ່ນອີງໃສ່ອັດຕາແລກປ່ຽນ ຈາກເງິນໂດລາສະຫະລັດເປັນເງິນກີບ ໃນທ້ອງຖິ່ນ ແລະ ເວລາລົງສຳຫຼວດໃນຕອນນັ້ນ.

ບົດທີ 1

ພູມສັນຖານທາງພາກໃຕ້ຂອງປະເທດລາວ

ທີ່ຊົນເຜົ່າກະໂດ ດຳລົງຊີວິດຢູ່

1. ແຂວງສາລະວັນ

ແຂວງສາລະວັນ ຕັ້ງຢູ່ທິດເໜືອຂອງສາມແຂວງພາກໃຕ້ຂອງລາວ ຊຶ່ງມີແຂວງຈຳປາສັກ ແຂວງອັດຕະປື ແລະ ແຂວງເຊກອງ ຢູ່ໃນເສັ້ນຂະໜານທີ່15 -17ເສັ້ນແວງ ອີງສາທີ103 -106 ພື້ນທີ່ແຂວງ ເປັນຮູບຮ່າງ ຍາວຜ່ານຕັດ ປະເທດ ຂັ້ນເອົາພາກໃຕ້ຂອງປະເທດລາວ ແຂວງສາລະວັນ ມີເນື້ອທີ່ 10.691 ກິໂລຕາແມັດ ມີລວງຍາວທັງໝົດ 90 ກິໂລແມັດ ລວງຮອບ 814 ກິໂລແມັດ (ຮູບ1-1) ແຂວງສາລະວັນ ມີຊາຍແດນຕິດກັບບັນດາແຂວງຕ່າງໆເຊັ່ນ:

- ທິດເໜືອຕິດກັບແຂວງສະຫວັນນະເຂດ ຍາວ 275 ກິໂລແມັດ.
- ທິດຕາເວັນຕົກສ່ຽງໃຕ້ຕິດກັບແຂວງຈຳປາສັກ ຍາວ 175 ກິໂລແມັດ.
- ທິດຕາເວັນອອກສ່ຽງໃຕ້ ຕິດກັບແຂວງເຊກອງ ຍາວ 200 ກິໂລແມັດ.
- ທິດຕາເວັນອອກຕິດກັບແຂວງກວາງຈີ ເມືອງເທື່ອຫງນເຫວ້ ປະເທດຫວຽດນາມ ຍາວ80 ກິໂລແມັດ.
- ແຂວງສາລະວັນຍັງມີຊາຍແດນຕິດຈອດກັບ ລາຊະອານາຈັກໄທ ໂດຍມີແມ່ນ້ຳຂອງເປັນຊາຍແດນລະ ຫວ່າງ ແຂວງສາລະວັນ ກັບ ຈັງຫວັດອຸບົນລາຊະທານີ.

ປະຈຸບັນໃນເດືອນ ມີນາ ປີ2004 ແຂວງສາລະວັນ ປະກອບດ້ວຍ 8 ຕົວເມືອງຄື:ເມືອງສາລະວັນ ເມືອງເລົ່າງາມ ເມືອງຄົງເຊໂດນ ເມືອງວາປີ ເມືອງລະຄອນເພງ ເມືອງຕຸ້ມລານ ເມືອງຕະໂອ້ຍ ແລະ ເມືອງສະໜ້ວຍ (ຮູບທີ1-2) ພາຍໃນແຂວງມີພົນລະເມືອງຈາກການສຳຫລວດຄັ້ງຫລ້າສຸດໃນປີ2000 ມີພົນລະເມືອງລວມທັງໝົດ294.885ຄົນ ຍິງ152.161ຄົນ ຊາຍ142.724 ຄົນ ມີ 47.000 ກວ່າຄົວເຮືອນ ມີ 719 ບ້ານ ຄວາມໜາແໜ້ນຂອງປະຊາກອນ ໂດຍສະເລ່ຍ ຕໍ່ພື້ນທີ່ 28 ຄົນ ຕໍ່ ກິໂລຕາແມັດມົນທົນ.


ດ້ານພູມສັນຖານ ພື້ນທີ່ຂອງແຂວງສາລະວັນ ແບ່ງອອກເປັນ 3 ເຂດຄື: ເຂດທົ່ງພຽງມີເນື້ອທີ່ປະມານ40% ຂອງ ພື້ນທີ່ທົ່ວແຂວງ. ໃນເຂດເມືອງສາລະວັນ ເມືອງວາປີ ເມືອງຄົງເຊໂດນ ເມືອງລະຄອນເພງ ແລະ ເມືອງຕຸ້ມລານ ເຂດພູພຽງ ມີເນື້ອທີ່ 20% ຂອງ ພື້ນທີ່ທົ່ວແຂວງຄື: ເມືອງເຫຼົ່າງາມ ແລະ ສ່ວນໜຶ່ງຂອງເມືອງວາປີ ກັບ ເມືອງຄົງເຊ ໂດນ ເຂດພູສູງ ມີເນື້ອທີ່ 40% ຂອງທົ່ວ ແຂວງຄື: ພື້ນທີ່ເມືອງຕະໂອ້ຍ ແລະ ເມືອງສະໜ້ວຍ.

ດັ່ງນັ້ນ ສະພາບລວມທາງດ້ານພູມີປະເທດຂອງແຂວງສາລະວັນຈຶ່ງມີເນື້ອທີ່ຮາບພຽງ ມີແມ່ນ້ຳໄຫລ່ຜ່ານຫລາຍ ສາຍ ສາມາດປູກເຂົ້າໄດ້ຢ່າງມີຄຸນນະພາບ ມີເຂດພູສູງ ທີ່ມີດິນພູເຂົາ ໄຟທີ່ອຸດົມສົມບູນ ສາມາດປູກພືດໄດ້ຫລາຍ ຢ່າງເຊັ່ນ: ກາເຟ ໝາກແໜ່ງ.

ໝາຍເຫດ: ໝາກແໜ່ງ ແມ່ນມີຕົ້ນເປັນຝຸ່ມ ເຊິ່ງໝາກນ້ອຍ ໃຊ້ເປັນຢາ ຢູ່ປະເທດລາວແມ່ນຂາຍໃນລາຄາ 20000 ຫາ 30000 ກີບ ຕໍ່ 1 ກິໂລ ແລະ ເປັນຜົນຜະລິດ ທີ່ນິຍົມປູກ ເປັນສິນຄ້າສົ່ງອອກ ຄຽງຄູ່ກັບກາເຟ ຂອງ ຄົນລາວຢູ່ພາກໃຕ້.



(ຮູບ 1-1) ແຜນທີ່ປະເທດລາວ



(ຮູບ 1-2) ແຜນທີ່ເມືອງສະໝ້ວຍ

ປະຊາກອນຢູ່ແຂວງສາລະວັນ ປະກອບດ້ວຍ ສອງຕະກຸນພາສາຄື: ຕະກຸນພາສາ ລາວ-ໄຕ ແລະ ຕະກຸນພາສາ ມອນ-ຂະແມ ມີ14 ເຜົ່າຊົນ: ເຜົ່າລາວລຸ່ມ ເຜົ່າກະຕາງ ເຜົ່າສ່ວຍ ເຜົ່າປະໂກະ ເຜົ່າລະເວນ ເຜົ່າຕະໂອ້ຍ ເຜົ່າຜູ່ໄທ ເຜົ່າອີນ ເຜົ່າກະໂດ(ເຜົ່າປະໂກ) ເຜົ່າແງະ(ກະຽງ) ເຜົ່າຕຶ້ງ ເຜົ່າກະຕູ ເຜົ່າລະໄນ(ປະໂກະ) ເຜົ່າອາລັກ(ຮັນລັກ).

ໝາຍເຫດ: ປະເທດລາວປະກອບມີ 3ຊົນເຜົ່າຫຼັກ ຄື ລາວລຸ່ມ ລາວເທິງ ແລະ ລາວສູງ ເຊິ່ງແບ່ງກັນໂດຍລະດັບຄວາມສູງຂອງບ່ອນຢູ່ອາໄສ ຊົນເຜົ່າລາວລຸ່ມ ດຳລົງຊີວິດຢູ່ເຂດທົ່ງພຽງ ເຊິ່ງເປັນເຂດທີ່ມີຄວາມສູງ 400ແມັດລົງມາ ແລະ ມີພົນລະເມືອງຫຼາຍກ່ວາໝູ່ ຊົນເຜົ່າລາວເທິງ ແມ່ນຢູ່ເຂດພູພຽງ ເຊິ່ງລະດັບສູງ 300 ຫາ 900 ແມັດ ແລະ ສຸດທ້າຍແມ່ນລາວສູງ ເຊິ່ງດຳລົງຊີວິດຢູ່ບ່ອນພູສູງມີລະດັບກາຍ800ແມັດຂຶ້ນໄປ ກ່ວາ50ເປີເຊັນຂອງພົນລະເມືອງລາວແມ່ນ ລາວລຸ່ມແລະ ພາສາລາວລຸ່ມກໍ່ແມ່ນພາສາກາງຂອງລາວ.

2. ເມືອງສະໜ້ວຍ

ເມືອງສະໜ້ວຍ ເປັນເມືອງພູດອຍຫ່າງໄກສອກຫລີກ ມີໄລຍະທາງແຕ່ແຂວງຫາເມືອງປະມານ160 ກິໂລແມັດ ລະຫວ່າງ ເມືອງສາລະວັນ ແລະ ເມືອງສະໜ້ວຍ ມີເສັ້ນທາງດິນແດງພຽງເສັ້ນດຽວ ແຕ່ຕ້ອງໄດ້ຜ່ານແມ່ນ້ຳທີ່ບໍ່ມີຂົວ ດັ່ງນັ້ນໃນລະດູຝົນແມ່ນໄປມາຫາສູ່ກັນບໍ່ຄ່ອຍສະດວກ ທິດເໜືອຕິດກັບເມືອງນອງ ແຂວງສະຫວັນນະເຂດ ທິດໃຕ້ຕິດກັບເມືອງຕະໂອ້ຍ ທິດຕາເວັນອອກຕິດກັບປະເທດສ.ສ.ຫວຽດນາມ ທິດຕາເວັນຕົກສຽງໃຕ້ຕິດກັບ ເມືອງກະລຶມ ແຂວງເຊກອງ.

ເມືອງສະໜ້ວຍມີເນື້ອທີ່ລວມ 57.000 ເຮັກຕາ ມີພົນລະເມືອງ 9.975 ຄົນ ມີ 58 ບ້ານ ມີຈຳນວນຄົວເຮືອນ 1.805 ຄົວເຮືອນ ຄວາມໜາແໜ້ນສະເລ່ຍ 18 ຄົນຕໍ່ກິໂລແມັດມົນທົນ ປະກອບມີ4ຊົນເຜົ່າຄື: ເຜົ່າລາວລຸ່ມ ເຜົ່າປະໂກະ ເຜົ່າກະໄນ ເຜົ່າກະໂດ.

ພົນລະເມືອງຂອງຊົນເຜົ່າກະໂດ(ເຜົ່າປະໂກະ) ມີ 2.553 ຄົນ ກວມເອົາ 25.6% ຂອງພົນລະເມືອງ ຂອງເມືອງສະໜ້ວຍ ແລະ ກວມເອົາ 0,9 % ຂອງພົນລະເມືອງແຂວງສາລະວັນ.

ເມືອງສະໜ້ວຍ ແມ່ນມີເນື້ອທີ່ບໍລິເວນພູດອຍ ກວມເອົາ 90% ຂອງເມືອງ ແລະ ເປັນທີ່ມີປ່າໄມ້ອຸດົມສົມບູນໃນແຂວງສາລະວັນ ເມືອງສະໜ້ວຍ ແລະ ເມືອງຕະໂອ້ຍ ແມ່ນມີອາກາດເຢັນກ່ວາບ່ອນອື່ນ ເຊິ່ງມີອຸນນະພູມຕ່ຳສຸດ 5 ຫາ 7 ອົງສາ ມີຄວາມຊຸ່ມສູງ ແລະ ໝອກປົກຄຸມ, ອາຊີບຫຼັກແມ່ນຖືເອົາອາຊີບເຮັດໄຮ່ ປູກເຂົ້າ ປູກສາລີ ເຜືອກມັນ ຕ່າງໆ ເພື່ອບໍລິໂພກພາຍໃນຄອບຄົວ.

ເມືອງສະໜ້ວຍ ຊຶ່ງຕິດກັບຊາຍແດນຕິດກັບປະເທດຫວຽດນາມ ແມ່ນມີປະເພນີວັດທະນະທຳ ພາສາປາກເວົ້າຄ້າຍຄືກັບຫວຽດນາມຫຼາຍ ມີບາງຄອບຄົວໄດ້ແຕ່ງດອງກັນກັບຄົນຫວຽດນາມ ແລະ ໄດ້ຍ້າຍໄປຢູ່ປະເທດຫວຽດນາມ ຍັງມີພີ່ນ້ອງຢູ່ທາງເບື້ອງປະເທດຫວຽດນາມບໍ່ໜ້ອຍທ້ຳຢູ່ບ້ານຕ້ຽໂກ ແລະ ບ້ານພົນເບ ທີ່ໄດ້ລົງໄປສຳຫຼວດ.

3. ບ້ານທີ່ໄດ້ສຳຫຼວດ

ກ່ອນສຳຫຼວດຂອງເຮືອນຍາວຂອງຊົນເຜົ່າທີ່ມີເຮືອນຍາວປະເພນີ ພາຍໃນໄລຍະເວລາ 2 ມື້ ພວກເຮົາໄດ້ໄປເລາະເບິ່ງຫຼາຍບ້ານ ພາຍໃນແຂວງສາລະວັນ ທີ່ເມືອງຕະໂອ້ຍ ແລະ ເມືອງສະໜ້ວຍ ເພື່ອເລືອກຫາບ້ານທີ່ຈະລົງສຳຫຼວດ ໃນວລາທີ່ລົງໄປນັ້ນໄດ້ມີການສອບຖາມ ຂະໜາດແລະປະຫ້ວດຂອງບ້ານແບບງ່າຍໆ ສ່ວນບ້ານທີ່ໄດ້ລົງໄປສຳຫຼວດມີດັ່ງລຸ່ມນີ້: ຊື່ຂອງຊົນເຜົ່າ ໄດ້ຂຽນໄວ້ໃນວົງເລັບ ຕໍ່ຈາກຊື່ຂອງບ້ານ.

- **<u>ເມືອງ ຕະໂອ້ຍ</u>**
  - * ບ້ານ ຕາຮວກໃຫຍ່ (ເຜົ່າປະໂກະ): ຂະໜາດຂອງເຮືອນນ້ອຍ ແລະມີໂຄງສ້າງບໍ່ຈະແຈ້ງ.
  - * ບ້ານ ຕິງກິງລະລາວ(ເຜົ່າກະໂດ): ເປັນເຮືອນໃຫຍ່ແຕ່ວ່າເຮືອນແບບດັ່ງເດີມແມ່ນມີໜ້ອຍແລະສ່ວນຫຼາຍນິຍົມແບບໃໝ່ໆ.

* ບ້ານໂກຍະທ້ໍ(ເຜ່າກະໂດ): ເຮືອນຍາວກາງມີຈຳນວນໜາຍ ໃນການຕັ້ງເຮືອນແມ່ນຕັ້ງຫ່າງກັນໜາຍແລະ ມີເຮືອນຖືກສ້າງຂຶ້ນໃໝ່ໜາຍ ພາຍຫຼັງເກີດໄຟໄໝ້.

- **<u>ເມືອງ ສະໜ້ວຍ</u>**
  * ບ້ານພີນເບ(ເຜ່າກະໂດ):ມີຂະໜາດນ້ອຍແຕ່ມີຂອບເຂດເດີ່ນບ້ານເປັນລັກສະນະອ້ອມຮອບເປັນຮູບສາມ ແຈ ແລະ ເປັນການຢູ່ອາໄສທີ່ມີຄວາມເປັນອັນໜຶ່ງອັນດຽວ.
  * ບ້ານປັນໄຕ(ເຜ່າກະໂດ): ມີເສົາເຮືອນເກົ່າຫຼົງເຫຼືອຢູ່ບໍລິເວນເດີ່ນບ້ານ ແລະ ຢູ່ທາງຂ້າງມີເຮືອນຍາວໜຶ່ງ ຫຼັງທີ່ມີສະພາບເຮືອນຮ້າງ ໃນບ້ານບໍ່ມີເຮືອນຫລາຍເທົ່າໃດ.
  * ບ້ານອາວາວ(ເຜ່າກະໂດ): ໃນບ້ານສ່ວນໜາຍຈະມີແຕ່ເຮືອນເກົ່າ ໂດກ ແລະ ເປເພໜາຍ ໄດ້ມີການປຸກ ເຮືອນໃໝ່ຂຶ້ນເລື້ອຍໆ ສ່ວນໃຫ່ຍແລ້ວມີພຽງແຕ່ຂະໜາດນ້ອຍບໍ່ຍາວຄືແຕ່ກ່ອນ.
  * ບ້ານ ພີນອາ (ເຜ່າກະໂດ): ຖືກໄຟໄໝ້ 2 ປີກ່ອນ ຍ້ອນເດັກນ້ອຍຫຼິ້ນໄຟ.
  * ບ້ານ ຕ້ງໍ (ເຜ່າກະໂດ): ມີຂະໜາດໃຫຍ່ກວ້າງ ປະກອບມີເຮືອນຫລາຍຮູບແບບ ໜາຍຂະໜາດປົນກັນຢູ່ ແລະ ເປັນບ້ານທີ່ມີຊີວິດຊີວາ.



(ຮູບ 1-3) ແຜນຜັງທີ່ຕັ້ງບ້ານ ຂອງເມືອງສະໜ້ວຍ

ບົດທີ 2

ການດຳລົງຊີວິດ ຂອງຊົນເຜົ່າກະໂດ

1. ອາຊີບ

ປະຊາຊົນເຜົ່າກະໂດມີອາຊີບກະສິກຳແບບຖາງປ່າເຮັດໄຮ່ ເຂົ້າທີ່ປູກປະກອບມີ ເຂົ້າໜຽວແລະເຂົ້າຈ້າວ ໂດຍມີຈຳນວນເຄິ່ງຕໍ່ເຄິ່ງ ບັນດາພືດຜັກທີ່ປູກກໍ່ມີ: ອ້ອຍ ສາລີ ມັນຝະລັ່ງ ໝາກຮຸ່ງ ມັນດ້ຳ ມັນຕົ້ນ ໝາກກ້ວຍ ໝາກແຕງ ແລະ ໝາກເຜັດເປັນຕົ້ນ, ນອກນັ້ນກໍ່ຍັງປູກໃບຢາສູບ ກາເຟ ແຕ່ເຖິງຢ່າງໃດກໍ່ຕາມ ຈຳນວນການຜະລິດກໍ່ແມ່ນເພື່ອກຸ້ມກິນພາຍໃນຄອບຄົວເທົ່ານັ້ນ ເຖິງແມ່ນວ່າໄດ້ມີການປູກກາເຟເພື່ອເພີ້ມລາຍໄດ້ ແຕ່ຕົ້ນກາເຟທີ່ປູກກໍ່ມີຂະໜາດນ້ອຍບໍ່ສາມາດໃຫ້ຜົນຜະລິດໄດ້ຫຼາຍເທົ່າທີ່ຄວນ ອາຊີບທີ່ຂາດບໍ່ໄດ້ກໍ່ແມ່ນການເຂົ້າປ່າ ເພື່ອຊອກຫາເຫັດ ໜໍ່ໄມ້ ພືດຜັກຕ່າງໆ ນອກນັ້ນກໍ່ຍັງມີ ການຫາປາ ຫາກົບ ຫາຂຽດ ຢູ່ຕາມແມ່ນ້ຳ ຢູ່ແຄມຫ້ວຍເພື່ອຊອກຫາແມງໄມ້.

ຢູ່ບໍລິເວນບ້ານກໍ່ມີການລ້ຽງງົວ ຄວາຍ ແບ້ ໝູ ໄກ່ ເພື່ອໄວ້ເປັນອາຫານ ການລ້ຽງກໍ່ບໍ່ແມ່ນເພື່ອສິ່ງຂາຍຢູ່ຕະຫຼາດແຕ່ແມ່ນລ້ຽງໄວ້ກິນໃນໂອກາດພິເສດເຊັ່ນ ຍາມບຸນ ເວລາມີພິທີກຳຕ່າງໆ ຫຼື ເວລາມີແຂກມາຢ້ຽມຢາມ ນອກຈາກນີ້ຍັງລ້ຽງໄວ້ເພື່ອການແລກປ່ຽນກັບສິ່ງຂອງຕ່າງໆທີ່ຕ້ອງການ ເຊັ່ນວ່າ: ເວລາຕ້ອງການຊື້ລົດຈັກ ກໍ່ເອົາ ງົວ ຫຼື ຄວາຍ ແລກເອົາເລີຍ.

ຈຳນວນເຂົ້າທີ່ປູກນັ້ນ ແມ່ນບໍ່ພຽງພໍກິນຕະຫຼອດປີ ໃນໄລຍະເວລາ 6 ເດືອນ ພາຍຫຼັງສັກເຂົ້າໄຮ່ຫາເວລາເກັບກ່ຽວນັ້ນ ບາງຄອບຄົວທີ່ມີຈຳນວນຄົນຫລາຍ ມີເຂົ້າບໍ່ພຽງພໍກິນກໍ່ໄດ້ກິນມັນຕົ້ນ ເຜືອກ ສາລີ ໄປນຳ ບາງເທື່ອກໍ່ເອົາມັນຕົ້ນຟັກປົນໃສ່ກັບເຂົ້າແລ້ວໜຶ້ງກິນ ແຕ່ກໍ່ເປັນອາຫານທີ່ແຊບແລະເປັນການປະຫຍັດເຂົ້າອີກດ້ວຍ ຈຳນວນເຂົ້າທີ່ປູກແມ່ນຂຶ້ນກັບຈຳນວນຄົນໃນຄອບຄົວ ຖ້າຫາກວ່າມີຫລາຍຄົນ ກໍ່ສາມາດບຸກເບີກເນື້ອທີ່ໄຮ່ ແລະ ສາມາດປູກເຂົ້າຫຼາຍຂຶ້ນ ໃນແຕ່ລະຄອບຄົວຈະມີເລົ້າເຂົ້າເປັນຂອງຕົນເອງ.

ສຳລັບບ້ານຕ້ຽໂກ ມາຮອດເດືອນມີນາ ປີ 2004 ມີຄົນທີ່ມີອາຊີບເປັນພະນັກງານລັດທັ້ງໝົດ ປະມານ44ຄົນ (ໃນນັ້ນມີຜູ້ຍິງ 5 ຄົນ) ຊຶ່ງສ່ວນໃຫ່ຍແລ້ວເຂົາເຈົ້າຈະບໍ່ໄດ້ເຮັດວຽກຢູ່ໃນບ້ານ, ອາຊີບທີ່ເຮັດມີຄື: ຄູ ທະຫານ ຕຳຫຼວດ ໝໍ ພະຍາບານ ແລະ ພະນັກງານທ້ອງການຂອງລັດ ແຕ່ວ່າພວກເຂົາເຈົ້າກໍ່ຄິດສະເໝີວ່າ ບ້ານຕ້ຽໂກແມ່ນເປັນຖິ່ນຖານບ້ານເກີດຂອງເຂົາເອງ ໃນໄລຍະປະຈຳວຽກງານເຂົາເຈົ້າກໍ່ປະບ້ານ ເຮືອນ ແລະ ທ້ອງນອນໄວ້ ແຕ່ເວລາຍາມບຸນ ຫຼື ເວລາເຈັບເປັນກໍ່ຈະກັບມາບ້ານ ນອກຈາກນັ້ນຍັງມີ 7 ຄົນ ທີ່ທັ້ງເຮັດການນຳລັດ ແລະ ຍັງໄດ້ດຳລົງຊີວິດ ຢູ່ໃນບ້ານນັ້ນເລີຍ.

2. ປະຕິທິນການຜະລິດ

ພູມີອາກາດຂອງເມືອງສະໜ້ວຍ ແມ່ນມີລັກສະນະພິເສດຄື: ເດືອນມັງກອນ ຫາ ເດືອນມີນາ ແມ່ນລະດູຮ້ອນ ແລະ ໃກ້ຈະຮອດລະດູຝົນເທົ່າໃດ ອາກາດກໍ່ຍິ່ງຮ້ອນຂຶ້ນ ເດືອນເມສາ ຫາ ເດືອນກັນຍາ ແມ່ນລະດູຝົນແລະ ເດືອນຕຸລາ ຫາ ເດືອນທັນວາ ແມ່ນມີຝົນຝອຍຕົກ ໃນຍາມເຊົ້າແມ່ນມີໝອກປົກຄຸມຕະຫຼອດປີ.

ລາຍລະອຽດຂອງ ປະຕິທິນຂອງການເຮັດໄຮ່ ແມ່ນມີ ດັ່ງນີ້:

ເດືອນ 1 - 3: ແມ່ນໄລຍະຕັດຕົ້ນໄມ້ຖາງປ່າເພື່ອເຮັດໄຮ່ ພາຍຫຼັງຕັດແລ້ວກໍ່ປະໄວ້ໃຫ້ແຫ້ງ ກ່ອນທີ່ຈະຈູດ ໄມ້ທີ່

ຕັດ ກໍ່ຈະເລືອກໄມ້ບາງສ່ວນ ນຳມາໝູນໃຊ້ເຮັດຟືນ ສ່ວນທ່ອນໄມ້ທີ່ໃຫ່ຍ ກໍ່ເກັບໄວ້ໃນກ້ອງຕາລ່າງ ເຮືອນ ຫງ່ຳໄມ້ນ້ອຍ ແລະ ໃບໄມ້ແມ່ນປະໄວ້ໃນໄຮ່.

ເດືອນ 4: ໄລຍະຈູດໄຮ່ ຮີ້ໄຮ່ ໄມ້ທີ່ຖາງແມ່ນປະໃຫ້ແຫ້ງ ແລ້ວດັ່ງໄຟຈູດບໍລິເວນທີ່ຖາງ ພາຍຫຼັງຈູດແລ້ວກໍ່ປະໄວ້ໄລຍະໜຶ່ງ ການກະກຽມຮີ້ໄຮ່ແມ່ນການເກັບກວດປັບແຕ່ງໜ້າດິນ ໄມ້ທີ່ຍັງເຫຼືອຈາກໄຟໄໝ້ ຈະຖືກຕັດຕາມລວງຍາວອັນສົມຄວນ ແລ້ວເອົາເມືອນຳໃຊ້ເປັນຟືນ.

ເດືອນ 4 - 5: ເມື່ອຝົນເລີ່ມຕົກ ກໍ່ເປັນໄລຍະຂອງການສັກເຂົ້າໄຮ່ປູກຝັງຜົນລະປູກຕ່າງໆ ເມື່ອກ່ອນເວລາອອກໄປຖາງປ່າເຮັດໄຮ່ ຕ້ອງເອົາໃບໄມ້ປັກໄວ້ຢູ່ປະຕູທາງເຂົ້າເຮືອນ ເພື່ອເປັນເຄື່ອງໝາຍບອກວ່າ ບໍ່ໄດ້ຢູ່ເຮືອນ ແລະ ໃນເວລານີ້ແມ່ນຫ້າມບໍ່ໃຫ້ຜູ້ໃດເຂົ້າມາໃນເຮືອນ.

ເດືອນ 6 - 7: ຫຼັງຈາກທີ່ສັກເຂົ້າໄຮ່ແລ້ວແມ່ນໄລຍະທີ່ຝົນຕົກຕະໜອດ ຫຍ້າກໍ່ເລີ່ມແຕກໃບແຊມກັບຕົ້ນເຂົ້າ ຊຶ່ງເປັນຊ່ວງເວລາທີ່ຫຍຸ້ງໜ້າຍຢູ່ໃນໄຮ່ປູກຝັງ ເພາະວ່າຕ້ອງໄດ້ອອກມາຫຼົກຫຍ້າ ແລະເອົາແມງໄມ້ ທີ່ມາທຳລາຍພືດຜັກນັ້ນອອກ ໃນປີໜຶ່ງຈະເຮັດປະມານ 3-4 ຄັ້ງກ່ອນຈະເກັບກ່ຽວ ໃນເດືອນ 4-7 ແມ່ນເປັນ ເວລາທີ່ຈຳນວນເຂົ້າສານ ທີ່ຜະລິດຈາກປີກ່ອນນັ້ນບໍ່ພໍກິນ ຕ້ອງໄດ້ກິນ ສາລີ ເຜືອກ ມັນ ດ້ຳ ມັນຕົ້ນ ເສີມໄປນຳກ່ອນເຖິງລະດູເກັບກ່ຽວ.

ເດືອນ 8 -11: ເປັນຊ່ວງເວລາທີ່ມີສະບຽງອາຫານໜ້ຳຍ ຍ້ອນແມ່ນລະດູເກັບກ່ຽວ ເຂົ້າທີ່ປູກແມ່ນມີ 3 ປະເພດ ດ້ວຍກັນ ແລະ ໃຊ້ເວລາເຕີບໃຫ່ຍຕ່າງກັນ ເຂົ້າງັນເປັນເຂົ້າທີ່ໃຊ້ເວລາໃນການເກັບກ່ຽວດົນທີ່ສຸດ ແລະ ໃຫ້ຜົນຜະລິດໜ້ຳຍກ່ວາໝູ່ ໃນເວລາເກັບກ່ຽວເຂົ້າທັ້ງສາມປະເພດມີຄື: ເຂົ້າດໍ (ເດືອນ7-8) ເຂົ້າກາງ (ເດືອນ 8 -9) ແລະ ເຂົ້າງັນ (ເດືອນ 10 -11).

ເດືອນ11-12: ບຸນອະຍະ (ບຸນລະດູເກັບກ່ຽວ) ປະຊາຊົນທັ້ງໝົດຂອງບ້ານແມ່ນມີໜ້າເຂົ້າຮ່ວມບຸນນີ້ ແມ່ນສະໜອງເພື່ອໃຫ້ເກັບກ່ຽວຜົນຜະລິດໄດ້ໜ້ຳຍ ໃນນີ້ຈະມີການລ້ຽງຕ້ອນຮັບແຂກ ທີ່ມາຢ້ຽມຢາມຈາກບ້ານອື່ນໆ ບາງເທື່ອກໍ່ເຊື້ອເຊີນຍາດພີ່ນ້ອງ ມາຈາກປະເທດຫວຽດນາມບໍລິເວນໃກ້ໆ ບັນດາແຂກທີ່ມາຢ້ຽມຢາມ ຫຼື ຄົນເຜົ່າອື່ນ ຈະຖືກໃຫ້ກຽດ ແລະ ມີຄວາມສຳຄັນກ່ວາຄົນພາຍໃນບ້ານຂອງຕົນເອງ ສ່ວນສັດ ທີ່ຂ້າເພື່ອລ້ຽງແຂກນັ້ນ ກໍ່ຂຶ້ນກັບຖານະຂອງແຕ່ລະຄອບຄົວ ຜູ້ມີເງິນ ກໍ່ຂ້າງົວ ຄວາຍ ຄອບຄົວບໍ່ຄ່ອຍມີ ກໍ່ຂ້າໝູ ຫຼືໄກ່ ຢູ່ໃນຊ່ວງໄລຍະເວລາເຮັດບຸນຄົນພາຍໃນບ້ານ ແມ່ນຈະອອກຈາກບ້ານຂອງຕົນເອງບໍ່ໄດ້ ຜູ້ເລືອກວັນເວລາເຮັດບຸນອະຍະແມ່ນ ອະລະມົ້ນ ຊຶ່ງເປັນຜູ້ເລືອກ ແລະ ຈະປຶກສາກັນກັບຜູ້ເຖົ້າຜູ້ແກ່ຂອງບ້ານອື່ນໆທີ່ໃກ້ຄຽງ.

3. ຄວາມເຊື່ອ

ຜີທີ່ຄົນຂອງເຜົ່າກະໂດນັບຖືຢູ່ມີ 5 ຊະນິດຄື: ຜີ "ກະເນຍຍະ" ເປັນຜີປ່າເຊິ່ງຖືໄດ້ວ່າເປັນຜີ ທີ່ຄົນຊົນເຜົ່າກະໂດ ນັບຖືສູງສຸດ ການເອີ້ນຊື່ຜີຕ່າງໆຈະມີຄຳວ່າ "ຢາງ" ນຳໜ້າ ຊຶ່ງມີຄວາມໝາຍວ່າຜີ ສ່ວນຜີອີກ 4 ຊະນິດໄດ້ ແກ່: ຢາງຊື ຢາງລຸງ ຢາງກໍ ແລະ ຢາງເດ້ ລາຍລະອຽດມີດັ່ງຕໍ່ໄປນີ້:

1) **ຜີກະເນຍຍະ:**
ແມ່ນຜີທີ່ມີຢູ່ນຳປ່າໄມ້ ແລະ ເປັນຜີປ່າ ທີ່ໄດ້ຮັບການນັບຖືສູງສຸດ ໝາຍກ່ວາບັນດາຜີຊະນິດອື່ນ ແລະ ຜີຊະນິດນີ້ແມ່ນກ່ຽວພັນໂດຍກົງກັບການປູກຝັງແລະທຸກຢ່າງທີ່ຢູ່ໃນປ່າ ຢູ່ໃນບ້ານຂອງຄົນເຜົ່າກະໂດ ເຖິງ ແມ່ນວ່າ ຈະມີການສ້າງສານເຈົ້າຢູ່ທົ່ວທຸກບ່ອນໃນປ່າ ແຕ່ວ່າສານເຈົ້າສຳລັບຜີຊະນິດອື່ນໆ ແມ່ນຈະບໍ່

ໄດ້ສ້າງ ມີພຽງແຕ່ສານຂອງຜີກະເນຍຍະເທົ່ານັ້ນທີ່ສ້າງ ສ່ວນລວງສູງຂອງສານຈາກໜ້າດິນ ຫາ ພື້ນສານ ປະມານ 1 ແມັດ ແລະ ຫ້າມບໍ່ໃຫ້ຈັບບາຍແຕະຕ້ອງ ຜີກະເນຍຍະ ໃນບ້ານຕັ້ງໂກແມ່ນຖືກ ປຸກສ້າງໄວ້ຢູ່ ໄກຈາກປ່າຊ້າ ສ່ວນປ່າຊ້າຕັ້ງຢູ່ທາງທິດເໜືອຂອງບ້ານ ສຳລັບບ້ານພິນເບ ປ່າຊ້າ ແມ່ນຕັ້ງຢູ່ທາງທິດຕາ ເວັນຕົກຂອງບ້ານ ສ່ວນສານນັ້ນແມ່ນຕັ້ງຢູ່ໄກອອກຈາກປ່າຊ້າເຊັ່ນດຽວກັນ.

2) **ຢາງຊ໋ຶ:**

ແມ່ນຜີມີຢູ່ບໍລິເວນໂລ່ງກ້ວາງເຊັ່ນ ບໍລິເວນເດີ່ນບ້ານ ແລະມີຄວາມກ່ຽວພັນກັບປູກຝັງ ການລ້ຽງສັດ ແລະ ການດຳລົງຊີວິດ ຜີຊະນິດນີ້ສິງສະຖິດຢູ່ນຳເສົາຫຼັກໄມ້ ທີ່ໃຊ້ເພື່ອເປັນຫຼັກມັດເຊືອກຂ້າ ງົວ ຫຼື ຄວາຍ ໃນ ເວລາເຮັດພິທີຕ່າງໆ ຫຼັກນັ້ນສາມາດຈັບຕ້ອງໄດ້.

3) **ຢາງລຸງ:**

ແມ່ນຜີເຮືອນ ເຊິ່ງລວມມີວິນຍານຂອງ ພໍ່ແມ່ ແລະ ບັນດາຍາດພີ່ນ້ອງທີ່ຕາຍລ່ວງລັບໄປແລ້ວ.

4) **ຢາງກ໋ຳ:**

ເປັນຜີຜູ້ຮັກສາຄຸ້ມຄອງຫວ້ຍນ໋ຳ ພູເຂົາ ຢູ່ໃກ້ໆບ້ານພິນເບ ມີພູໜຶ່ງຊື່ວ່າ "ລິລອຍ" ຊຶ່ງພູດັ່ງກ່າວ ເຊື່ອກັນ ວ່າມີ ຢາງກ໋ຳນີ້ສິງສະຖິດຢູ່.

5) **ຢາງເດີ:**

ແມ່ນຜີທີ່ມີຢູ່ໃນແມ່ນ໋ຳ ຫຼື ນ໋ຳ ກ່ອນທີ່ຈະເຂົ້າປ່າ ຫຼື ລົງແມ່ນ໋ຳ ຕ້ອງໄດ້ສວດມົນອະທິຖານຫາຜີຊະນິດນີ້ ກ່ອນ ເພື່ອໃຫ້ຄຸ້ມຄອງຮັກສາ ໃນເວລາຫາປາເພື່ອໃຫ້ໄດ້ປາຫຼາຍ ຫຼື ໃນເວລາເກັບກູ້ຜົນຜະລິດ ຖ້າຢາກ ໃຫ້ເກັບກ່ຽວໄດ້ຫຼາຍກໍ່ຕ້ອງໄດ້ອະທິຖານຫາຜີຊະນິດນີ້ ມີເລື້ອງເຫຼົ່າສູ່ກັນຟັງວ່າ ຖ້າຫາກບໍ່ຄອບຜີນີ້ກ່ອນ ກໍ່ຈະມີເລື້ອງບໍ່ດີເກີດຂຶ້ນ ໃນເວລາຈະຂ້າມນ໋ຳແມ່ນຈະເອົານ໋ຳລ້າງໜ້າ ແລະ ກໍ່ຮ້ອງ ບອກຢາງເດີ່ກ່ອນ ຈະຂ້າມນ໋ຳ ອີກຢ່າງໜຶ່ງພວກບໍ່ມີຄວາມເຊື່ອວ່າ ຜີຈະມີຢູ່ນຳສັດ ແລະ ພືດ.

4. ໝໍໄສຍະສາດ "ອາລະມົ້ນ"

"ອາລະມົ້ນ" ແມ່ນພາສາຂອງຄົນເຜົ່າກະໂດ ໝາຍເຖິງໝໍໄສຍະສາດທີ່ຮັກສາໂລກ ດ້ວຍວິທີສວດມົນ ໃນບ້ານ ຕັ້ງໂກມີ 5 ຄົນ (ຍິງແລະຊາຍ) ການທີ່ຈະເປັນ ອາລະມົ້ນ ໄດ້ນັ້ນ ບາງເທື່ອກໍ່ຖືກບອກໃນເວລາຝັນ ບາງຄັ້ງກໍ່ເຮັດ ໃຫ້ຄົນນັ້ນເຈັບເປັນ ຫຼື ບາງເທື່ອກໍ່ຖືກຜີເຂົ້າແບບກະທັນຫັນ ຜູ້ຖືກຜີເຂົ້າກໍ່ຈະເຫຼົ່າເລື້ອງອອກມາ ຊຶ່ງແມ່ນເລື່ອງທີ່ ຄົນຖືກຜີເຂົ້ານັ້ນບໍ່ເຄີຍຮູ້ເລື້ອງມາກ່ອນ ຄົນໃນບ້ານເຫັນເປັນແນວນັ້ນກໍ່ເຊື່ອຖື ໃນການ ເປັນອາລະມົ້ນ ນີ້ບໍ່ກ່ຽວກັບ ອາຍຸ ຫຼື ເພດ ເຖິງແມ່ນວ່າໝໍຜີຈະໄດ້ສວດມົນໃນເວລາງານພິທີ ແລະ ເວລາຮັກສາ ຄົນເຈັບ ແຕ່ເຂົາເຈົ້າກໍ່ບໍ່ໄດ້ໃຊ້ ເວດມົນຫຍັງຫຼາຍ ຊຶ່ງບໍ່ຄືກັບໝໍຜີທົ່ວໄປທີ່ພວກເຮົາເຄີຍ ົບເຫັນ.

ອາລະມົ້ນ ມີວິທີເບິ່ງອາການຂອງຄົນໄຂ້ດັ່ງນີ້: ທຳອິດທາງຄອບຄົວຄົນເຈັບຈະແຈ້ງຫົວໜ້າເຮືອນວ່າ "ຢາກໃຫ້ ອາລະມົ້ນມາເບິ່ງອາການຄົນເຈັບໃຫ້ແດ່" ກ່ອນຈະເຮັດພິທີຈະຕ້ອງໄດ້ບອກກ່າວຕໍ່ຫົ້ງປະຈຳບ້ານເສຍກ່ອນ ຊຶ່ງຫົວ ໜ້າເຮືອນຈະເປັນຜູ້ບອກກ່າວ ຫຼັງຈາກນັ້ນໝໍຜີຈະກຳເອົາເຂົ້າສານໃສ່ລົງໄປໃນຖ້ວຍນ້ອຍ ແລ້ວເອົາມີດແຫຼມສຽບ ລົງໃສ່ກາງຖ້ວຍ ຜູ້ທຳພິທີນັ້ນຈະເປັນຜູ້ຖາມຜີ ເຖິງສາເຫດທີ່ໄດ້ມາເຮັດໃຫ້ຜູ້ນີ້ເຈັບໄຂ້ ໃນຂະນະທີ່ຕັ້ງມີດແຕ່ລະຄັ້ງ ອາລະມົ້ນຈະຖາມວ່າຜູ້ໃດໃນເຮືອນນີ້ເປັນຄົນເຮັດຜິດ ຫາກວ່າບໍ່ໄດ້ເຮັດຜິດມີດຈະໂຫ້ຍລົງ ແລະ ສະແດງວ່າເປັນ ຍ້ອນພະຍາດອື່ນບໍ່ແມ່ນຍ້ອນຜີ ໃນກໍລະນີນີ້ແມ່ນໃຫ້ຜູ້ປ່ວຍໄປໂຮງໝໍ ແຕ່ຖ້າຫາກວ່າມີດບໍ່ໂຫ້ຍລົງສະແດງວ່າ ເປັນຍ້ອນຜີເຮັດໃຫ້ເຈັບປ່ວຍ ໃນກໍລະນີນີ້ຮ້ອງວ່າ "ຕູຕົກ" ຫຼືວ່າ "ແກ້ຮິດ" ຄົນເຈັບຈະຕ້ອງໄດ້ແກ້ຮິດດ້ວຍການ ສ່ຽງທວາຍອີກຄັ້ງໜຶ່ງ ໃນຄັ້ງນີ້ ອາລະມົ້ນ ຈະເປັນຜູ້ຖາມຜີກ່ຽວກັບສາເຫດ ໂດຍຖາມຜີວ່າຈະໃຫ້ແກ້ຄວາມຜິດ ຫຼື

ວ່າແກ້ຮີດແນວໃດ ຫຼືດ້ວຍຫຍັງ ໂດຍເລີ້ມຈາກຄຳວ່າ "ດ້ວຍໄກ່ກໍ່ໃຫ້ຕັ້ງ ດ້ວຍໝູ ແບ້ ງົວ ຄວາຍ ຖາມຕໍ່ໆໄປຈົນ ກ່ວາມິດຈະຕັ້ງ" ຖ້າຫາກມິດຕັ້ງຢູ່ຄຳຖາມໃດ ກໍ່ໃຫ້ແກ້ຮີດຕາມດ້ວຍສັດປະເພດນັ້ນ ແລ້ວຈຶ່ງຈະຫາຍຈາກອາການ ປ່ວຍ ການສ່ຽງທວາຍຈະເຮັດຢູ່ບ່ອນໃດກໍ່ໄດ້ບໍ່ກ່ຽວກັບຫ້ຽງຂອງບ້ານ ພາຍຫຼັງທີ່ຮູ້ວ່າຈະຕ້ອງແກ້ ຮີດດ້ວຍຫຍັງ ອາລະມຶ້ນ ຈະສັ່ງໃຫ້ຂ້າສັດນັ້ນ ແລ້ວເອົາເຄື່ອງໃນອອກກ່ອນຈຶ່ງຕົ້ມໝົດທັ້ງໂຕ ສ່ວນຫົວ ແລະ ຂາຈະຕັດອອກ ແລ້ວເອົາໃຫ້ຜີ, ຜູ້ເອົາໃຫ້ແມ່ນຫົວໜ້າເຮືອນ ສ່ວນເຄື່ອງໃນແມ່ນເອົາມາແຕ່ງເປັນອາຫານ ຫຼັງຈາກເອົາຂອງເສັນ ຫວ້າຍຂຶ້ນຫ້ຽງໄດ້ 1 ຊົ່ວໂມງແລ້ວ ກໍ່ສາມາດເອົາມາກິນໄດ້ ໃນການເຮັດພິທີດັ່ງກ່າວ ຖ້າຫາກວ່າ 3 ຫາ 4 ມື້ຜ່ານ ໄປແລ້ວ ຖ້າອາການປ່ວຍຍັງບໍ່ທັນດີຂຶ້ນ ກໍ່ຈະປະຕິບັດຊ້ຳຄືເກົ່າຕາມຂັ້ນຕອນທີ່ໄດ້ກ່າວມານັ້ນ, ຄົນເຈັບຈະຕ້ອງ ໄດ້ຢູ່ຫ້ອງຂອງຕົນເອງ ອາລະມຶ້ນຕ້ອງໄດ້ເຂົ້າໄປເຮັດພິທີຢູ່ໃນຫ້ອງນັ້ນ ສ່ວນຄົນອື່ນໆທີ່ບໍ່ແມ່ນຕະກຸນດຽວກັນແມ່ນ ບໍ່ສາມາດມາຮ່ວມພິທີໄດ້.

ຢູ່ບ້ານພົນເບ ມີອາລະມຶ້ນ 3 ຄົນ ທັ້ງສາມແມ່ນຜູ້ຊາຍ ຊຶ່ງເປັນຜູ້ເຖົ້າມີອາຍຸປະມານ 60 ຫາ 70 ປີ ຖ້າຫາກບໍ່ ມີ ອາລະມຶ້ນ ເຂົ້າຮ່ວມແລ້ວກໍ່ບໍ່ສາມາດເຮັດຮີດຂອງບ້ານໄດ້ ເພາະສະນັ້ນຕ້ອງໄດ້ນັດມື້ ຫຼື ປຶກສາກັບຜູ້ເຖົ້າຂອງ ບ້ານເສຍກ່ອນຈຶ່ງເຮັດໄດ້ ປະຈຸບັນນີ້ ເມື່ອມີຄົນເຈັບປ່ວຍ ສ່ວນຫຼາຍກໍ່ພາກັນເອົາໄປປົວ ຢູ່ໂຮງໝໍໃນຕົວເມືອງ.

5. ສັດລ້ຽງ ແລະ ສັດສຳລັບໃຊ້ໃນພິທີກຳ.

ສຳລັບຄົນເຜົ່າກະໂດແລ້ວ ສັດລ້ຽງຖືວ່າເປັນຊັບສົມບັດຢ່າງໜຶ່ງຂອງຄອບຄົວ, ທັ້ງເປັນສະບຽງອາຫານ ແລະ ເປັນແຫຼ່ງໃຫ້ຄຸນປະໂຫຍດທາງດ້ານໂປຕອີນໄດ້ອີກ ຄົນເຜົ່າກະໂດບໍ່ໄດ້ລ້ຽງສັດໄວ້ເພື່ອເປັນສິນຄ້າ ໂດຍພື້ນຖານ ແລ້ວແມ່ນລ້ຽງເພື່ອບໍລິໂພກພາຍໃນຄອບຄົວ ກໍລະນີ ງົວ ຄວາຍ ແມ່ນຈະລ້ຽງໄວ້ໃຊ້ເຂົ້າໃນ ເວລາມີພິທີການຕ່າງໆ ເຊັ່ນວ່າ: ເປັນຄ່າສິນສອດແຕ່ງດອງ ຫຼື ບາງເທື່ອກໍ່ໃຊ້ແທນເງິນສົດ ເພື່ອແລກຊື້ເອົາລົດຈັກ ແລະ ສິນຄ້າທີ່ມີລາຄາ ແພງອື່ນໆກໍ່ໄດ້ເຊັ່ນດຽວກັນ ໃນເວລາມື້ເດືອນເຕັມດວງ ໃນມື້ນັ້ນເຂົາເອີ້ນວ່າ 15 ຄ່ຳ ຊຶ່ງເປັນມື້ທີ່ສຳຄັນແມ່ນມື້ ພັກຜ່ອນ ຄົນໃນບ້ານຈະຢຸດເຮັດວຽກເຖິງແມ່ນວ່າຈະເປັນເວລາທີ່ກຳລັງປຸກເຮືອນຢູ່ກໍ່ຕາມຕ້ອງໄດ້ຢຸດ ແຕ່ຖ້າຫາກ ວ່າຖືກກໍລະນີ ທີ່ຫຼັງຄາເຮືອນຫາກຮົ່ວຢູ່ ກໍ່ສາມາດສ້ອມແຊມໄດ້ ນອກນັ້ນກໍ່ຍັງບໍ່ສາມາດໄປເຮັດໄຮ່ໄດ້ ແຕ່ໃນທາງ ກົງກັນຂ້າມ ຖ້າຫາກວ່າ ມີການຈັດພິທີກຳຕ່າງໆ ດ້ວຍການຂ້າງົວ ຄວາຍ ໝູ ຫຼື ໄກ່ ໃນມື້ແບບນີ້ກໍ່ເປັນການດີ ຫຼາຍ ສຳລັບມື້ດວງຈັນເຄິ່ງດວງ ແມ່ນພວກເຂົາເຈົ້າຈະບໍ່ຖືວ່າເປັນມື້ດີ.

ຫຼັກການ ໃນການເອົາ ສັດລ້ຽງມາຂ້າເພື່ອໃຫ້ຜີ (ເຮັດພິທີ) ແມ່ນມີດັ່ງຕໍ່ໄປນີ້:

1. ສຳລັບການຂ້າສັດໃຫ່ຍເຊັ່ນ: ຄວາຍ ງົວ ຫຼື ແບ້ ຈະຕ້ອງໄດ້ຕອກຫຼັກໄວ້ເພື່ອມັດ ໃຫ້ຢູ່ກັບທີ່ເພື່ອປ້ອງກັນ ອັນຕະລາຍຈາກການດີ້ນຂອງສັດທີ່ຖືກຂ້າ, ສ່ວນໝູ ໄກ່ ແມ່ນບໍ່ມີການມັດໃສ່ ກັບຫຼັກ.

2. ໃນເວລານຳສັດມາປະກອບພິທີເຊັ່ນ: ການແກ້ຮີດ ຫຼື ງານພິທີກຳຕ່າງໆ, ເມື່ອມີການຂ້າຄວາຍ ຫຼື ງົວ ກໍ່ຕ້ອງໄດ້ຂ້າໝູນຳທຸກໆຄັ້ງ ຖ້າຫາກວ່າມີການແກ້ຮີດດ້ວຍໝູ ກໍ່ຕ້ອງໄດ້ຂ້າໄກ່ໄປນຳ ລວມຄວາມແລ້ວ ແມ່ນເມື່ອຂ້າສັດໃຫ່ຍກໍ່ຕ້ອງຂ້າສັດນ້ອຍກວ່ານັ້ນໄປນຳ ສະເໝີ.

3. ສັດທີ່ສາມາດນຳມາເຮັດພິທີໄດ້ແມ່ນ: ໄກ່ ໝູ ແບ້ ຄວາຍ ແຕ່ວ່າ ໝາ ແມວ ເປັດ ແລະ ບັນດານົກ ແມ່ນບໍ່ສາມາດນຳມາເປັນຂອງເສັນຫວ້າຍໃນພິທີໄດ້.

ເຜົ່າກະໂດ ແມ່ນມີອາຊີບໃນການຖາງປ່າເຮັດໄຮ່ ດັ່ງນັ້ນຈຶ່ງຕ້ອງໄດ້ມີການຍົກຍ້າຍບ້ານເພື່ອຊອກຫາເນື້ອທີ່ທຳ ມາຫາກິນໄປເລື້ອຍໆ ປະຫວັດການຍົກຍ້າຍຂອງສອງບ້ານນີ້ ເຖິງວ່າຈະມີການປະຕິບັດສືບທອດກັນມາຈາກຫຼາຍ ຊົ່ວຄົນແລ້ວ ແຕ່ກໍ່ບໍ່ມີລາຍລະອຽດຂອງໄລຍະເວລາທີ່ແນ່ນອນ ຖືກບັນທຶກໄວ້.

ບົດທີ 3

ປະຫວັດການຍົກຍ້າຍ ຂອງບ້ານຕ້ງໂກ ແລະ ພີນເບ

1. ປະຫວັດການຍົກຍ້າຍ ຂອງບ້ານຕ້ງໂກ

ໂດຍດັ່ງເດີມແລ້ວ ຄົນຊົນເຜົ່າກະໂດແມ່ນເຄີຍອາໄສຢູ່ບ້ານຕາມກຸ໋ງ ແຂວງກວາງຈິ ປະເທດຫວຽດນາມ ພາຍ ຫຼັງທີ່ໄດ້ຍົກຍ້າຍມາ ຈຶ່ງມາຕັ້ງບ້ານເຮືອນຢູ່ ແລ້ວໃສ່ຊື່ມາເປັນບ້ານພີນເບຢູ່ແຄມນ້ຳອາວ ຕໍ່ຈາກນັ້ນໄດ້ມີກຸ່ມຄົນ ຈຳນວນໜຶ່ງ ແຍກຕົວອອກມາຈາກບ້ານພີນເບ ແລ້ວມາຕັ້ງຢູ່ບ້ານອາຈີ່ງຕະລີ ແຕ່ວ່າມີເລື້ອງທີ່ບໍ່ດີເກີດຂຶ້ນ ຊຶ່ງເອີ້ນ ວ່າ "ສູນຮິດ" ຊຶ່ງມັກເຮັດໃຫ້ມີຄົນເຈັບເປັນເລື້ອຍໆ ສະນັ້ນຈຶ່ງຍົກຍ້າຍອອກຈາກເຂດດັ່ງກ່າວ ມາຕັ້ງຢູ່ເຂດບ້ານຕຸ໋ງ ກັນໂມ້ຍ ແຕ່ວ່າບ່ອນທີ່ມາຢູ່ນີ້ກໍ່ມີສິ່ງບໍ່ດີເຊັ່ນດຽວກັນ ຄືເກີດມີການເຈັບໄຂ້ ແລະ ຢູ່ບໍ່ເປັນສຸກ ນອກຈາກນັ້ນເຂດ ດັ່ງກ່າວ ຍັງເປັນເຂດທີ່ມີປ່າດົງຕຶບໜາ ແລະ ມີເສືອໝາຍບາງຄັ້ງມັນກໍ່ອອກມາກິນຄົນໃນບ້ານ ໃນເວລາອອກໄປ ເຮັດໄຮ່ ເຊິ່ງແມ່ນເລື່ອງໂຊກບໍ່ດີ ຂອງປະຊາຊົນໃນບ້ານດັ່ງກ່າວ.

ຫຼັງຈາກນັ້ນ ເຂົາເຈົ້າຈຶ່ງໄດ້ຍົກຍ້າຍບ້ານອີກຄັ້ງໜຶ່ງ ຊຶ່ງໄດ້ຍ້າຍມາຕັ້ງຢູ່ຂອບເຂດບໍລິເວນທີ່ຕັ້ງບ້ານຕ້ງໂກ ໃນປະຈຸບັນ ໃນປະມານ30 ປີກ່ອນໜ້ານີ້ ປະມານ ປີ 1972-73 ຜູ້ທີ່ມາຕັ້ງບ້ານຢູ່ບ້ານຕ້ງໂກ ທຳອິດແມ່ນພໍ່ເຖົ້າ ອິ່ມ ມາລິໂກ ອາຍຸ76ປີ ແລະ ພໍ່ເຖົ້າ ບຸນໂອຍ ອາຍຸ 60 ປີ (ແຕ່ກ່ອນເປັນເຈົ້າເມືອງສະໜ້ອຍ ແຕ່ໃນປະຈຸບັນໄດ້ກະ ສຽນແລ້ວ) ພໍ່ເຖົ້າ ອິ່ມມາລິໂກ ຖືກບັນທຶກວ່າແມ່ນເດັກນ້ອຍໃນບ້ານຕຸ໋ງກັນໂມ້ຍ ແລະ ລາວຍັງຈື່ສະພາບຂອງບ້ານ ຕຸ໋ງກັນໂມ້ຍໄດ້ດີ ແຕ່ບໍ່ມີໃຜຈື່ສະພາບຂອງບ້ານອາຈີ່ງຕະລີ ຊື່ຂອງບ້ານຕ້ງໂກແມ່ນຕັ້ງຕາມ ນາມສະກຸນ ພໍ່ເຖົ້າ ອິ່ມ ມາລິໂກ ແຕ່ເດີມຊື່ຂອງໝູ່ບ້ານນີ້ແມ່ນຊື່ "ມາລິໂກ" ແຕ່ຕໍ່ມາໄລຍະໜຶ່ງຈຶ່ງໄດ້ປ່ຽນມາເປັນ "ບ້ານຕ້ງໂກ" ຊຶ່ງຄຳວ່າ "ມາລິ" ແປວ່າຕັ້ງ ຫຼື ສ້າງ ພາຍຫຼັງທີ່ຕັ້ງເປັນບ້ານຕ້ງໂກ ຂຶ້ນທຳອິດນັ້ນ ກໍ່ມີຄົນມາຢູ່ອາໄສຢູ່ຈຳນວນບໍ່ໜ້ອຍ.

ໝາຍເຫດ: ຖ້າຫາກໄດ້ໄປຢ້ຽມເຮືອນ ຂອງຫົວໜ້າຄອບຄົວຂອງຕະກຸນປະເລະແລ້ວ ຈະໄດ້ຟັງເລື່ອງລາວຕ່າງໆ ກ່ຽວກັບ ຄວາມເປັນມາຂອງບ້ານ "ແຕ່ກ່ອນບ້ານແມ່ນເກີດມາຈາກຄອບຄົວດຽວ ເຊິ່ງມີການລວມຈຳນວນຄົນ ໃນຄອບ ຄົວ ປະເລະຂຶ້ນມາ" ແຕ່ປະຈຸບັນນີ້ ຕະກຸນປະເລະ ບໍ່ໄດ້ມີແຕ່ຢູ່ລາວບ່ອນດຽວ ຍັງມີຢູ່ຫວຽດນາມນຳອີກ.

ພົນລະເມືອງລວມທັງໝົດຂອງບ້ານຕ້ງໂກ ມີ 470 ຄົນ ໃນນັ້ນມີຜູ້ຊາຍ170 ຄົນ ແລະ ຜູ້ຍິງ 300 ຄົນ ເຖິງແມ່ນ ວ່າຈະມີການບັນທຶກໄວ້ ໃນຄະນະບ້ານຈຳນວນຄອບຄົວມີທັງໝົດ 73 ຄອບຄົວ ແຕ່ມີຍັງ 20 ຄອບຄົວ ທີ່ເປັນສຳ ຮອງ "ຄອບຄົວສຳຮອງ ໝາຍເຖິງຄອບຄົວທີ່ແຕ່ງດອງແລ້ວ ແຕ່ຍັງບໍ່ທັນແຍກອອກຈາກພໍ່ແມ່ ແລະ ຍັງບໍ່ສາມາດ ແຍກເຮືອນອອກໄດ້ເທື່ອ ມີແຕ່ຕໍ່ເຮືອນອອກຢູ່ນຳພໍ່ແມ່ ແຕ່ເຂົ້າເຈົ້າກໍ່ມີຫ້ອງສະເພາະຂອງຕົນເອງ" ພວກເຂົາຈຶ່ງຍັງ ບໍ່ທັນໄດ້ຖືກບັນທຶກເຂົ້າສຳມະໂນຄອບຄົວພາຍໃນບ້ານ ຈຳນວນຫຼັງຄາເຮືອນປະກອບມີ 37 ຫຼັງ ມີຜູ້ເຖົ້າທີ່ມີອາຍຸ ກາຍ 90 ປີ ມີຜູ້ຊາຍໜຶ່ງຄົນ ແລະ ຜູ້ຍິງໜຶ່ງຄົນ ເປັນຜູ້ທີ່ມີອາຍຸສູງສຸດ ກວ່າອາຍຸຂອງບ້ານ ຫຼັງຈາກເວລາປະມານ 1 ປີ ຂັ້ນເທິງກໍ່ໄດ້ມີແຜນການຈະເຮັດຖະໜົນເຊື່ອມຕໍ່ລະຫວ່າງ ເມືອງສະໜ້ອຍຫາ ປະເທດຫວຽດນາມແລະຈະໃຫ້ ບັນດາບ້ານຕ່າງໆ ຍ້າຍມາຢູ່ລຽບຕາມເສັ້ນທາງດັ່ງກ່າວ ຂັ້ນເທິງຈະໃຫ້ຫົວໜ້າບ້ານ ຫຼື ຄະນະບ້ານ ມາບຸກເບີກໃນ ການຕັ້ງບ້ານໃໝ່ກ່ອນ ຈາກນັ້ນຈຶ່ງໃຫ້ບັນດາຄອບຄົວອື່ນໆ ມາສ້າງຕັ້ງເຮືອນຢູ່ຕາມແຄມທາງນັ້ນ ທັງນີ້ກໍ່ເພື່ອອຳ ນວຍຄວາມສະດວກໃນ ການໄປມາຫາສູ່ກັນ ລວມທັງເພື່ອການພັດທະນາຂົງເຂດດັ່ງກ່າວ.

ໝາຍເຫດ: ຄຳວ່າ "ຄອບຄົວ" ທີ່ກ່າວເຖິງນັ້ນ ແມ່ນໝາຍເຖິງຄອບຄົວທີ່ຂຶ້ນທະບຽນ ກັບຫ້ອງການບ້ານ (ໂຄງຮ່າງພື້ນຖານ ຈະມີພໍ່ແມ່ແລະລູກ) ຈາກຜົນຂອງການສຳຫຼວດ ໂດຍທົ່ວໄປແລ້ວຈະແບ່ງຕາມຫົວໜ່ວຍທີ່ມີໃຊ້ເຕົາໄຟ ດັ່ງນັ້ນ ຈະບໍ່ເບິ່ງຕາມສາຍພົວພັນ ຂອງກຸ່ມຄອບຄົວທີ່ຢູ່ເຮືອນດຽວກັນ ຫຼື ຄົນລະເຮືອນ.

2. ປະຫວັດການຍົກຍ້າຍ ຂອງບ້ານ ພັນເບ

ຊື່ຂອງບ້ານພັນເບ ແມ່ນມາຈາກເມືອງພັນ ແຂວງສະຫວັນນະເຂດ ປະຫວັດການຍົກຍ້າຍຂອງເຂົາເຈົ້າແມ່ນ ມີດັ່ງນີ້: ແຕ່ກ່ອນແມ່ນມາຈາກບ້ານ ພັນເຊ ເຊິ່ງຄຳວ່າ "ເຊ" ແມ່ນສຽງອ່ານຂອງໂຕໜັງສືຝະລັ່ງ ບ້ານນີ້ຢູ່ມາປະມານ 30 ປີ ຈາກນັ້ນກໍ່ຍົກຍ້າຍໄປຢູ່ບ້ານທີ່ງອາວາວໄດ້ຢູ່ປະມານ 30 ປີ ຕໍ່ຈາກນັ້ນ ຈຶ່ງຍ້າຍອອກຈາກບ້ານທີ່ງອາວາວ ໃນປະຈຸບັນແມ່ນຍ້າຍມາຢູ່ບ້ານພັນເບ ເຊິ່ງຜ່ານມາໄດ້ 30 ປີ ແຕ່ຍັງນຳໃຊ້ຫ້ວຍນ້ຳອາວາວ ທີ່ໄຫຼມາແຕ່ເທິງ ພູອາວາວດັ່ງເດີມ ຊຶ່ງໃນປະຈຸບັນແມ່ນເປັນທີ່ຕັ້ງຂອງບ້ານອາວາວ ໃນເວລານັ້ນການຍົກຍ້າຍໄປແບບພ້ອມພຽງກັນ ມາເລື້ອຍໆ ເວລາທີ່ໄດ້ຍ້າຍມາຢູ່ບ້ານນີ້ ໄດ້ເຮັດບຸນຫາບັນພະບູລຸດຂຶ້ນຊຶ່ງເພີ້ນເອີ້ນວ່າ: ງານບຸນ "ບຸນຈະລະປົບ" ການຍ້າຍຂອງເຂົາເຈົ້າບໍ່ແມ່ນຍ້າຍພຽງເທື່ອດຽວ ແຕ່ຍ້າຍມາເທື່ອລະໜ້ອຍ ຄອບຄົວປຣິນໄດ້ເວົ້າວ່າ: ຄົນບ້ານພັນເບນີ້ ແມ່ນເລີ່ມຍ້າຍມາໄດ້10ປີກ່ອນແລ້ວ, ສ່ວນເຮືອນຍາວຂອງຄອບຄົວປຣິນ ແມ່ນສ້າງຂຶ້ນມາຕັ້ງແຕ່ 30 ປີກ່ອນນີ້ ເຊິ່ງເປັນເຮືອນທີ່ເກົ່າແກ່ທີ່ສຸດໃນບ້ານພັນເບ ແລະ ຖືກແຜ່ຂະຫຍາຍໃນຕໍ່ມາ.

ໃນປະຈຸບັນ ບ້ານພັນເບມີພົນລະເມືອງທັງໝົດ155 ຄົນ ຜູ້ຊາຍ73 ຄົນ ແລະ ຜູ້ຍິງ 82 ຄົນ ຈຳນວນຄົວເຮືອນມີ 40 ຄົວເຮືອນ ຊຶ່ງມີ 7 ຄອບຄົວ ບໍ່ໄດ້ຈົດທະບຽນສົມລົດ ມີເຮືອນທັງໝົດ 17 ຫຼັງ ຈຳນວນເຮືອນແບ່ງຕາມຊື່ຂອງຕະກຸນ ມີ: ຕະກູນປຣິນ 6 ຫຼັງ ຕະກຸນຕູເວນ 5 ຫຼັງ ຕະກຸນວຽນ 4 ຫຼັງ ແລະອີກ 1 ຫຼັງ ແມ່ນຕະກຸນດ່າງ ແລະ ຕະລໍ, ບ້ານພັນເບນີ້ ຖືກອ້ອມດ້ວຍພັນດາເຮືອນ ເຊິ່ງຈະປຸກໃຫ້ຫຼັງຄາຕໍ່ໃສ່ກັນ ໂດຍມີຂອບເຂດເດີ່ນບ້ານເປັນຮູບສາມແຈ ເຮືອນແມ່ນເຮັດດ້ວຍໄມ້ ແລະ ຢູ່ລຸ່ມທີ່ຕັ້ງຂອງບ້ານກໍ່ແມ່ນແມ່ນ້ຳອາວາວ (ຢູ່ເຂດຕົ້ນຂອງແມ່ນ້ຳອາວາວ ຈະເປັນ ເຂດທີ່ຕັ້ງຂອງບ້ານອາວາວ) ໃນເຂດນີ້ຮ້ອງວ່າຂອບເຂດອາວາວ ຢູ່ບໍລິເວນນີ້ແມ່ນມີການພົວພັນແຕ່ງດອງກັບບ້ານຕ້ງໂກນຳອີກ ນອກນີ້ຢູ່ທາງ ທິດຕາເວັນຕົກສຽງເໜືອຫ່າງຈາກ ພູລີລອຍ ກໍ່ມີຄືກັນ.

ອາຊີບຂອງຄົນໃນບ້ານພັນເບນີ້ ກໍ່ບໍ່ແຕກຕ່າງກັບຂອງຄົນບ້ານຕ້ງໂກເທົ່າໃດ ແຕ່ວ່າການປູກກາເຟ ແລະ ພືກໄຫ ແມ່ນປູກເພື່ອຫວັງທີ່ຈະນຳໄປເປັນສິນຄ້າສົ່ງອອກ.

ໝາຍເຫດ: ສັງຄົມພາຍນອກຂອງທັງສອງບ້ານນີ້ ແມ່ນມີຄວາມແຕກຕ່າງກັນເມື່ອປຽບທຽບກັນແລ້ວ ຄົນບ້ານຕ້ງໂກເຊິ່ງເຂົ້າມາຕັ້ງຖິ່ນຖານຢູ່ໃນເຂດນີ້ມີນິໃສງ່າຍໆ ຈາກອາລົມມັກຮ້າຍເປັນອາລົມດີ ເຊິ່ງຕ່າງກັບ ຄົນຂອງບ້ານພັນເບ ຊຶ່ງມີຊີວິດແບບລຽບງ່າຍ ສະພາບແວດລ້ອມຂອງບ່ອນຢູ່ອາໄສ ບ້ານກໍ່ມີລັກສະນະລຽບງ່າຍດີ ແຕ່ວ່າອີກດ້ານໜຶ່ງແມ່ນບໍ່ຄ່ອຍເປັນຄົນເປີດເຜີຍ, ຢູ່ບ້ານຕ້ງໂກ ມີຄົນຈຳນວນໜຶ່ງສາມາດເວົ້າ ແລະ ຂຽນພາສາລາວໄດ້ຢູ່ ແຕ່ບ້ານພັນເບແມ່ນບໍ່ມີຄົນທີ່ຮູ້ພາສາລາວ ມີພຽງຜູ້ດຽວຄົນຊື່ວ່າ ທ້າວ ບຸນເມີ ເຊິ່ງເປັນຄົນຈາກບ້ານຕ້ງໂກ ແລະ ເຮັດວຽກຢູ່ກັບວັດທະນະທຳເມືອງສະໜ້ວຍ ລາວເປັນຜູ້ແປພາສາໃຫ້ ແລະໄວ້ວາງໃຈໄດ້ໃນເວລາລົງສຳຫຼວດ, ສຳຫລັບຜູ້ເຖົ້າແມ່ນບໍ່ໄດ້ໃຫ້ຂໍ້ມູນຈຳແນກຊື່ ແລະ ອາຍຸຂອງລູກໃນຄອບຄົວ ດັ່ງນັ້ນໃນມື້ຕໍ່ມາຈຶ່ງໄດ້ຂໍຮ້ອງໃຫ້ປະກອບຂໍ້ມູນລະອຽດ ເພີ້ມເຕີມອີກ.

ເຮືອນຫຼັກຂອງຕະກຸນວຽນ (ຮູບແນະນຳ*41*^{E} ແລະ *50*^{F}) ເຮືອນຂອງບ້ານພັນເບ ແມ່ນມີອາຍຸຫຼາຍກ່ວ30 ປີແລ້ວ ເຖິງແມ່ນວ່າຖືກຄວັນໄຟເຄືອບເຫຼື້ອມຢູ່ ແຕ່ກໍ່ຍັງມີສະພາບແຂງແຮງ ຍ້ອນເຮັດດ້ວຍໄມ້ດູ່ ວັດສະດຸຂອງເຮືອນບໍ່ໄດ້ໃຊ້ເນື້ອແຂງເປັນຫຼັກ ແຕ່ມີການປະຍຸກໃຊ້ທັງໄມ້ເນື້ອແຂງ ແລະ ໄມ້ໄຜ່ ແຕ່ໃນປະຈຸບັນແມ່ນນຳໃຊ້ໄມ້ໄຜ່ເປັນສ່ວນໃຫ່ຍ, ໄມ້ທີ່ນຳມາປຸກສ່ວນໜຶ່ງ ໄດ້ນຳມາຈາກທົ່ງພຽງອາວາວ ບ່ອນທີ່ເຄີຍຢູ່ອາໄສຢູ່ມາກ່ອນ ແລະ ສ່ວນໜຶ່ງກໍ່ຕັດມາຈາກບໍລິເວນພູລີລອຍ ບ້ານທີ່ງາມແບບນີ້ແມ່ນຖືກສ້າງຂຶ້ນເພື່ອຈຸດປະສົງນຳໃຊ້ໄລຍະຍາວ ຊຶ່ງບໍ່ປະກົດເຫັນຢູ່ໃນ ບ້ານຕ້ງໂກ.

ບົດທີ 4

ພິທີການທາງສາດສະໜາ ງານບຸນປະເພນີ
ແລະ ວິທີການດຳລົງຊີວິດ

ໃນບົດນີ້ຈະໄດ້ກ່າວເຖິງ ກິດຈະກຳໃນວັນພິເສດເຊັ່ນ: ມື້ ຂໍ້ຫ້າມຕ່າງໆ ເວລາຖືພາ ການເກີດລູກ ພິທີການ ຂອງວັນແຕ່ງດອງ ການຕາຍ ແລະ ງານບຸນບັນພະບູລຸດ (ຈະລະປຶບ).

1. ຂໍ້ຫ້າມຕ່າງໆ ເວລາຖືພາ ແລະ ເກີດລູກ

1. ໃນເວລາເມຍຖືພາ, ຜົວແລະເມຍແມ່ນຫ້າມບໍ່ໃຫ້ເຂົ້າໃກ້ຫີ້ງ (ຊຶ່ງຖືວ່າເປັນເຂດທີ່ສັກສິດຂອງຕະກຸນ).
2. ເວລາມີພິທີກຳເຮັດຮີດຢູ່ໃນໄຮ່ແລະຂອບເຂດການປູກຝັ່ງ ຫຼື ເຂດໃດກໍ່ຕາມ ຄູ່ຜົວເມຍດັ່ງກ່າວແມ່ນບໍ່ສາມາດໄປຮ່ວມໄດ້.
3. ກໍລະນີມີຄົນຕາຍ ຄູ່ຜົວເມຍດັ່ງກ່າວສາມາດເຂົ້າຮ່ວມຄົບງັນ ງານສົບໄດ້ ແຕ່ເວລາເອົາຄົນຕາຍໄປປ່າ ຫຼື ເວລາຝັ່ງສົບ ແມ່ນບໍ່ໃຫ້ເຂົ້າຮ່ວມເດັດຂາດ.
4. ເມື່ອເມຍຖືພາໄດ້ 8 ເດືອນແລ້ວ ຜູ້ເປັນຜົວຕ້ອງໄດ້ເຂົ້າໄປປ່າເພື່ອເຮັດຕູບນ້ອຍ ຕຽງນອນ ແລະ ສິ່ງທີ່ຈຳເປັນໄວ້ໃນປ່າເພື່ອໃຊ້ເວລາອອກລູກ ແລະ ຕູບນ້ອຍນັ້ນ ບໍ່ສາມາດນຳໃຊ້ໄດ້ ກ່ອນເວລາອອກ.
5. ໃນເວລາ 10 ມື້ ກ່ອນອອກລູກ ເມຍຈະຕ້ອງປົດເຄື່ອງປະດັບທີ່ມີໃນໂຕອອກເຊັ່ນວ່າ: ຕຸ້ມຫູ ແຫວນ ຫຼື ສາຍຄໍ ທີ່ແມ່ມານໃສ່ຢັ້ນ ສ່ວນຜົມກໍ່ບໍ່ໃຫ້ມັດ.
6. ກ່ອນມື້ອອກປະມານ 1-2 ມື້ ຈະໃຫ້ໄປນອນກະກຽມຢູ່ໃນປ່າ ຫຼື ເມື່ອເວລາແມ່ມານກຳລັງເຈັບທ້ອງອອກລູກຕ້ອງໄດ້ພາໄປອອກຢູ່ໃນຕູບນ້ອຍທີ່ເຮັດໄວ້ນັ້ນ ໃນເວລາອອກລູກແລ້ວ ຜົວຈະເປັນຜູ້ເບິ່ງແຍງທຸກຢ່າງ ແລະ ຈະຕ້ອງນອນໃນຕູບນ້ອຍໃນປ່າເປັນເວລາ30ວັນ ຖ້າຫາກຜົວມີວຽກຫຼາຍຢູ່ນຳເມຍບໍ່ໄດ້ດົນກໍ່ສາມາດຢູ່ພຽງແຕ່15 ວັນກໍ່ໄດ້ ຫຼື ອາດຈະມີອ້າຍ ເອື້ອຍ ນ້ອງມາຢູ່ນຳກໍ່ໄດ້ (ປະຈຸບັນນີ້ແມ່ນບໍ່ໄດ້ເຮັດເຮືອນນ້ອຍຢູ່ໃນປ່າແລ້ວສ່ວນຫຼາຍຈະເຮັດຢູ່ບໍລິເວນອ້ອມແອ້ມເຮືອນຂອງຕົນເອງ ແຕ່ວ່າຈະໃຫ້ມີໄລຍະຫ່າງໄກຢູ່ ພໍສົມຄວນ).
7. ພາຍຫຼັງຢູ່ໄດ້ 30 ວັນແລ້ວ ກໍ່ກັບມາຢູ່ເຮືອນຂອງຕົນເອງໄດ້ ແຕ່ວ່າຄູ່ຜົວເມຍດັ່ງກ່າວ ນັ້ນຕ້ອງໄດ້ຢູ່ໃນຫ້ອງຂອງຕົນເອງເປັນເວລາ 3 ເດືອນ ບໍ່ສາມາດໄປຫ້ອງຂອງພໍ່ແມ່ ແລະ ຫ້ອງອື່ນໆ ພາຍໃນເຮືອນໄດ້ ນອກນັ້ນ ຍັງບໍ່ໃຫ້ໄປເຮືອນຂອງໝູ່ຄູ່ ຫຼື ເຮືອນຂອງຄົນໃນບ້ານດຽວກັນ ໃນໄລຍະນີ້ ຜູ້ເປັນແມ່ສາມາດເຮັດວຽກເຮືອນໄດ້ ຜົວກໍ່ເຮັດວຽກໄດ້ເຊັ່ນດຽວກັນ.
8. ໃນຂະນະທີ່ຖືພາໄດ້ 3 ເດືອນ ຈົນຫຼັງຈາກອອກລູກເຖິງ ໄລຍະພັກຟື້ນນັ້ນ ຫ້າມບໍ່ໃຫ້ກິນໜໍ່ໄມ້ ແລະ ບໍ່ໃຫ້ກິນໜໍ່ຈໍ່ (ເປັນພືດຊະນິດໜຶ່ງ ທີ່ຄົນກະໂດເອີ້ນເປັນຢາເຢັນທີ່ເຮັດໃຫ້ເດັກນ້ອຍດີທ້ອງ) ແລະ ຍ້ອນວ່າຈະມີຜົນກະທົບຕໍ່ເດັກນ້ອຍໃນທ້ອງ ເຮັດໃຫ້ອອກລູກກ່ອນກຳນົດໄດ້ ແມ່ລູກອ່ອນກິນສັດປ່າກໍ່ໄດ້ ສັດໃຫຍ່ເຊັ່ນ: ງົວ ຄວາຍ ແລະ ໝູກໍ່ໄດ້ເຊັ່ນດຽວກັນ ແຕ່ຫ້າມກິນໝູ ແລະ ປະເພດສັດເລືອຄານ ອ່ຽນ ປາໄຫລ.

ໝາຍເຫດ: ຄົນຕະກຸນ ປະເລະ ແລະ ຕະກຸນຕັ້ງໂກ ນັ້ນແມ່ນຫ້າມບໍ່ໃຫ້ກິນໝູ ຫຼື ອາຫານຈຳ ພວກສັດເລືອຄານເຊັ່ນ: ອ່ຽນ ປາໄຫລ ແລະ ອື່ນໆ, ຜູ້ຍິງທີ່ຈະມາເປັນລູກໃພ້ຂອງຕະກຸນປະເລະນີ້ ຖ້າຫາກຢາກກິນອາຫານດັ່ງ

ກ່າວຕ້ອງໄດ້ ເສຍໝູ 2 ໂຕ ຕະກຸນປະແລະ ຫ້າມບໍ່ໃຫ້ກິນໝາຢູ່ໃນເຮືອນ ແຕ່ຖ້າຢູ່ນອກເຮືອນແມ່ນກິນໄດ້ ອີງຕາມເລື່ອງທີ່ຊາວບ້ານເຫຼົ່າໃນສະໄໝສົງຄາມ ຕອນທີ່ພວກທະຫານຫວຽດນາມເຂົ້າມາບ້ານຕັ້ງໂກ ນີ້ ຖ້າທະຫານຜູ້ໃດໄດ້ກິນໝາ ແມ່ນຈະບໍ່ອະນຸຍາດໃຫ້ເຂົ້າເຮືອນຂອງຕະກຸນປະແລະ, ແຕ່ຢູ່ໃນບ້ານຕັ້ງໂກ ຂໍ້ຫ້າມດັ່ງກ່າວມີແຕ່ໃຊ້ກັບຄົນຂອງຕະກຸນປະເລະ ແລະ ຕະກຸນຕັ້ງໂກ ເທົ່ານັ້ນ.

9. ເມື່ອລູກມີອາຍຸຮອດ 3 ເດືອນແລ້ວ ຖ້ວຍຂອງເດັກນ້ອຍຈຶ່ງສາມາດເອົາຂຶ້ນຫ້ອຍມຸ້ງນທີ້ງໄດ້ ໃນເວລານີ້ ຈະມີການເຮັດພິທີ ຮັບເອົາສະມະຊິກໃໝ່ຂອງຕະກຸນ ແລະ ເດັກນ້ອຍຄົນນັ້ນກໍ່ສາມາດພົບຄົນຂອງຄອບຄົວອື່ນໄດ້ເຊັ່ນ: ຍາດພີ່ນ້ອງພາຍໃນບ້ານ ແລະ ກໍ່ເລີ່ມດຳລົງຊີວິດຄືກັບຄົນໜຶ່ງຂອງຄອບຄົວ, ຮູບແບບຂອງພິທີ ແມ່ນຫົວໜ້າເຮືອນຫຼື "ສູນຮິດ" ຈະເປັນຜູ້ເຮັດພິທີເອົາຖ້ວຍຂອງເດັກນ້ອຍຂຶ້ນຫ້ອຍຢູ່ທີ້ງ ຊຶ່ງຈະເອົາໄກ່ ຫຼື ໝູ ເສັ້ນຫວ້າຍ ເພື່ອບອກກ່າວຢູ່ທາງກ້ອງທີ້ງນັ້ນ, ຜູ້ເຮັດພິທີຈະນັ່ງປັ່ນໜ້າເຂົ້າຫາທີ້ງ ເພື່ອອະທິຖານຂໍຄວາມໂຊກດີມີສຸກ ແລະ ສຸຂະພາບທີ່ແຂງແຮງໃຫ້ແກ່ເດັກນ້ອຍ ຖ້າຫາກຫົວໜ້າຄອບຄົວບໍ່ຢູ່ກໍ່ໃຫ້ຜູ້ທີ່ມີອາຍຸໜຸດລົງມາ ເປັນຕົວແທນເຮັດພິທີນັ້ນໃຫ້ ກໍລະນີນີ້ແມ່ນຜູ້ທີ່ເປັນຕົວແທນຕ້ອງໄດ້ບອກກ່າວທີ້ງເສຍກ່ອນ ຈຶ່ງສາມາດທີ່ຈະເລີ້ມພິທີໄດ້.

2. ການແຕ່ງດອງ ແລະພິທີຂອງງານດອງ

ສັງຄົມຂອງກະໂດ ແມ່ນເປັນສັງຄົມທີ່ຂຶ້ນກັບຜູ້ເປັນພໍ່ຫຼາຍ ອີງຕາມການສອບຖາມລະອຽດແລ້ວ ໃນເມື່ອກ່ອນ ແຕ່ລະຕະກຸນຈະຢູ່ເປັນຄອບຄົວໃຫຍ່ໃນເຮືອນຍາວໃຜມັນ ຜູ້ທີ່ມີອາຍຸສູງກ່ວາໝູ່ ຫຼື ອ້າຍກົກຈະເປັນຫົວໜ້າເຮືອນ ຄອບຄົວຢູ່ອ້ອມບໍລິເວນບ້ານສະໜ້ອຍນີ້ ຍັງເຮັດເຮືອນຍາວປຸກຢາຍເປັນແຕ່ລະຈຸດລຽນກັນ ແຍກກັນຢູ່ ແລະ ຈົນມາຮອດປະຈຸບັນນີ້ ລະບົບຂອງສັງຄົມ ແລະ ຄອບຄົວຂອງເຂົາເຈົ້າ ກໍ່ຍັງຖືກຮັກສາສະພາບໄວ້ເປັນຢ່າງດີ, ຄົນທີ່ມີນາມສະກຸນດຽວກັນ ແມ່ນບໍ່ສາມາດແຕ່ງດອງກັນໄດ້ ເມື່ອເວລາຜູ້ຍິງແຕ່ງດອງແລ້ວ ຕ້ອງໄດ້ປ່ຽນນາມສະກຸນ ນອກຈາກນີ້ ເຖິງແມ່ນວ່າລູກອ້າຍລູກນ້ອງກັນ ແຕ່ຖ້າຫາກນາມສະກຸນບໍ່ຄືກັນ ກໍ່ສາມາດແຕ່ງດອງກັນໄດ້ ເຖິງແມ່ນວ່າຈະມີກໍລະນີທີ່ຜູ້ເປັນເຂີຍ ໄດ້ເຂົ້າໄປຢູ່ໃນເຮືອນທີ່ມີແຕ່ລູກສາວກໍ່ຕາມ ແຕ່ເຂີຍຜູ້ນັ້ນກໍ່ບໍ່ຈຳເປັນຕ້ອງປ່ຽນນາມສະກຸນ ສຳລັບຊັບສົມບັດຂອງພໍ່ແມ່ ຕ້ອງແບ່ງໃຫ້ບັນດາລູກເທົ່າທຽມກັນ.

ໃນສະໄໝກ່ອນ ເມື່ອລູກຊາຍຫຼືຍິງເຕີບໃຫຍ່ແລ້ວ ຕ້ອງໄດ້ຍ້າຍບ່ອນນອນມາຢູ່ ຫ້ອງຮັບແຂກ ໃນປະຈຸບັນ ກໍລະນີຂອງລູກສາວແມ່ນແບ່ງເອົາສ່ວນໜຶ່ງນຳຫ້ອງພໍ່ແມ່ ຫຼື ບາງທີກໍ່ພົບເຫັນການນຳໃຊ້ບໍລິເວນເນື້ອທີ່ ທາງດ້ານຫຼັງເຮືອນໃຫ່ຍໃກ້ກັບເຂດຫ້ອງນອນພໍ່ແມ່ ໃນກໍລະນີຂອງລູກຊາຍ ແມ່ນຍ້າຍອອກມານອນຢູ່ຫ້ອງຮັບແຂກ ເມື່ອຮອດເວລາເລີ້ມມັກຜູ້ສາວ ລູກຊາຍກໍ່ອອກບ້ານໄປລົ້ມສາວ ຜູ້ເປັນພໍ່ແມ່ກໍ່ຈະກະກຽມ ງົວ ຄວາຍ ໄວ້ ເພື່ອເປັນຄ່າສິນສອດ ທອງໝັ້ນ ໄວ້ເພື່ອໃຊ້ເຂົ້າໃນງານແຕ່ງດອງ.

ຄົນຊົນເຜົ່າກະໂດນີ້ ຖ້າຫາກວ່າຜູ້ຍິງມີອາຍຸກາຍ 15 ປີ ຫຼື ຜູ້ຊາຍອາຍຸກາຍ18 ປີແລ້ວ ກໍ່ສາມາດແຕ່ງດອງໄດ້ ໃນບ້ານນີ້ ມີຜູ້ຊາຍໄດ້ເຂົ້າຮ່ວມສົງຄາມຫວຽດນາມຫຼາຍ ມີບາງຄົນຍັງບໍ່ທັນໄດ້ແຕ່ງດອງ ແລະ ກໍ່ມີຜູ້ຊາຍ ຈຳນວນບໍ່ໜ້ອຍ ທີ່ເມຍມີອາຍຸຕ່ຳກ່ວາຜົວຫຼາຍ.

ຂັ້ນຕອນຂອງການແຕ່ງດອງ ມີດັ່ງຕໍ່ໄປນີ້:

1. ເມື່ອລູກຊາຍພົບພໍ້ຜູ້ຍິງທີ່ພ້ອມຈະແຕ່ງດອງນຳແລ້ວ ທາງຝ່າຍຊາຍຈະແຈ້ງໃຫ້ທາງພໍ່ແມ່ຂອງຕົນເອງຮັບຮູ້ ຄວາມຮັກຂອງຄູ່ບ່າວສາວ ແມ່ນຈະບໍ່ຖືກບັງຄັບເຖິງແມ່ນວ່າຈະຮັກກັບຄົນເຜົ່າອື່ນກໍ່ຕາມ, ເຄີຍມີເລື່ອງເຫຼົ່າກັນວ່າ ໃນມື້ເດືອນເຕັມດວງ ແມ່ນເປັນມື້ພັກວຽກໃນການເຮັດໄຮ່ ແລະ ກໍ່ເປັນມື້ທີ່ດີສຳລັບ ການນັດອອກມາພົບພໍ້ກັນແບບລັບໆ ຂອງຄູ່ບ່າວສາວ.

2. ເມື່ອທັງສອງຮັກກັນແລ້ວ ກໍ່ຕ້ອງການຢາກແຕ່ງດອງກັນ ແລະ ມີການໄປສູ່ຂໍກັນ ຊຶ່ງໜ້າທີ່ນີ້ຈະເປັນຂອງ ຫົວໜ້າຄອບຄົວ (ຜູ້ເປັນພໍ່) ຊຶ່ງຈະຕ້ອງໄປບ້ານຂອງຜູ້ຍິງ ທີ່ລູກຊາຍຕົນຮັກເພື່ອ ຂໍລູກສາວຂອງເຮືອນ ຫຼັງນັ້ນ ມາເປັນລູກສະໃພ້ທາງຝ່າຍຜູ້ສາວແມ່ນເປັນຝ່າຍຮຽກເອົາຄ່າດອງ ສົມມຸດວ່າຝ່າຍຍິງຕ້ອງການ ຄ່າດອງປະມານ 1 ລ້ານກີບ ທາງຜູ້ຊາຍກໍ່ຕ້ອງໄດ້ຈ່າຍໃຫ້ພໍ່ແມ່ຜູ້ສາວ ໃນເວລາດຽວກັນນັ້ນດ້ວຍນ້ອງ ຂອງຜູ້ສາວກໍ່ຈະໄດ້ປະມານ 1/10 ຂອງຈຳນວນເງິນດັ່ງກ່າວ ການຈ່າຍອາດຈະປຽບທຽບລາຄາເງິນເປັນ ງົວ ຄວາຍ ໄຫເຫລົ້າ ໝໍ້ທອງປະນໍ ຜ້າງຫາດ ຫຼື ວ່າຕາມວິທີ ທີ່ສືບທອດມາແຕ່ຫວງດນາມ ຊຶ່ງຈະຈ່າຍ ເປັນເສື້ອຜ້າເຄື່ອງໃຊ້ທີ່ຈຳເປັນກໍ່ໄດ້, ຖ້າຫາກວ່າທາງຜູ້ຊາຍບໍ່ສາມາດຈ່າຍ ກໍ່ບໍ່ມີສິດໄດ້ແຕ່ງກັບລູກສາວ ເຂົາເຈົ້າ ຖ້າຫາກຜູ້ຊາຍຕົກລົງ ກໍ່ສາມາດເຮັດພິທີແຕ່ງດອງຂຶ້ນໄດ້ພາຍໃນເວລາ 2 ຫາ 3 ເດືອນ ຫຼັງຈາກ ມື້ສູ່ຂໍ.

3. ພາຍຫຼັງສູ່ຂໍແລ້ວກໍ່ນັດມື້ກັນ ພິທີແຕ່ງດອງຈະໄດ້ຈັດຂຶ້ນທີ່ເຮືອນຂອງຝ່າຍຍິງ ແລະ ແທ່ເຈົ້າສາວໄປຫາ ເຮືອນຜູ້ຊາຍ ໃນຂະນະນັ້ນ ຝ່າຍຊາຍຈະເປັນຜູ້ມອບສິນສອດ ທີ່ໄດ້ຕົກລົງກັນໄວ້ ໃຫ້ທາງພໍ່ແມ່ຝ່າຍຍິງ ທັງໝົດ, ຄ່າດອງຕາມປົກກະຕິຈະຢູ່ປະມານ 5 ໂຕຄວາຍ ແຕ່ບໍ່ຈຳເປັນຈະຕ້ອງໄດ້ມອບໃຫ້ທັງໝົດບາດ ດຽວ ການຈ່າຍສາມາດໃຫ້ໄປເລື້ອຍໆຈົນໝົດ (ໃນການໃຫ້ຄ່າດອງນີ້ ແມ່ນເພື່ອຄວາມຮັກແພງຂອງທັງ ສອງຄອບຄົວ ນອກນັ້ນຍັງເປັນການບໍ່ໃຫ້ຄູ່ຜົວເມຍ ປະຮ້າງກັນໄດ້ງ່າຍ ຖ້າຈ່າຍຄ່າດອງບໍ່ໝົດ ຈະບໍ່ສາ ມາດຢ່າຮ້າງໄດ້ ຖ້າຢາກຮ້າງກັນຝ່າຍຊາຍກໍ່ຕ້ອງຊົດໃຊ້ຄ່າດອງເໜືອນເດີມ) ຫຼັງຈາກເຮັດພິທີແຕ່ງດອງ ສິ້ນສຸດລົງແລ້ວ ຜູ້ເປັນເມຍກໍ່ເຂົ້າມາຢູ່ເຮືອນຂອງຜູ້ຊາຍ, ເມື່ອໄດ້ມາຢູ່ນຳກັນຝ່າຍຍິງ ຈະນຳເອົາສົມບັດ ສ່ວນຕົວ ມາມອບໃຫ້ຜູ້ເປັນຜົວຕາມຈຳນວນອັນສົມຄວນ ແຕ່ກ່ອນຫຼັງຈາກງານດອງສິ້ນສຸດລົງແລ້ວທາງ ຝ່າຍຊາຍຈະຕ້ອງສືບຕໍ່ມອບຄວາຍ ຫຼື ງົວໃຫ້ແກ່ເຮືອນຂອງຝ່າຍຍິງໄປເລື້ອຍໆ ພ້ອມດຽວກັນນັ້ນທາງ ຝ່າຍຍິງກໍ່ຕ້ອງເອົາເຄື່ອງນຸ່ງ ແລະ ອາຫານໃຫ້ແກ່ຝ່າຍຊາຍ ຖ້າຫາກບໍ່ມີເງື່ອນໄຂຫຍັງພໍ ກໍ່ສາມາດຍົກ ເວັ້ນໄດ້ ແຕ່ວ່າການມອບໃຫ້ເຊິ່ງກັນແລະກັນແມ່ນເປັນຄວາມຍິນດີຂອງທັງສອງຝ່າຍ.

4. (ຈາກປະເພນີທີ່ປະຕິບັດຢູ່ບ້ານຕ້ຽໂກ) ຖ້າຫາກມີເຫດການທີ່ວ່າ ພາຍຫຼັງແຕ່ງດອງໄດ້ 1 ເດືອນແລ້ວເມື່ອ ຜູ້ເປັນເມຍຈະບ້ານເກີດເປັນເທື່ອທຳອິດ ທາງເຮືອນຝ່າຍຊາຍ (ເຮືອນເລກທີ 24) ຕ້ອງໄດ້ມອບໝູໃຫ້ ເຮືອນຂອງຝ່າຍເມຍ (ເຮືອນເລກທີ36) ແຕ່ໃນຕົວຈິງແລ້ວເຮືອນນີ້ບໍ່ແມ່ນເຮືອນທີ່ເມຍເກີດ ແມ່ນເຮັດຢູ່ ເຮືອນຂອງຫົວໜ້າເຮືອນຊື່ອາລີເບນ ຕະກຸນໂຕຣຍ (ເຮືອນເລກທີ31) ຜູ້ເຂົ້າຮ່ວມພິທີແມ່ນຫົວໜ້າເຮືອນ ຂອງຕະກຸນໂຕຣຍ ອາລີເບນ ການລ້ຽງອາຫານແມ່ນລ້ຽງໝົດທຸກຄົນໃນບ້ານ (ເລກທີຂອງເຮືອນແມ່ນເບິ່ງ ຕາມຮູບ 6 -1 ຂອງ ບົດທີ 6 ຫຼື ຮູບແນະນຳແນະນຳ 41E).

5. ຫຼັງຈາກແຕ່ງ 10 ປີຜ່ານໄປ ຜູ້ເປັນເມຍຕ້ອງໄດ້ກັບເມືອບ້ານເພື່ອເອົາຖວ້ຍຕົນເອງອອກຈາກຫົ້ງ ກ່ອນທີ່ ເອົາອອກຕ້ອງເສັ່ນຫວາຍໝູໃຫ້ຫົ້ງເສຍກ່ອນ ຖ້າຫາກບໍ່ປະຕິບັດແລ້ວ ຈະເຮັດໃຫ້ບັນດາລູກຂອງເຂົາເຈົ້າ ບໍ່ສະບາຍ ໃນຕອນນີ້ຖ້ວຍເມຍທີ່ມີຢູ່ບ້ານເກີດນັ້ນຕ້ອງໄດ້ປົດອອກມາແລະເອົາໄປໄວ້ທ້ອຍ ຢູ່ຫົ້ງຕົນເອງ ໃນເຮືອນຢູ່ປະຈຸບັນ ຖ້າຫາກບໍ່ມີຫົ້ງກໍ່ຕ້ອງໄດ້ເຮັດໃໝ່ ຖ້າບໍ່ດັ່ງນັ້ນກໍ່ຈະເຈັບເປັນ (ຜູ້ຍິງຫຼັງຈາກແຕ່ງດອງ ເປັນເວລາ 10 ປີແລ້ວ ຈຶ່ງສາມາດເປັນສະມາຊິກຂອງຄອບຄົວຂອງຜົວໄດ້ແລະ ສາມາດວາງຕົວຕາມສະ ບາຍໄດ້).

3. ພິທີກຳ ຂອງງານສົບ

"ກຸໂມຍ" ແມ່ນຄຳສັບຂອງຊົນເຜົ່າ ທີ່ໝາຍເຖິງງານສົບ ຊຶ່ງບ່ອນສິ້ນໃຈຂອງຄົນໃນຄອບຄົວແມ່ນຢູ່ ໃນຫ້ອງແຕ່

ລະຄອບຄົວນັ້ນເລີຍ ເຊິ່ງເອີ້ນວ່າ "ມິ່ງບີ" (ບ່ອນນອນຂອງຄອບຄົວ ແລະ ສ່ວນຫຼາຍແມ່ນມີເຕົາໄຟ) ແຕ່ບໍ່ແມ່ນ "ມ້ອງຕູມ້ອຍ"ເຊິ່ງແມ່ນສະຖານທີ່ໃຊ້ເປັນຫ້ອງຮັບແຂກແລະໃກ້ກັບຫິ້ງບູຊາ ເຊິ່ງເປັນເຂດຫວງຫ້າມຮ້ອງວ່າ "ທະບູ່" ຕອນທີ່ຍັງມີຊີວິດແມ່ນໃຫ້ນອນປັ່ນຫົວໄປທາງປ່ອງຢ້ຽມ ເວລາຕາຍແລ້ວ ແມ່ນເອົາປັ່ນຕີນໄປທາງປ່ອງຢ້ຽມ ຜູ້ຍິງ ຫຼື ຜູ້ຊາຍກໍ່ບໍ່ຕ່າງກັນ ຫຼັງຈາກຕາຍແລ້ວບັນດາຍາດພີ່ນ້ອງກໍ່ມາລວມກັນ ສະເພາະຄົນພາຍໃນເຮືອນຈະສັ່ງລາຄົນຕາຍໃນຫ້ອງນອນເປັນຄັ້ງສຸດທ້າຍ ແຕ່ສະເພາະຍາດພີ່ນ້ອງທີ່ຢູ່ໄກ ທີ່ມາຮ່ວມງານສົບແມ່ນຈະບໍ່ໃຫ້ຂຶ້ນເຮືອນຄົນຕາຍ ແຕ່ສາມາດຂຶ້ນເຮືອນຫຼັງອື່ນໄດ້ ເມື່ອເວລາເອົາສົບຜູ້ຕາຍອອກຈາກບ້ານ ຫ້າມບໍ່ໃຫ້ຫາມຜ່ານຫິ້ງບູຊາ ແລະ ຕ້ອງໃຫ້ຫາມຄົນຕາຍອອກຜ່ານທາງປະຕູປ່ອງຢ້ຽມ ເມື່ອຫາມອອກຈາກເຮືອນແລ້ວກໍ່ເອົາໃສ່ໂລງສົບ ໂດຍໃຫ້ປັ່ນຫົວໄປທາງ ທິດຕາເວັນອອກ.

ໃນສະໄໝກ່ອນ ຫີບສົບແມ່ນເຮັດຈາກໄມ້ທ່ອນໃຫຍ່ທ່ອນດຽວເຊິ່ງທາງໃນຖືກຄວັດອອກ ແຕ່ວ່າໃນປະຈຸບັນນີ້ ໄມ້ທ່ອນໃຫຍ່ມີໜ້ອຍແລ້ວ ກໍ່ເລີຍໃຊ້ໄມ້ແປ້ນປະກອບໃສ່ກັນເຮັດເປັນຫີບເອົາ, ໃນເວລາມີຄົນຕາຍຈຶ່ງສາມາດເຮັດຫີບສົບໄດ້ ຫີບສົບຫຼືໂລງ ເອີ້ນວ່າ "ຫອມຕູລາງ" ຫີບສົບແມ່ນຈະເຮັດໂດຍຄອບຄົວຂອງຜູ້ຕາຍ ແຕ່ວ່າຄົນພາຍໃນບ້ານກໍ່ສາມາດມາຊ່ວຍເຮັດນຳກັນໄດ້, ເວລາເອົາສົບໃສ່ຫີບແມ່ນບໍ່ໄດ້ເຮັດຢູ່ຕໍ່ໜ້າເຮືອນ ແຕ່ຈະເຮັດຢູ່ຫຼັງບ້ານ ສະຖານທີ່ໄວ້ສົບນີ້ຈະມຸງຫຼັງຄາ ແລະ ຈະມີພິທີການເຊັ່ນ: ປະກອບຫິ້ງບູຊາ ແລະ ເຄື່ອງເສັ້ນຫວ້າຍ ໃນພິທີນັ້ນຈະຂ້າຄວາຍເອົາແຕ່ຕັບຂອງຄວາຍມາປີ້ງ ແລະ ຍັດໃສ່ບັ້ງໄມ້ໄຜ່ວາງໄວ້ຂ້າງສົບ ແລະ ອະທິຖານວ່າ "ຂໍເຊີນຜູ ຕາຍມາກິນ ແລະ ຂໍໃຫ້ໄປສູ່ສຸຂະຕິ " ນອກຈາກຕັບຄວາຍແລ້ວ ສ່ວນອື່ນໆກໍ່ເອົາມາປະກອບເປັນອາຫານໃນງານໄດ້.

ພິທີງານສົບ ແມ່ນບໍ່ມີພຽງແຕ່ພີ່ນ້ອງມາຮ່ວມເທົ່ານັ້ນ ຍັງມີຄົນຂອງບ້ານທຸກຄົນ ແລະ ໃຊ້ເວລາ 2 ມື້ 2 ຄືນ ໃນຊ່ວງເວລາ 2 ມື້ນີ້ ບັນດາຍາດພີ່ນ້ອງ ແລະ ຄົນຂອງບ້ານຈະມາຊ່ວຍວຸກ ຢູ່ໃນງານຈະມີການປ່ຽນກັນ ຕີຄ້ອງ ຕີກອງ ຕະຫລອດມື້ຕະຫລອດຄືນ ຢູ່ບໍລິເວນອ້ອມສົບຄົນຕາຍນັ້ນ ຜູ້ຕີຄ້ອງອາດຈະເປັນຄົນທີ່ມາຮ່ວມງານສົບ ຕີກໍ່ໄດ້ ແລະ ສິ່ງປ່ຽນກັນໄປມາ ອາດຈະຕີໄປທາງໃດກໍ່ໄດ້ ໂດຍໃຫ້ຂາດສຽງ, ສຳລັບເຮືອນຄົນຕາຍນັ້ນ ມີແຕ່ຄົນໃນຄອບ ຄົວຂອງຜູ້ຕາຍເທົ່ານັ້ນທີ່ມີສິດ ເຂົ້າອອກເຮືອນໄດ້.

ເມື່ອເວລາເສັດສິ້ນພິທີແລ້ວ ຂະບວນແຫ່ສົບ "ໂປວິດ" ຈະແຫ່ສົບໄປຫາບ່ອນຝັງສົບ ຫຼື ປ່າຊ້າ "ປີ່ງກູໂມຍ" ເຖິງແມ່ນວ່າມີຄົນຫຼາຍຢູ່ໃນຂະບວນ ແຕ່ຈະບໍ່ແຫ່ກາຍທາງໜ້າບ້ານ ຂະບວນຈະແຫ່ຈາກທາງຫຼັງບ້ານໄປຫາບ່ອນຝັງສົບຂອງບ້ານ ບ້ານຕ່າງໂກແມ່ນມີໄລຍະຫ່າງ ຈາກສິ້ນຂອງບ້ານໄປທາງທິດເໜືອ ຕາມທາງຮ່ອມເຂົ້າໄປ ໃນປ່າ ປະມານ□ 50 ແມັດ ໃນເວລາແຫ່ສົບຄົນຕາຍໄປນັ້ນ ຜູ້ອື່ນໆຈະຕ້ອງຖື ຈົກ ຊວນ ສຽມໄປພ້ອມ ເພື່ອໄປຂຸດຂຸມຝັງ ຊຶ່ງພວກເຂົາຈະບໍ່ຂຸດຂຸມຝັງໄວ້ລວງໜ້າ ເມື່ອໄປຮອດປ່າຊ້າຈຶ່ງຈະຊ່ວຍກັນຂຸດ ເມື່ອເວລາເອົາສົບຄົນຕາຍຝັງດິນແລ້ວ ກໍ່ເອົາກ້ອນຫີນໝາຍໄວ້ວ່າຢູ່ເທິງໜ້າດິນ ບ່ອນຫົວຂອງຜູ້ຕາຍປັ່ນໄປທາງທິດຕາເວັນອອກ ແລະ ຂາແມ່ນປັ່ນໄປທາງທິດຕາເວັນຕົກ, ຈາກນັ້ນຢູ່ທາງເທິງຂອງຂຸມສົບແມ່ນເຮັດຮ້ານນ້ອຍໃສ່ ໂດຍເອົາເຄື່ອງໃຊ້ຂອງຄົນຕາຍ ແລະ ຂອງກິນວາງໃສ່, ເມື່ອເວລາກັບຈາກບ່ອນຝັງສົບ ແມ່ນສາມາດຜ່ານທາງກາງຂອງບ້ານໄດ້ ແລະ ກ່ອນຈະເຂົ້າເຮືອນຕ້ອງໄດ້ລ້າງມືດ້ວຍນ້ຳອຸ່ນ ຜູ້ຍິງທີ່ເປັນປະຈຳເດືອນ ຫຼື ຜູ້ຍິງມີລູກຈະບໍ່ໃຫ້ໄປສົ່ງສະການ ແລະ ບໍ່ໃຫ້ໄປຮ່ວມໃນພິທີງານສົບ.

ກໍລະນີເດັກນ້ອຍອາຍຸບໍ່ທັນຮອດ 1 ປີ ຫາກຕາຍໄປແລ້ວນັ້ນ ແມ່ນບໍ່ໄດ້ເຮັດພິທີສົບຢູ່ໃກ້ບ້ານ ຖ້າເຮືອນເດັກນ້ອຍເປັນຄົນທຸກ ກໍ່ຈະມີການອະທິຖານໃຫ້ຊາດໜ້າເກີດຢູ່ບ່ອນຮັ່ງມີ ແລະ ສ່ວນຫຼາຍຈະບໍ່ໄດ້ເຮັດພິທີສົບໃຫ້ ໃນກໍລະນີທີ່ຕາຍຢູ່ນອກບ້ານ ແມ່ນບໍ່ມີການເຮັດພິທີສົບຈະໃຫ້ຝັງຢູ່ໃນປ່າເລີຍ ສຳລັບຄົນຕາຍທຸ້ງຜູ້ທີ່ໄປຝັງຈະເຮັດໂລງໃຫ້ແຕ່ ຫ້າມບໍ່ໃຫ້ສຳຜັດກັບສົບຜູ້ຕາຍຢ່າງເດັດຂາດ ໃນການເອົາໃສ່ໂລງແມ່ນໃຊ້ໄມ້ເຂ່ຍຄົນຕາຍເຂົ້າໃສ່ໂລງ ແລ້ວຝັງໄວ້ໃນຂອບເຂດທີ່ຕາຍນັ້ນເລີຍ, ເມື່ອມີຄົນຕາຍຢູ່ໃນບ້ານ ແມ່ນຫ້າມບໍ່ໃຫ້ເຮັດໄຮ່ເປັນເວລາ 7 ມື້ ຫາກບໍ່

ປະຕິບັດຕາມ ກໍ່ຈະມີແນວບໍ່ດີເກີດຂຶ້ນເຊັ່ນ: ຈະເກັບກູ້ຜົນຜະລິດບໍ່ໄດ້ດີ, ສ່ວນການລ່າສັດນັ້ນແມ່ນສາມາດເຮັດໄດ້ ນອກນີ້ຍັງບໍ່ສາມາດເຮັດບຸນ ໃນບ້ານໄດ້ແຕ່ວ່າສາມາດໄປຮ່ວມງານບຸນຂອງບ້ານອື່ນໄດ້.

4. ງານບຸນບັນພະບູລຸດ "ຈະລະປຶບ" (ຈັດທຸກໆ 30 ປີ)

ເລື້ອງລາວຂອງງານບຸນ "ຈະລະປຶບ" ນີ້ແມ່ນໄດ້ສອບຖາມຈາກຫົວໜ້າຜູ້ເຖົ້າຂອງທັງ 2 ບ້ານຕັ້ງໂກ ແລະບ້ານ ພິນເບ, ບ້ານຕັ້ງໂກ ແມ່ນໄດ້ຈັດຂຶ້ນໃນປີ 1998 ສ່ວນບ້ານພິນເບແມ່ນໃນປີ 1975 ເນື້ອໃນຂອງງານທີ່ສາມາດ ລວບລວມມາໄດ້ ມີດັ່ງຕໍ່ໄປນີ້:

"ຈະລະປຶບ" ຖືວ່າເປັນບຸນໃຫ່ຍຂອງເຜົ່າກະໂດ, ໂດຍຈະເຮັດທຸກໆ30 ປີ ຄົນພາຍໃນບ້ານຈະຮ່ວມກັນເຮັດບຸນ ນີ້ຂຶ້ນ ເພື່ອອຸທິດສ່ວນບຸນກຸສົນໃຫ້ແກ່ບັນພະບູລຸດ ເວລາຮອບວຽນທີ່ເຮັດບຸນນີ້ແມ່ນຈະຢູ່ໃນ ລະຫວ່າງ 20 ປີຂຶ້ນໄປ ຫາ 30 ປີກໍ່ໄດ້, ຢູ່ໃນໄລຍະປະມານວັນທີ່ 14-15-16 ຂອງເດືອນ 3 ຫຼືເດືອນ 4 ຊຶ່ງຈະເປັນມື້ເດືອນເພັ້ງ ແລະ ງານ ບຸນຈະໃຊ້ເວລາປະມານ 3 ມື້ 3 ຄືນ ເວລາຫາມື້ໃນການຈັດງານບຸນນີ້ ແມ່ນອາລິເບນ ຈະເປັນຜູ້ຕັດສິນໃຈໃຫ້ ພວກ ອາລິເບນ ຂອງບ້ານຈະປຶກສາກັບຜູ້ເຖົ້າຂອງບ້ານ ເພື່ອວາງແຜນວຽກລະອຽດຂອງງານແລະ ພ້ອມທັງຖາມຄວາມ ສະດວກຂອງບັນດາຊາວໜຸ່ມຂອງໝູ່ບ້ານ ສຸດທ້າຍກໍ່ຈະເລືອກມື້ໄດ້ ງານບຸນນີ້ຖືເປັນງານບຸນໃຫ່ຍຂອງບ້ານກ່ອນ ແລະ ຫຼັງບຸນໃຫ່ຍນີ້ ເຖິງແມ່ນວ່າເຮືອນໃດບໍ່ມີຄົນເຄີຍຕາຍກໍ່ຕາມ ກໍ່ຕ້ອງໄດ້ມາຮ່ວມງານບຸນໃຫ່ຍຂອງບ້ານສະເໝີ ງານບຸນໃຫ່ຍນີ້ ຄົນຂອງບ້ານທັງໝົດຕ້ອງໄດ້ມາຊ່ວຍກັນກະກຽມງານ ນອກຈາກນີ້ບັນດາພີ່ນ້ອງທີ່ດຳລົງຊີວິດຢູ່ ບ່ອນຫ່າງໄກ ກໍ່ຕ້ອງໄດ້ຮ້ອງມາຮ່ວມ.

ເຜົ່າກະໂດນີ້ບໍ່ມີພາສາຂຽນ ເພາະສະນັ້ນໃນເວລາເຮັດການນັດໝາຍໃນການໄປຮ່ວມພິທີຕ່າງໆ ເຂົາຈະໃຊ້ວິ ທີຫັກງ່າໄມ້ເພື່ອບັນທຶກຈຳນວນມື້ທີ່ຜ່ານໄປ ຈົນຮອດມື້ງານ, ວິທີການເຊີນແຂກມາຮ່ວມງານບຸນໃຫ່ຍນັ້ນ ເພື່ອບໍ່ໃຫ້ ຫຼົງລືມມື້ ຜູ້ທີ່ເຊີນຈະກຽມໄມ້ທ່ອນນ້ອຍໆ ຫຼື ໄມ້ໄຜ່ ຊຶ່ງຈະຫັກໄມ້ໃຫ້ມີຈຳນວນທ່ອນ ເທົ່າກັບຈຳນວນມື້ທີ່ຍັງເຫຼືອ ກ່ອນຈະຮອດມື້ບຸນນັ້ນ ຕອນເອົາໄມ້ໃຫ້ຜູ້ເຊີນຈະບອກໄປວ່າ (ໃຫ້ຫັກໄມ້ນັ້ນມື້ລະທ່ອນ ເມື່ອໄມ້ຫັກໝົດແລ້ວກໍ່ສະ ແດງວ່າຮອດມື້ບຸນ) ສ່ວນແຂກຜູ້ທີ່ຢູ່ຫ່າງໄກກໍ່ຫັກໄມ້ມານຳເວລາເດີນທາງເລີຍ, ສ່ວນຜູ້ຢູ່ໃກ້ກໍ່ຫັກ ໄມ້ໄວ້ຈົນໝົດກໍ່ ແມ່ນຮອດມື້ ວິທີນີ້ແມ່ນເປັນວິທີບັນທຶກເວລາ ຢ່າງສະຫຼາດຫຼາຍ.

ພິທີງານບຸນ "ຈະລະປຶບ" ທີ່ເຮັດທຸກໆ30ປີ ໃນການຈັດບຸນນີ້ມີ 2 ຄວາມໝາຍຄື ເມື່ອເວລາໄດ້ຜ່ານພົ້ນໄປໄດ້ ເຖິງ 30ປີ ຜູ້ສູງອາຍຸກໍ່ເຈັບເປັນ ດິນປູກຝັງກໍ່ເຊື່ອມຄຸນນະພາບ ຈຳເປັນຕ້ອງໄດ້ຟື້ນຟູສະພາບດິນຄືນໃໝ່ ວິທີແກ້ໄຂ ບັນຫາດັ່ງກ່າວນີ້ມີຄື:1.ຕ້ອງໄດ້ຍົກຍ້າຍບ້ານ 2.ຕ້ອງໄດ້ເຮັດບຸນໃຫ່ຍໃຫ້ແກ່ບັນພະບູລຸດ ເພື່ອອຸທິດສ່ວນບຸນກຸສົນ ເຖິງຜູ້ຕາຍ ຂອງຍາດຕິພີ່ນ້ອງທີ່ຍັງມີຊີວິດຢູ່ ອະທິຖານປັດເປົ່າຂໍໃຫ້ບັນຫາດັ່ງກ່າວຫາຍໝົດໄປ, ຢູ່ບ້ານພິນເບປະ ມານທຸກໆ 30 ປີໃດ ຈະມີການຍົກຍ້າຍຖິ່ນຖານ ແລະ ເຮັດບຸນນີ້ໄປນຳ, ສ່ວນທາງບ້ານ ຕັ້ງໂກແມ່ນເຮັດບຸນໃນປີ 1998 ນີ້ ແຕ່ບໍ່ໄດ້ຍ້າຍບ້ານ ແລະ ໄດ້ມີການປູກເຮືອນໃໝ່ຂຶ້ນ ດັ່ງທີ່ທ້າວ ບຸນເນີ ຄົນຢູ່ໃນພະແນກວັດທະນະທຳ ເມືອງສະໝວຍ ໄດ້ບອກໄວ້.

4-1 ພິທີຂ້າຄວາຍ


ໃນງານບຸນດັ່ງກ່າວນີ້ ແຕ່ລະຫຼັງເຮືອນຕ້ອງໄດ້ອອກຄວາຍໜຶ່ງໂຕ (ແຕ່ບໍ່ແມ່ນແຕ່ລະຄອບຄົວ) ນອກ ຈາກນີ້ ເພື່ອຕ້ອນຮັບແຂກຂອງບ້ານ ທັງໝົດຫຼັງຄາເຮືອນຈະຕ້ອງໄດ້ອອກຄວາຍຕື່ມອີກ 2 ໂຕ ຍ້ອນເປັນ ແນວນັ້ນ ເວລາຈັດງານຈຶ່ງແກ່ຍາວ ເນື່ອງຈາກວ່າໄດ້ຂ້າຄວາຍຫລາຍໂຕ ເປັນເຫດໃຫ້ກິນຄວາຍບໍ່ໝົດໄລຍະ ເວລາເຮັດບຸນຈຶ່ງແມ່ນແກ່ຍາວອອກເຖິງ 3 ມື້ 3 ຄືນ, ບັນດາງົວ ຄວາຍ ທີ່ອອກກັນນັ້ນຈະມັດຄ້າງຄືນ ຢູ່ກັບ

ຫຼັກໃຈກາງຂອງບ້ານ ເມື່ອດວງຕາເວັນຂຶ້ນແລ້ວກໍ່ຂ້າພ້ອມກັນ ໃນກໍລະນີນີ້ ສ່ວນຫຼາຍເຈົ້າຂອງຄວາຍແມ່ນບໍ່ສາມາດຂ້າຄວາຍຂອງຕົນເອງ ເພື່ອເປັນກຽດໃຫ້ແກ່ແຂກທີ່ມາຮ່ວມເຊັ່ນວ່າ ແຂກຕ່າງເມືອງ ຫຼື ຄົນບ້ານອື່ນໆ ທີ່ໄດ້ຖືກເຊີນເຂົ້າຮ່ວມນັ້ນ ເປັນຜູ້ຂ້າຄວາຍ.


ວິທີການຂ້າຄວາຍແມ່ນມີການກຳນົດໄວ້ ແຂກຜູ້ທີ່ຖືກເຊີນຂ້າຄວາຍນັ້ນ ຈະຢືນຢູ່ໃກ້ກັບຫຼັກຄວາຍແລ້ວເອົາຫອກແທງ ບ່ອນກົກຂາໜ້າກໍ້ຂວາຂອງຄວາຍເພື່ອບໍ່ໃຫ້ດິ້ນແຮງ ໃນຕອນທຳອິດຢູ່ບໍລິເວນອ້ອມຂ້າງນັ້ນ ຈະມີຄົນບັນເລງເຄື່ອງດົນຕີເຊັ່ນ: ຕີຄ້ອງ ເປົ່າຊະໄນ ເຄາະໄມ້ໄຜ່ ພ້ອມກັນຮ້ອງເພງ ພາກັນນັ່ງເປັນວົງອ້ອມຢ່າງຝົດຟື້ນໄປພ້ອມໆກັນ ກັບການແທງຄວາຍ, ຢູ່ທາງນອກວົງກໍ່ຈະມີບັນດາຄົນ ພາຍໃນ ບ້ານແລະ ແຂກມາຈາກບ້ານອື່ນ ສະຫຼອງກັນຢ່າງແໜ້ນໜາ ການຂ້າງົວແມ່ນໃຊ້ເວລາປະມານໜຶ່ງຊົ່ວໂມງກໍ່ສຳເລັດ ພາຍຫຼັງຄວາຍຕາຍແລ້ວ ເຂົາຈະນຳເອົາທຸກສ່ວນມາແຕ່ງກິນແລະກໍ່ແປງຮີດພາຍໃນຄອບຄົວເສຍກ່ອນ ຫຼັງຈາກນັ້ນຈຶ່ງສາມາດແບ່ງປັນກັນກິນໄດ້.

4-2 ອານຕຸງກັນໂມ້ຍ ຂອງບ້ານຕັ້ງໂກ

ເຮືອນບູຊາຫຼືເຮືອນເກັບມ້ຽນກະດູກຂອງຄົນທີ່ຕາຍ ຂອງບ້ານຕັ້ງໂກ (ຕົວຢ່າງຮ້ານບູຊາ ໃນປີ 1998) ດ້ານໜ້າກ້ວາງ 2 ແມັດ ຄວາມຍາວ 3 ແມັດ ແລະ ມີຮ່າງຂະໜາດໃຫຍ່ຍຶດໄວ້ ພ້ອມດ້ວຍການມຸງຫຼັງຄາ ເອີ້ນວ່າ "ອານຕຸງກັນໂມ້ຍ" ປຸກຂຶ້ນຢູ່ໃຈກາງຂອງບ້ານ ລາຍລະອຽດເບິ່ງຮູບສະແດງໄວ້ຢູ່ (ຮູບ4-1) ດ້ານໜ້າແບ່ງອອກເປັນ 2 ລ່ອກ ແລະເຮັດເປັນຖ້ານແບ່ງໄວ້ ໂດຍຄິດໄລ່ຕາມຈຳນວນຕະກຸນທີ່ມີໃນບ້ານ, ບັນດາຕະກຸນ ນີ້ຈະມີລຳດັບຊັ້ນ ເວົ້າກັນວ່າຊັ້ນທີ 1 ແມ່ນ ຂອງຕະກຸນໂວະເໜ່ງ ເຊິ່ງເປັນຕະກຸນມີສາຍເລືອດ.



(ຮູບ 4-1) ບໍລິເວນ ອານຕຸງກັນໂມ້ຍ



(ຮູບ 4-2) ເຮືອນ ອານຕຸງກັນໂມ້ຍ

ມາຈາກຊິນຊັ້ນຊຸນນາງ ຫີບກະດູກຂອງຕະກຸນດັ່ງກ່າວ ມີຂະໜາດປະມານ 30 ຫາ 50 ເຊັນຕິແມັດ ນອກ ຈາກນີ້ ບັນດາຮ່າງຊາກກະດູກຂອງຄົນທີ່ຕາຍໄປຫຼັງຈາກງານ "ຈະລະປຶບ" ຄັ້ງກ່ອນກໍ່ຖືກຂຸດຂຶ້ນມາ ເທື່ອລະ ສົບ ແລ້ວເອົາມາໄວ້ຖ້ານໃນຮ້ານບູຊາເຊິ່ງມີລາຍຊື່ ແລະ ນາມສະກຸນຂຽນຕິດໄວ້ ຮ່າງກະດູກຂອງສົບທີ່ເຄີຍ ເຮັດ "ຈະລະປຶບ" ແລ້ວຈະ ບໍ່ໄດ້ເອົາມາເຮັດອີກ.

"ອານຕຸງກັນໂມ້ຍ" ແມ່ນຢູ່ໃນຮົ້ວທີ່ເຮັດອ້ອມໄວ້ ດັ່ງສະແດງໃນ(ຮູບ 4-2) ບ່ອນດັ່ງກ່າວຈະເຮັດເປັນສີ່ ດ້ານມີຂະໜາດ 4 ຄູນ 4 ແມັດ ທາງນອກແມ່ນອ້ອມດ້ວຍຮົ້ວໄມ້ໄຜ່, ທາງກາງຂອງຮົ້ວທິດຕາເວັນອອກ ແລະ ທິດຕາເວັນຕົກ ແມ່ນມີທາງເຂົ້າເຮັດໄວ້ເພື່ອເປັນບ່ອນທຽວເຂົ້າ-ອອກ ໃນເວລາ3 ມື້ ທີ່ເຮັດງານບຸນ "ຈະລະ ປຶບ" ນີ້ ຢູ່ປາກທາງເຂົ້າທັງສອງດ້ານຈະມີຄົນຍາມ ຢູ່ດ້ານໃນຮົ້ວໄມ້ໄຜ່ເບື້ອງທິດເໜືອແລະໃຕ້ນັ້ນ ຈະມີຕົ່ງ ຍາວຢູ່ສອງຂ້າງ ຕົ່ງຍາວນັ້ນຈະມີຄ້ອງວາງໄວ້ ກໍລະນີ ຂອງບ້ານຕັ້ງໂກແມ່ນຢູ່ຂ້າງຂອງຕົ່ງຍາວ ທ່ານໂວະ ເໜ່ງ (ຫົວໜ້າເຮືອນຕະກຸນຕັ້ງໂກ) ຈະນັ່ງຢູ່ ແລະ ອອກຄຳສັ່ງ ໃຫ້ຕີຄ້ອງ ຕີກອງນັ້ນ ພ້ອມທັງຟ້ອນອ້ອມ ບ່ອນນັ້ນ ແລະ ຈະຕີທັງເວັນທັງຄືນບໍ່ໃຫ້ຂາດສຽງ ແລະ ປ່ຽນກັນໄປມາຕາມແຕ່ລະຕະກຸນ ມື້ທຳອິດມີແຕ່ຄົນ ໃນບ້ານ ແລະ ບັນດາພີ່ນ້ອງເທົ່ານັ້ນ ມື້ຕໍ່ມາຈຶ່ງສາມາດໃຫ້ແຂກແລະຄົນນອກບ້ານເຂົ້າມາໄດ້ (ນອກຈາກຄົນ ໃນຕະກຸນມາຈູດທູບທຽນຍິ່ງເປັນການດີ) ເວລາງານບຸນສຳເລັດແລ້ວ ກະດູກທີ່ຖືກບັນຈຸໃສ່ຫີບໄມ້ ແລະ ຈະບໍ່ ຖືກນຳຄືນມາຝັງໄວ້ບ່ອນເກົ່າ ຈະເປັນສະຖານທີ່ໃໝ່ ຢູ່ໃນປ່າທີ່ຫ່າງໄກຈາກບ້ານ ກະດູກຈະຖືກຝັງຄາ ໃນຫີບ ໄມ້ນັ້ນເລີຍ, ໃນເວລາຝັງແມ່ນຝັງລວມກັນສະເພາະເປັນຕະກຸນ ຖ້າຕະກຸນໃດມີເຖິງ 10 ຄົນ ກໍ່ຝັງໄວ້ບ່ອນ ດຽວ ພ້ອມທັງເຮັດເຮືອນມຸ່ງຫຼັງຄາ ຕາມຈຳນວນແຕ່ລະຕະກຸນພາຍໃນບ້ານ, ກະດູກທີ່ຜ່ານການເຮັດພິທີ "ຈະລະປຶບ" ແມ່ນຈະບໍ່ຖືກຂຸດຂຶ້ນມາເຮັດພິທີອີກ.

ບົດທີ 5

ວິທີການປຸກເຮືອນ ແລະ ຈຸດພິເສດຂອງເຮືອນ

1. ການປຸກເຮືອນ

ເມື່ອເວລາມີການຕັດສິນໃຈວ່າ ຈະຍົກຍ້າຍບ້ານຕ້ອງໄດ້ໄປຫາສະຖານທີ່ຕັ້ງບ້ານໃໝ່ ເມື່ອພົບສະຖານທີ່ ທີ່ເໝາະສົມໃນການຕັ້ງບ້ານແລ້ວ ເຂົາເຈົ້າຈະມີການສ່ຽງທວ່າຍວ່າສະຖານທີ່ໆພົບນັ້ນດີ ຫຼື ບໍ່ ໂດຍມີວິທີການດັ່ງນີ້: ໃນເບື້ອງຕົ້ນຈະຂຸດຂຸມແລ້ວ ນຳເມັດເຂົ້າສານຢອດໃສ່ປະມານ 6 ເມັດ ແລ້ວຖົມຄືນ, ຈາກນັ້ນກ່ຳກັບເມືອບ້ານແລ້ວ ນອນເພື່ອສ່ຽງເອົາຕາມຄວາມຝັນ, ຖ້າຫາກຝັນດີກ່ຳຈະຕັດສິນໃຈເລືອກເອົາບ່ອນນັ້ນເລີຍ ແຕ່ຖ້າຫາຝັນບໍ່ດີ ກ່ຳຕ້ອງປ່ຽນສະຖານທີ່ເປັນບ່ອນໃໝ່ ຫຼື ອາດຈະເບິ່ງເມັດເຂົ້າສານ ຖ້າຫາກວ່າເມັດເຂົ້າສານນັ້ນສູນຫາຍໄປ ສະແດງວ່າເປັນສະຖານທີ່ບໍ່ດີ ບໍ່ຄວນຕັ້ງບ້ານໃສ່ ແຕ່ກົງກັນຂ້າມ ຖ້າເມັດເຂົ້າສານຍັງຄົບກ່ຳສາມາດຕັ້ງບ້ານໄດ້ ຫຼັງຈາກຕັດສິນໃຈໄດ້ແລ້ວ ເມື່ອຈະຕັ້ງເຮືອນກ່ຳສ່ຽງທວ່າຍຄືກັນ ຫຼື ຖ້າຫາກມີການປຸກເຮືອນຄົນໃໝ່ ກ່ຳຈະບໍ່ເລືອກປຸກໃສ່ເຂດເຮືອນຫຼັງເກົ່າ ແລະ ເລືອກເອົາບໍລິເວນຢູ່ໃກ້ໆກັບເຮືອນເກົ່ານັ້ນ ວິທີຕັດສິນໃຈກ່ຳຂຶ້ນກັບການສ່ຽງຄວາມຝັນ ກໍລະ ນີຂອງບ້ານຕັ້ງໂກນັ້ນການປຸກເຮືອນຄົນໃໝ່ ແມ່ນຈະເລືອກເອົາບໍລິເວນຕໍ່ໜ້າຂອງສະຖານທີ່ ທີ່ເຮືອນ ເປ່ເພນັ້ນ.

ສຳລັບຜູ້ທີ່ຈະສ່ຽງທວ່າຍຄວາມຝັນເລືອກສະຖານທີ່ຈະປຸກເຮືອນໃສ່ນັ້ນ ແມ່ນອາໄສຄວາມຝັນຂອງຜູ້ເປັນຫົວໜ້າເຮືອນ ຫຼື ເຈົ້າຂອງເຮືອນ, ເຮືອນທີ່ຈະປຸກນັ້ນໂດຍພື້ນຖານແລ້ວ ຈະປຸກໃສ່ໃສກ່ຳໄດ້ຢູ່ພາຍໃນບ້ານນັ້ນ ແຕ່ໃນຕົວຈິງແລ້ວ ແຕ່ລະຕະກຸນຈະປຸກຢູ່ໃກ້ໆກັນ ໃນບັນດາເຮືອນຍາວຂອງເຜົ່າກະໂດນີ້ ຍັງບໍ່ພົບເຫັນຕະກຸນໃດ ທີ່ຈະເສີມຂະຫຍາຍເຮືອນຍາວ ໂດຍອີງຕາມການເພີ້ມຂຶ້ນຂອງຄົນ ໃນຄອບຄົວຄືກັນກັບເຮືອນຍາວ ຢູ່ລັດສາຣາວັກ ປະເທດມາເລເຊຍ, ເຮືອນຍາວຂອງກະໂດແມ່ນຈະບໍ່ມີການຂະຫຍາຍເນື້ອທີ່ເພີ້ມຕື່ມ ແຕ່ເປັນລັກສະນະຖາວອນເລີຍ ກໍລະນີທີ່ແຕ່ງດອງແລ້ວ ຈຳນວນຄອບຄົວເພີ້ມຂຶ້ນນັ້ນ ອາດຈະອາໄສຢູ່ນຳພໍ່ແມ່ກ່ອນ ຊຶ່ງຢູ່ຫ້ອງທີ່ມີພື້ນທີ່ຫວ່າງຢູ່ນັ້ນ ຫຼື ວ່າຈະແຍກອອກມາເຮັດເຮືອນນ້ອຍຢູ່ບໍລິເວນໃກ້ໆ ເຮືອນພໍ່ແມ່ດ້ວຍການເສີມຄານ ຕໍ່ເປັນທາງຍ່າງແລ້ວຂັ້ນຫ້ອງນ້ອຍຢູ່ ຫຼື ແບ່ງຫ້ອງນ້ອຍຢູ່ທາງຫຼັງເຕົາໄຟເຮັດເປັນຫ້ອງນອນຂອງລູກຕໍ່ໃສ່ບໍລິເວນທາງຂ້າງຂອງທາງຍ່າງໃນເຮືອນ, ແຕ່ວ່າສະຖານທີ່ແບບນັ້ນ ບໍ່ສາມາດເປັນຫ້ອງຂອງຄອບຄົວໄດ້ເລີຍ ຫ້ອງທີ່ຕື່ມໃສ່ນັ້ນຖືວ່າເປັນຫ້ອງສຳຮອງຂອງຄອບຄົວນັ້ນ.

ການຕັດໄມ້ໄຜ່ຢູ່ປ່າເພື່ອມາເຮັດເຮືອນນັ້ນມີຂັ້ນຕອນດັ່ງນີ້: ເມື່ອຕັດໄມ້ແລ້ວ ຫ້າມບໍ່ໃຫ້ຫາມທ່ອນໄມ້ນັ້ນເຂົ້າມາໃນບ້ານເລີຍ ແຕ່ຈະປະໄວ້ໃນປ່າກ່ອນປະມານຄືນໜຶ່ງ ແລະ ໃນຄືນນັ້ນຈະມານອນສ່ຽງຄວາມຝັນ ຖ້າຫາກຝັນເຫັນເລື້ອງບໍ່ດີກ່ຳຈະບໍ່ເອົາໄມ້ນັ້ນ ແຕ່ຖ້າຫາກຝັນດີກ່ຳສາມາດຫາມໄມ້ນັ້ນເຂົ້າມາບ້ານໄດ້ ກ່ອນຈະເລີ້ມສ້າງເຮືອນຫົວໜ້າເຮືອນຈະໄປເຂດທີ່ຕັ້ງຫົ້ງນັ້ນ ແລະ ມີເຄື່ອງເສັ່ນຫວ້າຍໝູ ຫຼື ຈະເອົາໄກ່ກ່ຳໄດ້ເພື່ອບອກກ່າວ ຂໍອະນຸຍາດຈາກຜີບັນພະບຸລຸດ.

ໄມ້ທ່ອນທີ່ຈະເອົາມາເຮັດເສົາ ແລະ ຮ່າງເຮືອນນັ້ນ ຖ້າຈະໃຫ້ດີກ່ຳຕ້ອງແມ່ນໄມ້ ອາລ່ອງຊູອິ ຫຼື ເອັ້ນ ວ່າໄມ້ດູ່ ແຕ່ໃນປະຈຸບັນນີ້ບໍ່ຄ່ອຍຈະມີໄມ້ຊະນິດນີ້ຢູ່ໃກ້ບ້ານແລ້ວ ເພາະສະນັ້ນ ຈຶ່ງໃຊ້ໄມ້ເຊິ່ງເປັນໄມ້ເນື້ອແດງແລະໄມ້ເນື້ອແຂງແຕ່ ກ່ຳຍັງບໍ່ເທົ່າໄມ້ ອາລ່ອງຊູອິ .

ການເຮັດເຮືອນແມ່ນຈະຊ່ວຍກັນເປັນກຸ່ມຄອບຄົວ ສ່ວນຫົວໜ້າຄອບຄົວຈະເປັນຜູ້ສັ່ງການຜູ້ໜຸ່ມຈະເປັນຜູ້ປະຕິບັດ ຕໍ່ໄປນີ້ແມ່ນຕົວຢ່າງຂອງເຮືອນຍາວຕະກຸນປະເລະ (ຢູ່ມາໄດ້10-30ປີ ມີຂະໜາດ ກ້ວາງ 6ແມັດ ຍາວ100 ແມັດ) ໃນປີ 2002 ໄດ້ປຸກຄືນແບ່ງເປັນ 4 ຫຼັງ ກ່ຽວກັບເຫດຜົນທີ່ໄດ້ແບ່ງອອກເປັນ 4 ຫຼັງ ໃນເວລາປຸກຄືນໃໝ່ນີ້

ຫົວໜ້າຜູ້ທີໜຶ່ງຂອງຄອບຄົວປະແລະໄດ້ເລົ່າວ່າ:ໃນເບື້ອງຕົ້ນຖ້າຫາກເຮືອນຍາວໂພດ ກໍ່ຈະບໍ່ສະດວກໃນເວລານຳໃຊ້ ແລະ ອີກຢ່າງໜຶ່ງແມ່ນບໍ່ສາມາດຫາໄມ້ທ່ອນໃຫຍ່ໄດ້ ເຫດຜົນທີ3 ແມ່ນໄມ້ທີ່ເຄີຍຕັດມາ ກໍ່ໃຊ້ມາໄດ້ສາມເທື່ອ ແລ້ວຈຶ່ງຕ້ອງໄດ້ແບ່ງເຮືອນອອກເປັນຫລາຍຫຼັງ ແຕ່ສິ່ງທີ່ດີກໍ່ຄືເຖິງວ່າຈະແຍກອອກເປັນ4ຫຼັງ ແຕ່ຄວາມສຳພັນຂອງຄອບຄົວກໍ່ຍັງຄືເກົ່າ ກັບເວລາທີ່ເປັນຫຼັງດຽວກັນ.

ເວລາທັງໝົດທີ່ໃຊ້ປຸກເຮືອນແມ່ນປະມານ 2 ເດືອນ ເວລາສຳລັບຕັດທ່ອນໄມ້ ແລະ ໄມ້ໄຜ່ທີ່ມາເຮັດເປັນສ່ວນປະກອບເຮືອນ ແມ່ນປະມານ50 ມື້ ແລະເວລາປຸກສ້າງປະມານ10ມື້ ຂັ້ນຕອນຕັດໄມ້ ແລະ ແປຮູບ ໄມ້ທ່ອນນັ້ນຈະແມ່ນຫົວໜ້າຄົວຄອບເປັນຜູ້ເຮັດ ແຕ່ເວລາປຸກສ້າງແທ້ໃຊ້ເວລາປະມານ10ມື້ ທັງໝົດບ້ານທັງຍິງແລະຊາຍນັ້ນຈະມາຊ່ວຍກັນປຸກເຮືອນດັ່ງກ່າວ ລັກສະນະນີ້ພວກເຂົາເອີ້ນວ່າ “ຢຸຍ” ໃນມື້ໜຶ່ງຈະໃຊ້ຄົນປະມານ 100 ຄົນ ແລະ ຈະຕ້ອງໄດ້ຄ້ຳໝູ 1 ໂຕ ເພື່ອເປັນອາຫານລ້ຽງຄົນທີ່ມາຊ່ວຍວຽກ ດັ່ງນັ້ນໃນເວລາ 10 ມື້ ກໍ່ຕ້ອງໄດ້ຄ້ຳໝູ 10 ໂຕ ແລະ ຫຼັງຈາກນີ້ເມື່ອ ເຮັດບ້ານໃໝ່ຫຼັງທີ 2 ກໍ່ຕ້ອງໄດ້ເສັ້ນໄຫວ້ ແບ້ 1 ໂຕ ໃຫ້ສານເຈົ້າ ໃນເວລາປຸກເຮືອນສຳເລັດແລ້ວກໍ່ຕ້ອງໄດ້ຂ້າຄວາຍ ຫຼື ງົວ ແລະໝູ ຢ່າງລະ1ໂຕ ເພື່ອລ້ຽງຄົນໃນບ້ານໃນພິທີຂຶ້ນເຮືອນໃໝ່ ເຊິ່ງໃນຄືນນັ້ນຈະມີການຕີຄ້ອງ ຕີກອງ ຄົບງັນ ກິນເຫຼົ້ານຳກັນຕະຫລອດມື້ ຕະຫລອດຄືນ.


ຂັ້ນຕອນຂອງການປະກອບເຮືອນແມ່ນມີຕາມລຳດັບດັ່ງຕໍ່ໄປນີ້:1.ບາກເສົາເຮືອນແລະຕັ້ງເສົາ 2.ປະກອບໂຄງພື້ນເຮືອນ 3.ຕໍ່ຂື່ໃສ່ລະຫວ່າງເສົາຫາເສົາ 4.ຕໍ່ຄານແລະ ຂື່ໃສ່ຫຼັງຄາ 5. ຮອງໄມ້ໂຄງຫຼັງຄາດ້ວຍທ່ອນໄມ້ສັ້ນຕັ້ງແຕ່ລຸ່ມຫາເທິງ 6.ຫຼັງຈາກຮອງໄມ້ໂຄງຫຼັງຄາແລ້ວກໍ່ປົດໄມ່ຮອງອອກ ສ່ວນເທິງຂອງເຮືອນທີ່ເຮັດຈາກຄານ ແລະ ຂື່ນັ້ນຈະໃຊ້ໄມ້ເນື້ອແຂງຮ້ອງວ່າ “ນາມເກ່” ເປັນໄມ້ໃຫຍ່ ແລະ ກິນ ສ່ວນວິທີນຳໃຊ້ນັ້ນ ຈະມີການກຳນົດໄວ້ຢູ່ສົ້ນທາງກົກຂອງທ່ອນໄມ້ຈະຕ້ອງປັ່ນໄປເບື້ອງທີ່ຕັ້ງຫົ້ງ, ສຳລັບຂື່ນັ້ນຕ້ອງປັ່ນປາຍໄປທາງທິດຕາເວັນອອກ ແລະ ທາງກົກປັ່ນໄປທາງທິດຕາເວັນຕົກ ກ່ຽວກັບຄານມ້ອງຕຸມ້ອຍນີ້ທາງກົກຈະຊີ້ໄປທາງທິດເໜືອ ເຊິ່ງຈະເປັນທາງທີ່ມີຫົ້ງຢູ່ ແລະ ປາຍຄານຈະຊີ້ໄປທາງທິດໃຕ້ ການປະກອບເຮືອນຂອງຊົນເຜົ່າກະໂດ (ເຮືອນເລກທີ່ 2) ມີລາຍລະອຽດເອກະສານເພີ້ມເຕີມ (ຮູບ5-1).

2. ການນຳໃຊ້ຫົວໜ່ວຍວັດແທກ ດວ້ຍຮ່າງກາຍຄົນ ຂອງຄົນເຜົ່າກະໂດ

ເຜົ່າກະໂດ ໃນປະຈຸບັນນີ້ແມ່ນນຳໃຊ້ຫົວໜ່ວຍວັດແທກເປັນແມັດ ເມື່ອຕ້ອງການຄວາມຍາວ ແຕ່ວ່າໃນການວັດແທກແບບປະມານ ຊຶ່ງນຳໃຊ້ຮ່າງກາຍຂອງຄົນກໍ່ຍັງນຳໃຊ້ກັນຢູ່ເຊັ່ນ: ຫົວໜ່ວຍການນຳໃຊ້ ຄືບ ສອກ ວາ ກໍ່ແມ່ນວິທີໜຶ່ງສາມາດເຮັດເຮືອນໄດ້ຄືກັນ ແຕ່ຄວາມຍາວທີ່ໄດ້ຂອງເຮືອນແຕ່ລະຫຼັງຈະຕ່າງກັນຫຼາຍ ຍ້ອນວ່າໃຊ້ຫົວໜ່ວຍສອກ ຈຸດທີ່ໜ້າສັງເກດກໍ່ຄືເຮືອນຂອງແຕ່ລະຕະກຸນ ຈະມີຄວາມຍາວຕ່າງກັນ ຊຶ່ງເວົ້າສະເພາະການສ້າງ ປຸກເຮືອນຂອງຕະກຸນດຽວ ແລະ ໃນເວລາດຽວ ແມ່ນບໍ່ພຽງແຕ່ວິທີການປຸກສ້າງຄືກັນ ແຕ່ຂະໜາດຂອງເຮືອນກໍ່ຍັງຄືກັນ ສະແດງວ່າໃຊ້ສອກຂອງຄົນຜູ້ດຽວກັນ (ຕົວຢ່າງເອົາສອກຂອງຜູ້ເປັນຫົວໜ້າຄອບຄົວ) ບັນດາຫົວໜ່ວຍທີ່ເອົາມາວັດແທກເພື່ອປຸກເຮືອນສ່ວນຫລາຍແມ່ນເພີ້ມນຳໃຊ້ສອກ ບັນດາຫົວໜ່ວຍຂອງຮ່າງກາຍຂອງຄົນ ເບິ່ງ(ຮູບ5-2) ແລະ ຂະໜາດຄວາມກ້ວາງຂອງນິ້ວໂປ້ ເບິ່ງ(ຮູບ11) ເຊິ່ງນຳໃຊ້ໃນເວລາວຽກງານຈັກສານເຊັ່ນ:ເວລາສານແຫ.

3. ການຢູ່ອາໄສ ແລະເນື້ອທີ່ບໍລິເວນຂອງມ້ອງຕູມ້ອຍ ທີ່ມີຫົ້ງຢູ່ໃນ


ໃນເຮືອນຂອງເຜົ່າກະໂດນີ້ “ມ້ອງຕູມ້ອຍ” ແມ່ນພາກສ່ວນໃຈກາງຂອງເຮືອນ ແລະເປັນຫ້ອງກ້ວາງເຊິ່ງໃຊ້ເປັນບ່ອນຕ້ອນຮັບແຂກ ໂດຍທົ່ວໄປແຕ່ລະຕະກຸນຈະມີ “ມ້ອງຕູມ້ອຍ”ໜຶ່ງຫ້ອງ ໃນເມື່ອກ່ອນແຕ່ລະຕະກຸນຈະຢູ່ເຮືອນດຽວກັນ ແລະ ບໍ່ມີເຮືອນແຍກກັນຢູ່ຄືໃນປະຈຸບັນ ໃນບ້ານຂອງໜຶ່ງຕະກຸນຈະມີ “ມ້ອງຕູມ້ອຍ” ຢູ່ໃຈກາງ ແລະ ເປັນບ່ອນຮັບແຂກ ໃນເມື່ອກ່ອນເຖິງແມ່ນວ່າແຂກຈະມາຢ້ຽມເຮືອນເປັນເທື່ອທຳອິດກໍ່ຕາມແຕ່ກໍ່ຮູ້ທີ່ຕັ້ງ“ມ້ອງຕູມ້ອຍ”



1. ເສົາ (ti no pung, ຕິໂນະປຸງ)
2. ໄມ້ອົກໄກ່ (ku pong, ກຸປ່ອງ)
3. ໄມ້ຊີຍົວ (chu wai, ຈຸໄວ)
4. ໄມ້ຂ້າວ (par roi, ປ່າຣອຍ)
5. ຄານ (par pa ka, ປ່າປະກະ)
6. ຄໍ່ສອງ (prang jung, ປຣັ້ງຈຸ)
7. ໄມ້ຂອບປ່ອງຍັ້ງມ (ku po a rung, ກາປຸອາຣຸ)
8. ໄມ້ຕິງ (pa ren, ປາເຣັ້ງ)
9. ເສົາພາງ (tan peng, ຕັ້ງເປ)
10. ຂາງ (a nyu, ອານຸຍ)
11. ເສົາ (kan bong, ກັ້ງບຸ)
12. ໄມ້ກາງຫ້ອງຮັບແຂກ (ra rong,ຣາຣ່ອ)
13. ລະບຽງທາງເຂົ້າ (an trong, ອັນຕຣອ)

ຄໍ່ຫັ້ງຄາ (ka rang mou, ກະຣັ້ງມູ, ເຮືອນຫັ້ງນີ້ບໍ່ມີ)
ພື້ນເຮືອນ (tu pang hung, ຕູປັ້ງຮັ້ງ)
ຝາທາງນອກ (ta rang rung, ຕາຣັ້ງຣຸ)
ຝາຂັ້ນ (tang rung, ຕັ້ງຣຸ)
ແນວມຸງຫັ້ງຄາ (prang, ປຣັ້ງ)

(ຮູບ 5-1) ໂຄງຮ່າງຂອງເຮືອນກະໂດ ແລະ ສ່ວນຕ່າງໆຂອງເຮືອນ
(ເຮືອນເບີ 2 ຢູ່ໃນບ້ານຕັ້ງໂກ)



1. ອາຈຸງ (achung)	2. ໂຈໂຣມ (chorom, ເຄິ່ງໜຶ່ງຂອງ ອາຈຸນ)	3. ມົວຕຣອກ (muatrok)
4. ໂມກັດ (mokat)	5. ປຣານຸງ (pranung)	6. ປາກັງ (pakang)
7. ຕິດາ (tidar)	8. ຕູເບັນ (twuben)	9. ຕານພູນ (talpowl)
10. ການໂພວາ (karpowa)	11. ຕັງພາວ (tanpowl)	

(ຮູບ 5-2) ຫົວໜ່ວຍວັດແທກ ອີງຕາມພາກສ່ວນຮ່າງກາຍຄົນ ທີ່ເຜົ່າກະໂດນຳໃຊ້

ໄດ້ໃນທັນທີ ຍ້ອນວ່າຫ້ອງດັ່ງກ່າວນັ້ນຈະມີຈຸດເດັ່ນຊຶ່ງເຮັດໃຫ້ຜູ້ມາຢ້ຽມຢາມຮູ້ ລາຍລະອຽດແມ່ນສະແດງແຜນ ວາດໄວ້ໃຫ້ເບິ່ງ (ຮູບ5-3) ບໍລິເວນຂອງມ້ອງຕູມ້ອຍຈະແບ່ງຝາເປັນ 2 ສ່ວນ ຊ້າຍແລະຂວາ ຢູ່ສ່ວນເທິງຂອງສັນຫຼັງ ຄາຈະໝາຍເຂດຂອງມ້ອງຕູມ້ອຍ ດ້ວຍການນຳເອົາເຂົາຄວາຍ ມາມັດຕິດໄຂວກັນ ຢູ່ສອງຈຸດຂອງຂອບເຂດຫ້ອງ ມ້ອງຕູມ້ອຍນັ້ນ ໃນປະຈຸບັນນີ້ຢູ່ທາງດ້ານໜ້າຂອງຫ້ອງມ້ອງຕູມ້ອຍ ໃນເຮືອນແຕ່ລະຫຼັງຈະມີ ທາງເຂົ້າອອກຢູ່ຕໍ່ໜ້າ ມ້ອງຕູມ້ອຍ ຊຶ່ງຈະເຮັດເປັນລະບຽງທາງເຂົ້າ ຕໍ່ໃສ່ຂັ້ນໄດ ຕ່ຳກວ່າພື້ນເຮືອນເລັກນ້ອຍ ໃນເມື່ອກ່ອນສ່ວນຫຼາຍຂັ້ນ ໄດຈະກ່າຍເຂົ້າໃສ່ພື້ນຂອງຫ້ອງມ້ອງຕູມ້ອຍ່ໂດຍກົງ ຢູ່ທັງສອງສິ້ນຂອງຈອມສີໜ້າແມ່ນຈະເຮັດເປັນຮູບເຂົາຄວາຍ ເອ້ໃສ່ ເຊິ່ງຍັງຫຼົງເຫຼືອຢູ່ໃນເຮືອນບາງຫຼັງ ໃນບ້ານຕັງໂກ ໃນປະຈຸບັນ.

ໃນເມື່ອກ່ອນ ແຕ່ລະຄອບຄົວບ່ໄດ້ຂັ້ນຫ້ອງຢ່າງລະອຽດ ແລະ ມີພຽງແຕ່ຝາຂັ້ນຫ້ອງຕາມລວງຂອງຂື່ ເທົ່ານັ້ນ

ສຳລັບທາງເຂົ້າອອກລະຫວ່າງຫ້ອງ ແມ່ນເຮັດປະຕູເປັນຂອບແບບວົງມົນຕັ້ງຍາວທາງ ແລະ ຕົກແຕ່ງດ້ວຍຫວາຍມີ ລວດລາຍງາມ ຢູ່ທັງສອງຟາກຂອງຂອບປະຕູກໍ່ຈະເຮັດປ່ອຍເປັນທາງປະໄວ້ ຫາກເບິ່ງຈາກກ້ຳ ມ້ອງຕູມ້ອຍ ທັງ ສອງເບື້ອງຊ້າຍ ແລະ ຂວາຈະເຫັນຂອບວົງມົນງາມ ຕໍ່ເນື່ອງກັນຂັ້ນເປັນແຕ່ລະຫ້ອງ ເບິ່ງແລ້ວຊອດກັນໃສ່ກັນຈົນ ສຸດຄວາມຍາວຂອງເຮືອນ ຕົວຢ່າງຢູ່ບ້ານຕ້ງໂກ ເຮືອນເບີ 29 ແລະ 34 ຈະມີລັກສະນະເກົ່າແກ່ ຄືດັ່ງທີ່ກ່າວມານັ້ນ.


ຢູ່ພາກສ່ວນເທິງຂອງຝາຂັ້ນມ້ອງຕູມ້ອຍໃນເມື່ອກ່ອນດັ່ງສະແດງໃນ (ຮູບ5-4) ຈະເອ້ດ້ວຍຫົວຄວາຍຢູ່ເບື້ອງ ຊ້າຍ ເບື້ອງຂວາແມ່ນຫົວງົວ ແລະ ທາງດ້ານເທິງຂອງປະຕູຈະມີຮູບຫົວແບ້ ສຳລັບເສົາຈະແກະສະຫຼັກ ດ້ວຍລາຍ ເຄືອໄມ້ທີ່ສວຍງາມ ມີສະເພາະແຕ່ເສົາຢູ່ຫ້ອງ “ມ້ອງຕູມ້ອຍ” ເທົ່ານັ້ນ ອີງຕາມຄຳບອກເຫົ່າຂອງຫົວໜ້າ ໃນບ້ານ ຕ້ງໂກ ແມ່ນເຮືອນຫຼັງນີ້ມີຈຸດພິເສດ 3 ອັນຄື: 1.ເຮືອນຫຼັງນີ້ສະແດງເຖິງຄວາມດຸໝັ່ນຂອງຕະກຸນ 2.ສະແດງໃຫ້ເຫັນ ເຖິງຄວາມເກັ່ງ ມີຄວາມຈະອຽດອ່ອນ ແລະ ປານີດໃນການປຸກເຮືອນ 3. ສະແດງເຖິງຄວາມຮັ່ງມີ.

3-1 ການຈັດ ມ້ອງຕຸມ້ອຍ (ຫ້ອງຮັບແຂກ)


(ຮູບ5-6) ແມ່ນຮູບຂອງຫົ້ງເຮັດຂຶ້ນຢູ່ມ້ອງຕູມ້ອຍຂອງຕະກຸນປະແລະ, ຫົວໜ້າຄອບຄົວຂອງບ້ານ ນີ້ເວົ້າວ່າ: ການທ້ອຍຂອງຫົ້ງໃນເຮືອນຫຼັງນີ້ແມ່ນຖືກຕ້ອງຕາມປະເພນີ ຂອງເຜົ່າກະໂດ ແລະ ປະໂກ ການ ທ້ອຍຫົ້ງຂອງເຮືອນຕະກຸນໂຕຣຍ ແມ່ນມີຄວາມແຕກຕ່າງຫຼາຍຢູ່ບ່ອນວ່າ ບໍ່ມີໄມ້ທ້ອຍ, ກໍລະນີຂອງຕະກຸນ ໂຕຣຍແມ່ນຈະທ້ອຍຖ້ວຍໄວ້ຢູ່ຂີ້ ບ່ອນຫ້ອງຮັບແຂກ (ມ້ອງຕູມ້ອຍ) ເລີຍ, ສ່ວນຕະກຸນປະແລະ ແມ່ນບໍ່ສົນ ນຳການເຮັດຮ້ານນ້ອຍ ແຕ່ຈະເຮັດໄມ້ທ້ອຍຍື່ນອອກມາເພື່ອທ້ອຍໃສ່ ກໍລະນີຂອງຕະກຸນໂຕຣຍ ແມ່ນເປັນ ແບບສະໄໝໃໝ່ເຊິ່ງບໍ່ແມ່ນວິທີໃນສະໄໝກ່ອນ ຈຸດພິເສດດັ່ງກ່າວມີສະແດງໄວ້ໃນ (ຮູບ 5-5).

1. ຢູ່ດ້ານເທິງສຸດແມ່ນມີກັບໄມ້ເກົ່າທ້ອຍຢູ່ ສ່ວນດ້ານໃນກັບຈະມີຖ້ວຍຂອງຫົວໜ້າຄອບຄົວ ຂອງພໍ່ແມ່ ວາງລຽນຢູ່ ສ່ວນທາງໃນກັບຈະບໍ່ໄດ້ມີຫຍັງໃສ່ ກັບໄມ້ສີຄັນດຳນີ້ແມ່ນ ຖືກນຳໃຊ້ມາຫຼາຍປີແລ້ວເມື່ອ ເວລາປູກເຮືອນຄືນໃໝ່ ກໍ່ຍັງນຳມາໃຊ້ຄືເກົ່າ ເວລາຈະເຮັດອາບາໄມໃຫ້ກັບໄມ້ນັ້ນຕ້ອງໄດ້ເສັ້ນຫວ້າຍ ຄວາຍໜຶ່ງໂຕ ໄມ້ທ້ອຍຖ້ວຍແມ່ນຈະມີຈັກອັນກໍ່ໄດ້ ແລະ ໃນກໍລະນີໃນຮູບນີ້ ແມ່ນມີຈຳນວນຂອງໄມ້ ທ້ອຍຢູ່ 4 ອັນລຽນກັນລົງມາຕາມລະດັບຫຼັງຄາ ລຳດັບຂອງການທ້ອຍ ແມ່ນຈະທ້ອຍຕາມລຳດັບຂອງ ຄວາມອາວຸໂສຂອງຄອບຄົວຕັ້ງແຕ່ເທິງລົງລຸ່ມ ສ່ວນລຳດັບທາງຂ້າງ ຈະບໍ່ກຳນົດຜູ້ ອາຍຸສູງຈະຢູ່ຊ້າຍ ຫຼື ຂວາ,ໄດ້ ແຕ່ຖ້ວຍຂອງຜົວເມຍຕ້ອງຢູ່ຕິດກັນ ເມື່ອຄົນພາຍໃນຄອບຄົວເພີ້ມຂຶ້ນ (ເກີດໄດ້3 ເດືອນ) ຫຼື ເວລາມີຄົນຕາຍ ຫົວໜ້າເຮືອນຈະເປັນຜູ້ອອກຄຳສັ່ງ ໃຫ້ທ້ອຍ ຫຼື ປົດຖ້ວຍນັ້ນອອກ ພ້ອມທັງເສັ້ນ ຫວ້າຍດ້ວຍໄກ່ ຫຼື ໝູ.


2. ຈາກກັບໄມ້ຂອງຫົວໜ້າເຮືອນ ຈະມີຖ້ານສີ່ຫຼ່ຽມທ້ອຍໃສ່ ແລະ ຢູ່ໃນຖ້ານນັ້ນຈະມີຖ້ວຍວາງຢູ່ ຖ້ວຍນີ້ ແມ່ນຖ້ວຍຂອງບັນພະບູລຸດທີ່ຕາຍໄປແລ້ວ ຢູ່ທາງຂ້າງຂອງຫົ້ງຈະມີຝາຍື່ນອອກມາ, ຢູ່ບ່ອນນີ້ມີໄຫຊຶ່ງ ແມ່ນມໍລະດົກ (ມີລາຄາເທົ່າຄວາຍ 2 ໂຕ) ໜ່ວຍໜຶ່ງ ແລະ ມີເຂົ້າຄວາຍ ມີບັ້ງໄວ້ສຽບທູບວາງໄວ້ຢູ່ ພື້ນ ໂດຍປົກກະຕິແລ້ວ ແມ່ນບໍ່ໃຫ້ແຕະຕ້ອງເຂົ້າຄວາຍທີ່ວາງຢູ່ໃນຫົ້ງນັ້ນ ມີແຕ່ເວລາເຮັດພິທີ “ຈະລະ ປົບ” ຈຶ່ງສາມາດຖືເອົາອອກໄປນອກໄດ້ ສຳລັບບັ້ງທູບແມ່ນໃຕ້ໃນເວລາເດືອນເພັ້ງ ແລະ ເດືອນດັບ ເພື່ອອະທິຖານຫາບັນພະບູລຸດ ແລະ ຈະບໍ່ໃຕ້ໃນໂອກາດອື່ນ ສ່ວນໄຫນັ້ນແມ່ນບໍ່ກ່ຽວຂ້ອງກັບຫົ້ງແລະ ສາມາດຈັບຕ້ອງໄດ້ແຕ່ວ່າຈະມີຂໍ້ຫ້າມບໍ່ໃຫ້ເຂົ້າໃກ້ ຫຼື ນອນຢູ່ໃກ້ຫົ້ງໄດ້.



(ຮູບ 5-3) ຮູບຮ່າງ ຂອງສັນຫຼັງຄາ ເຊິ່ງໝາຍເຖິງເຂດຂອງມ້ອງຕຸມ້ອຍໄວ້



(ຮູບ 5-4) ຮູບຮ່າງ ຂອງຝາຂັ້ນມ້ອງຕຸມ້ອຍ



(ຮູບ 5-5) ທາງໃນຂອງຫໍ້ງ

ໝາຍເຫດ: ເຂົ້າຄວາຍຂອງຕະກຸນປະແລະ ແມ່ນໄດ້ຮັບຕ່ໆກັນມາ ແລະ ເປັນຂອງມີຄ່າ ໂດຍທົ່ວໄປແລ້ວ ຈະຕັ້ງເຂົ້າຄວາຍໄວ້ບ່ອນເດ່ັ່ງກາງພື້ນຂອງຫໍ້ງ ຫຼື ອາດຈະມ້ຽນໄວ້ກາງຂ້າງຝາຂອງຫໍ້ງ, ຫໍ້ງຂອງຕະກຸນປະແລະ ຈະບໍ່ມີຄ້ອງ ແຕ່ວ່າຖືກຮັກສາໄວ້ຢູ່ນຳພໍ່ເຖົ້າໂວະແໜງ (ເຮືອນເລກທີ່13) ເຊິ່ງມີເຊື້ອສາຍຈາກຂຸນນາງມາຕັ້ງແຕ່ອານາຈັກເວ້ ປະເທດຫວຽດນາມ ຄ້ອງດັ່ງກ່າວເປັນຄ້ອງທີ່ເກົ່າແກ່ ປົກກະຕິແລ້ວຖ້າບໍ່ໄດ້ເສັ່ນຫວ້າຍ ສັດລ້ຽງແມ່ນຈະບໍ່ມີໂອກາດໄດ້ເຫັນ, ຕະກຸນໂວະແໜງຈະບໍ່ມີຕຳແໜ່ງຫຍັງ ແຕ່ເຫຼົ່າກັນວ່າຈະມີສິດຍ້ອນສາຍເລືອດທີ່ມີ ແລະ ໄດ້ຮັບຄວາມເຄົາລົບຈາກຄົນໃນບ້ານ.

3 -2 ການນຳໃຊ້ ມ້ອງຕຸມ້ອຍ (ຫ້ອງຮັບແຂກ)

ບໍລິເວນເຂດ ມ້ອງຕູມ້ອຍ ຈະແບ່ງອອກເປັນສອງເຂດ ເບື້ອງທີ່ມີທີ້ງ ແລະ ເບື້ອງທີ່ມີທາງເຂົ້າອອກ ຊຶ່ງ ມີເຂດແດນສະແດງໃຫ້ເຫັນຕາມພື້ນທາງລຸ່ມເອີ້ນວ່າ "ລັນລອງ" (ເຂດທາງຍ່າງ) ເດັກນ້ອຍທັ້ງຍິງ ແລະຊາຍ ໃນຕະກຸນດຽວກັນ ເມື່ອມີອາຍຸຮອດ15ປີ ແລ້ວຈະແຍກໄດ້ຫ້ອງນອນອອກຈາກພໍ່ແມ່ໄປຢູ່ຫ້ອງ ມ້ອງຕູມ້ອຍ ຖ້າໄດ້ແຍກນອນອອກຈາກຫ້ອງພໍ່ແມ່ເທື່ອໜຶ່ງແລ້ວ ກໍ່ບໍ່ສາມາດກັບມານອນຫ້ອງພໍ່ແມ່ ໄດ້ເປັນເທື່ອທີສອງ ອີກ ໃນກໍລະນີ ມ້ອງຕູມ້ອຍ ຂອງຕະກຸນປະແລະ ລູກຜູ້ຊາຍ ຈະນອນຢູ່ທາງໃກ້ກັບທາງເຂົ້າອອກ ສ່ວນລູກ ສາວຈະນອນບໍລິເວນທີ້ງຢູ່ທາງກ້ຳຕາເວັນຕົກ, ທັ້ງສອງຄົນຈະນອນຄົນລະເບື້ອງ ໂດຍຈະປິ່ນຕີນເຂົ້າຫາກັນ ແລະ ຫ້າມບໍ່ໃຫ້ທັ້ງສອງສົນທະນາກັນຢູ່ພາຍໃນຫ້ອງນັ້ນ ກໍລະນີຂອງຄົນເຜົ່າກະໂດບ້ານອື່ນກໍ່ເຊັ່ນດຽວກັນ ໃນຕອນທີ່ຄະນະໄດ້ພັກຄ້າງຄືນຢູ່ເຮືອນຕະກຸນປຣິນ ໃນບ້ານພິນເບນັ້ນ ສຳລັບຜູ້ຍິງຫ້າມບໍ່ໃຫ້ນອນຢູ່ເບື້ອງ ທີ້ງເຂົ້າຢູ່ທາງທິດຕາເວັນຕົກ ແຕ່ສຳລັບຕະກຸນປະແລະ ແມ່ນກົງກັນຂ້າມກັນ ຢູ່ໃນມ້ອງຕູມ້ອຍນີ້ ລູກອ້າຍ ລູກນ້ອງ ທີ່ມີເພດຕ່າງກັນແຕ່ມີເຊື້ອສາຍດຽວກັນກໍ່ຈະໃຫ້ນອນເຂດດຽວກັນໄດ້.

ເຖິງຢ່າງໃດກໍ່ຕາມຕັ້ງແຕ່ເກີດມາ ເມື່ອຖືກລ້ຽງຢູ່ໃນເຮືອນດຽວ ເປັນອ້າຍນ້ອງກັນແລະບໍ່ມີຄວາມຮູ້ສຶກ ວ່າແມ່ນເພດຕ່າງກັນ, ນອກຈາກນີ້ ກໍລະນີໃນສັງຄົມຂອງຄົນເຜົ່າກະໂດ ສຳລັບເຊື້ອສາຍດຽວກັນແລ້ວແມ່ນ ຈະຖືກຫ້າມບໍ່ໃຫ້ແຕ່ງດອງກັນ, ກົງກັນຂ້າມເວລາຄົນໃນຕະກຸນດຽວກັນຫາກເກີດມີຄວາມມັກຮັກກັນ ແລະ ໄດ້ລ່ວງເກີນກັນນັ້ນ ທັ້ງສອງຄົນກໍ່ບໍ່ສາມາດແຕ່ງດອງກັນໄດ້, ທາງຝ່າຍຍິງຈະເອົາສິ້ນຂອງຕົນເອງ ໃຫ້ແກ່ ຝ່າຍ ຊາຍ ແລະ ທາງຝ່າຍຊາຍ ກໍ່ຕ້ອງໄດ້ເສຍແບ້ ຫຼື ໝູ ໃຫ້ແກ່ທາງຝ່າຍຍິງ ເພື່ອເອົາເສັນຫວ້າຍທີ້ງທີ່ ຢູ່ໃນເຮືອນຫຼັງນັ້ນ ເພື່ອເປັນການຂໍໂທດໃນສິ່ງທີ່ໄດ້ຜິດພາດໄປແລ້ວ.

ນອກຈາກນີ້ ຕຳແໜ່ງຫົວໜ້າຄອບຄົວແມ່ນບໍ່ສາມາດປ່ຽນກັນໄດ້ ຈົນກ່ວາຫົວໜ້າຄອບຄົວຈະເສຍຊີວິດ ກໍລະ ນີ ເວລາທີ່ຫົວໜ້າຄອບຄົວໄດ້ໄປເຮັດວຽກຢູ່ສະຖານທີ່ຫ່າງໄກ ແລະ ດົນນານກໍ່ອາດຈະໃຫ້ຜູ້ເປັນນ້ອງມາເຮັດພິທີ ຕາງໜ້າກໍ່ໄດ້ ແຕ່ຈະບໍ່ມີການອະນຸຍາດນ້ອງ ຫຼື ໃຫ້ຜູ້ອື່ນມາເປັນຫົວໜ້າຄອບຄົວແທນ ແຕ່ໃນເມື່ອຫົວໜ້າຄອບຄົວ ຕາຍແລ້ວ ຜູ້ທີ່ເປັນລູກກົກກໍ່ສາມາດເປັນແທນໄດ້.

4. ການຢູ່ອາໄສຂອງຄອບຄົວ ແລະ ຊື່ຂອງບັນດາຫ້ອງພາຍໃນເຮືອນ

ຢ່າງໜ້ອຍໃນເວລາ 10 ຫາ 20 ປີກ່ອນ ເຜົ່າກະໂດແມ່ນໃຊ້ເວລາຢູ່ອາໄສຮ່ວມກັນ ຢູ່ກ້ອງຫຼັງຄາເຮືອນຍາວ ອັນດຽວກັນ ຢູ່ໃນລະບົບການດຳລົງຊີວິດແບບເອົາຜູ້ຊາຍເປັນຫຼັກ ໃນປະຈຸບັນນີ້ເຫັນວ່າຄົນເຜົ່າກະໂດທີ່ຢູ່ອ້ອມ ແອ້ມເມືອງສະໜ້ວຍນັ້ນ ໄດ້ເລີ້ມແຍກຄອບຄົວອອກຈາກເຮືອນໃຫ່ຍໃນຕະກຸນດຽວກັນ ສະພາບເຮືອນຍາວທີ່ມີໜຶ່ງ ຕະກຸນທີ່ຢູ່ໃນເຮືອນຫຼັງດຽວກັນ ເປັນຄອບຄົວໃຫຍ່ຕາມປະເພນີດັ້ງເດີມນັ້ນ ແມ່ນມີໜ້ອຍແລ້ວ ແລະ ໄດ້ມີຕົວຢ່າງ ເຮືອນຍາວຫຼາຍຫຼັງແບບເດີມ ແຕ່ບໍ່ມີຄົນຢູ່ເນື່ອງຈາກວ່າຄອບຄົວແຍກອອກໄປຢູ່ເຮືອນນ້ອຍຕ່າງ ຫາກ.

ໝາຍເຫດ. ຢູ່ໃນບົດນີ້ ເຮົາຈຳແນກປະເພດເຮືອນອອກເປັນ 3 ແບບ ໂດຍອີງຕາມການນຳໃຊ້

a. **ເຮືອນຍາວ**: ແມ່ນເຮືອນທີ່ມີການຢູ່ລວມກັນຂອງບັນດາກຸ່ມຄອບຄົວໃນຕະກຸນດຽວກັນຫຼືເຊື້ອສາຍດຽວກັນ ທີ່ຖືເອົາທາງພໍ່ເປັນຫຼັກ, ແຕ່ໃນປະຈຸບັນນີ້ ເຮືອນຍາວແມ່ນໄດ້ຕ່າງຈາກເຮືອນຍາວໃນສະໄໝກ່ອນທີ່ໃຫຍ່ ແລະມີການຢູ່ລວມກັນຂອງກຸ່ມຄົນຫຼາຍຄອບຄົວກາຍມາເປັນເຮືອນສະເພາະກຸ່ມຄອບຄົວ ທີ່ມີເຊື້ອສາຍໃກ້ ກັນ ເຖິງຢ່າງໃດກໍ່ຕາມ ກໍ່ຍັງມີເຮືອນຍາວທີ່ຍັງມີການອານຸລັກ ລັກສະນະຂອງເຮືອນຍາວແບບເດີມໄວ້ຢູ່.

b. **ເຮືອນຍາວກາງ**: ແມ່ນເຮືອນທີ່ຢູ່ອາໄສຂອງບັນດາຄອບຄົວທີ່ມີເຊື້ອສາຍໃກ້ກັນ ແຕ່ວ່າມີຄວາມແຕກຕ່າງກັບເຮືອນຍາວສະໄໝກ່ອນຢູ່ບ່ອນວ່າ: ໄດ້ມີການແບ່ງປະເພດຂອງຫ້ອງ ອອກຕາມການນຳໃຊ້ເຊັ່ນ: ຈາກຫ້ອງທີ່ເຄີຍເປັນທັ້ງຫ້ອງແຕ່ງກິນ ແລະ ຫ້ອງນອນ ແມ່ນກາຍມາເປັນຫ້ອງນອນສະເພາະ ແລະ ຢູ່ແຈຂອງເຮືອນຈະແມ່ນຫ້ອງແຕ່ງກິນຫຼືຫ້ອງກິນເຂົ້າທີ່ມີເຕົາໄຟ ສຳລັບຫ້ອງນ້ອງຕຸ້ມ້ອຍແມ່ນເປັນທັ້ງຫ້ອງຮັບແຂກ ແລະ ຫ້ອງພັກຜ່ອນຫຼັກຂອງຄົນໃນຄອບຄົວ.

c. **ເຮືອນນ້ອຍ**: ແມ່ນມີຈຳນວນຫ້ອງໜ້ອຍ ຕັ້ງແຕ່ 1 ຫ້ອງ, ເປັນເຮືອນທີ່ມີເນື້ອທີ່ນຳໃຊ້ບໍ່ສົມບູນ ມີຫ້ອງທີ່ມີເຕົາໄຟ ແຕ່ບໍ່ມີຫ້ອງຂອງນ້ອງຕຸ້ມ້ອຍຢ່າງຊັດເຈນ ບໍ່ມີລະບຽບຫ້ອງຄືບຄືກັບເຮືອນຍາວ.

ເຜົ່າກະໂດ ຈະມີລະບົບສັງຄົມແບບໃຫ້ຜູ້ຊາຍເປັນຫຼັກ ຈາກພໍ່ແມ່ແລະລູກ(ແຕ່ລະຄອບຄົວນ້ອຍ) ປະກອບກັນເຂົ້າເປັນຄອບຄົວໃຫຍ່ ແລະ ຢູ່ອາໄສກ້ອງຫຼັງຄາດຽວກັນໃນເຮືອນຍາວ ເວົ້າໃນທາງໜຶ່ງແມ່ນ ແຕ່ລະຄອບຄົວນ້ອຍຈະເປັນພາກສ່ວນໜຶ່ງຂອງຄອບຄົວໃຫຍ່ ແລະ ເປັນກຸ່ມຄອບຄົວໃໝ່ ທີ່ມີຂະໜາດໃຫຍ່ ເຊິ່ງຢູ່ໃນເຮືອນຫຼັງດຽວກັນ ແລະ ຫົວໜ້າຄອບຄົວ ຈະແມ່ນຂອດໃຫ່ຍຂອງຄອບຄົວ ເຖິງວ່າບັນດາຄອບຄົວນ້ອຍນັ້ນ ຈະມີພື້ນຖານການດຳລົງຊີວິດເປັນຄອບຄົວໃຜມັນກໍ່ຕາມ ໃນທາງໜຶ່ງກໍ່ສາມາດເວົ້າໄດ້ວ່າ ພຽງແຕ່ການດຳລົງຊີວິດປະຈຳວັນເທົ່ານັ້ນ ໃນເວລາມີງານພິທີກຳ ແລະ ງານບຸນຕ່າງໆນັ້ນ ຫົວໜ້າຄອບຄົວຈະເປັນຫລັກທັ້ງເລື້ອງເຈັບເປັນ ແລະເປັນທັ້ງຜູ້ຄວບຄຸມໃຫ້ເຮັດເລື່ອງຕ່າງໆ ໃນປະຈຸບັນນີ້ເມື່ອເວລາປຸກເຮືອນຄົນໃໝ່ແລ້ວ ສ່ວນຫຼາຍຈະນິຍົມປຸກແຍກອອກຈາກກັນ ເຖິງຢ່າງໃດກໍ່ຕາມ ທັ້ງນັ້ນຈະຖືກກຳນົດໃຫ້ຢູ່ເຮືອນ ຂອງຫົວໜ້າຄອບຄົວສະເໜີ ເວລາມີພິທີກຳ ກໍ່ຕ້ອງໄດ້ເຮັດຢູ່ເຮືອນທີ່ມີທັ້ງນັ້ນ ຊຶ່ງຍັງເປັນການຮັກສາສາຍສຳພັນລະຫວ່າງຄອບຄົວ ຖືເປັນຄວາມສຳຄັນທີ່ດີ.

ຄົນເຜົ່າກະໂດ ໃນເວລາກິນເຂົ້າຜູ້ຍິງ ແລະ ຊາຍຈະກິນຮ່ວມກັນ ສ່ວນຄົນກະໄນນັ້ນຈະມີປະເພນີ ເມື່ອຜູ້ຊາຍກິນແລ້ວຜູ້ຍິງຈຶ່ງຄ່ອຍໄດ້ກິນ ເຖິງຈະຢູ່ໃນສັງຄົມລະບົບຄອບຄົວທີ່ມີຜູ້ຊາຍເປັນຫຼັກກໍ່ຕາມ ໃນສາຂາຂອງຊົນເຜົ່ານັ້ນກໍ່ຍອມຮັບວ່າມີຄວາມແຕກຕ່າງກັນ ນອກຈາກນີ້ໃນເວລາແຕ່ງກິນຈະບໍ່ສາມາດເອົາໄມ້ມາດັງໄຟຢູ່ເຕົາໄຟທີ່ຢູ່ໃກ້ກັບທັ້ງ ຫຼື ຫ້ອງນອນຂອງພໍ່ແມ່ບໍ່ໄດ້ເດັດຂາດ ແລະ ຫ້າມບໍ່ໃຫ້ຫາມໄມ້ຟືນຜ່ານທາງປ້ອງຢ້ຽມ ຕ້ອງໄດ້ຫາມຜ່ານປະຕູຫຼັງບ້ານເທົ່ານັ້ນ, ແຕ່ກ່ອນຈະຮອດປະຕູທາງເຂົ້າມາຫາຫ້ອງນ້ອງຕຸ້ມ້ອຍ ຫຼື ຫ້ອງທີ່ມີທັ້ງ ຈະມີຂັ້ນໄດທາງຂຶ້ນ(ກຳປອງ)ກ່າຍໃສ່ພື້ນຫ້ອງຮັບແຂກ ແລະ ຫ້ອງນອນຂອງແຕ່ລະຄອບຄົວ ແຕ່ໃນປະຈຸບັນນີ້ຈະນິຍົມກັນເຮັດລະບຽງທາງຂຶ້ນ ຊຶ່ງເຮັດດ້ວຍໄມ້ລຽນກັນເປັນຮ້ານຫຼຸດຕ່ຳຈາກພື້ນເຮືອນເລັກນ້ອຍຢູ່ທາງເຂົ້າຫານ້ອງຕຸ້ມ້ອຍ ຊຶ່ງເຮັດໄວ້ສຳລັບການວາງເຄື່ອງ ແລະ ປົດເກີບກໍ່ເປັນຄວາມສະດວກອີກແບບ.

ຄອບຄົວນ້ອຍ ຊຶ່ງປະກອບມີຜົວເມຍແລະ ລູກຈະມີ 1 ຫ້ອງ ຢູ່ໃນເຮືອນຍາວນັ້ນ ຈະເປັນທັ້ງບ່ອນນອນເປັນທັ້ງບ່ອນປະກອບອາຫານແລະອື່ນໆ ໃນການດຳລົງຊີວິດໂດຍພື້ນຖານ ຢູ່ໃນຫ້ອງນີ້ຈະປະກອນມີເຕົາໄຟ ແລະ ບ່ອນແຕ່ງກິນ "ອາໂບອຸຍ" ຢູ່ທາງເທິງເຕົາໄຟຈະຫ້ອຍຮ້ານໄວ້ວາງເຄື່ອງ "ຕຽນ" ຢູ່ທາງກ້ອງຫຼັງຄາຈະມີບ່ອນຫ່ວາງເອົາໄວ້ເພື່ອເກັບມ້ຽນສິ່ງຂອງເອີ້ນວ່າ "ຕະລຶງ" ຢູ່ຕິດກັບຊາຍຄາຈະເຮັດຮ້ານໄມ້ຍື່ນອອກເອີ້ນວ່າ "ຢະ" ແຕ່ວ່າແບບຢ່າງຫ້ອງທີ່ມີເນື້ອທີ່ເຫຼືອເຟືອ ແລະ ເຮືອນໃໝ່ທີ່ຖືກສ້າງຂຶ້ນ ໃນປະຈຸບັນນີ້ເຮັດຫ້ອງຄົວທີ່ມີເຕົາໄຟ ແລະ ຫ້ອງນອນແຍກເປັນຄົນລະຫ້ອງ ມີຫລາຍໃນປະຈຸບັນ ໂດຍສະເພາະໃນກໍ່ລະນີເຮືອນທີ່ປຸກສ້າງໃໝ່ກໍ່ເຮັດແບບນີ້ຄືກັນ.

ຊື່ແຕ່ລະຫ້ອງ ຢູ່ໃນພາຍເຮືອນຍາວ ຂອງຄົນຊົນເຜົ່າກະໂດມີດັ່ງນີ້:

Mong Moi	ແມ່ນຫ້ອງໃຊ້ສຳລັບຕ້ອນຮັບແຂກແລະມີຢູ່ໃຈກາງດ້ານໜ້າຂອງເຮືອນ.
Mong Tu Moi Bi	ແມ່ນຫ້ອງນອນສຳລັບແຂກ
Mong Bi	ຫ້ອງນອນຂອງຄອບຄົວຄົນພິເສດ ຫຼື ຫ້ອງຮັບແຂກ.
A Bo A Am Bi	ຫ້ອງນອນຂອງພໍ່ແມ່ (ເປັນຫ້ອງສຳຄັນເປັນພິເສດພາຍໃນເຮືອນ).
A Bo Ku Mo Bi	ຫ້ອງນອນຂອງລູກສາວ.
A Bo Bi	ຫ້ອງນອນທົ່ວໄປ.
A Bo Ta Cha	ຫ້ອງສຳລັບປະກອບອາຫານ ແລະ ບ່ອນນອນ.
Dung Ta Cha	ຫ້ອງຄົວກິນ(ແຍກອອກຈາກເຮືອນໃຫ່ຍ ບໍ່ມີຫ້ອງນອນ)
A Bo Tu Took	ຫ້ອງບໍລິເວນທີ່ມີທ້ຳ(ບາງຄັ້ງຫ້ອງຫົວໜ້າຄອບຄົວມີທ້ຳຢູ່ເລີຍ)

ອຸປະກອນ ແລະ ເຄື່ອງໃຊ້ຕ່າງໆ:

A Bo Oui	ເຕົາໄຟ
Tu Ri Al	ຮ້ານຂາງໄຟ
Ta Rung	ຫ້ອງມ້ຽນເຄື່ອງ(ຢູ່ກ້ອງຫຼັງຄາ ພື້ນເປັນໄມ້ຫຼືໄມ້ໄຜ່)
Yah	ບ່ອນມ້ຽນເຄື່ອງ(ຢູ່ກ້ອງຊາຍຄາພື້ນເປັນແຜ່ນໄມ້ໄວ້ເກັບມ້ຽນໝໍ້)
Ta Lan Lung	ຝາດ້ານນອກ
Tan Lung	ຝາໃນເຮືອນ
An Trong	ລະບຽງທາງເຂົ້າອອກ
Kam Pong	ຂັ້ນໄດທາງເຂົ້າ
A Tang An Long	ປະຕູທາງເຂົ້າອອກ
Long Kyack	ປ່ອງຢ້ຽມ
Kan Diyap An Long Kryack	ບານປະຕູປ່ອງຢ້ຽມ
Ku Po An Long	ຂອບປະຕູ ແລະ ຂອບປ່ອງຢ້ຽມ

24/7 VII
ห้ามจำหน่าย

ບົດທີ 6

ບ້ານ ຂອງເຜົ່າກະໂດ ແລະ ການຢູ່ອາໄສ

ເຖິງແມ່ນວ່າການສຳຫຼວດນີ້ມີເວລາອັນສັ້ນ ແຕ່ໄດ້ສຳພາດແຕ່ລະເຮືອນແຕ່ລະຄອບຄົວຢ່າງລະອຽດ ກ່ຽວກັບສາຍພົວພັນຄອບຂອງຄົນໃນບ້ານ ກ່ຽວກັບການປະກອບເນື້ອທີ່ບໍລິເວນທີ່ຢູ່ອາໄສ ພ້ອມນີ້ກໍ່ມີບໍລິເວນທີ່ຢູ່ອາໄສ ການດຳລົງຊີວິດແບບຖາວອນ ຫຼື ການນຳໃຊ້ບໍລິເວນບ່ອນຄົວກິນ ຂໍ້ມູນທີ່ໄດ້ຈາກການສຳຫຼວດນີ້ ສາມາດເຂົ້າໃຈກ່ຽວກັບໂຄງຮ່າງບ້ານ ສະພາບເຮືອນແລະການດຳລົງຊີວິດ ດັ່ງນັ້ນຂໍ້ມູນເຫຼົ່ານັ້ນແມ່ນສ່ວນສຳຄັນໃນບົດນີ້ ແລະ ບົດທີ 6 ນີ້ ເວົ້າເຖິງຈຸດພິເສດຂອງຄົນເຜົ່າກະໂດ ໃນປະຈຸບັນຢູ່ໃນເມືອງສະໝ້ວຍ (ເບິ່ງຂໍ້ມູນລະອຽດໃນເອກະສານຕິດຄັດ).

1. ອົງປະກອບເນື້ອທີ່ບໍລິເວນຂອງບ້ານ ແລະ ທີ່ຕັ້ງຂອງບ້ານ.

ໂດຍສະເລ່ຍແລ້ວເງື່ອນໄຂຂອງສະຖານທີ່ ທີ່ຈະຕັ້ງຖິ່ນຖານ ຂອງຄົນເຜົ່າກະໂດໃນ 6 ບ້ານທີ່ໄດ້ລົງສຳຫຼວດນັ້ນ ຈະເປັນບໍລິເວນບ່ອນຮາບພຽງ ຍົກເວັ້ນໃນກໍລະນີຂອງຄົນບ້ານຕັ້ງໂກ ຢູ່ໃນບ້ານເຫຼົ່ານີ້ມີແຕ່ບ້ານພິນເບ ທີ່ມີລັກສະນະຂອບເຂດບ້ານເປັນເນື້ອທີ່ແບບວົງມົນ ບັນດາເຮືອນທີ່ປຸກລຽນກັນເປັນລະບຽບ ນອກຈາກນັ້ນອີກ 4 ບ້ານທີ່ມີເດີ່ນບ້ານ ແຕ່ບັນດາເຮືອນແມ່ນບໍ່ເປັນແຖວລະບຽບ ສຳລັບບ້ານຕັ້ງໂກແມ່ນມີລັກສະນະຂອງທີ່ຕັ້ງບ້ານ ເປັນເນີນຈາກສູງນັບຈາກທາງທິດໃຕ້ ເປັນຄ້ອຍຫລຸດລົງເລື້ອຍໆ ໄປຕາມທິດເໜືອ ເຮືອນຈະຕັ້ງຢູ່ຕາມສັນພູຕາມແລວ ຂອງທີ່ຕັ້ງບ້ານ ຊຶ່ງຈະປັ່ນທາງດ້ານໜ້າເຮືອນແຕ່ລະຫຼັງ ປັ່ນເຂົ້າຫາແກນກາງຂອງບ້ານ ເວົ້າສະເພາະແລ້ວລັກສະນະຂອງບ້ານ ແມ່ນເປັນເສັ້ນຊື ແລະເຮືອນແຕ່ລະຫຼັງຈະຖືກປຸກໄປຕາມລັກສະນະຂອງຂອບເຂດບ້ານ.

ສຳລັບບ້ານພິນເບ ແມ່ນຕັ້ງຢູ່ບໍລິເວນພູພຽງ ເຊິ່ງຈະມີຂອບເຂດເນື້ອທີ່ຂອງບ້ານເປັນຮູບສາມແຈ ເກີດຈາກການລຽນກັນບັນດາຂອງເຮືອນຍາວ ຢູ່ບໍລິເວນເດີ່ນບ້ານຈະເຫັນບັນດາເສົາຂ້າຄວາຍລຽນກັນຢູ່ ແລະ ທາງດ້ານຫຼັງຂອງບ້ານນັ້ນກໍ່ມີປ່າໄມ້ກວ້າງ ແລະ ເລົ້າເຂົ້າ ລັກສະນະຂອງບໍລິເວນບ້ານດັ່ງກ່າວ ເຮັດໃຫ້ເຮົາສາມາດມະໂນພາບຮູບຮ່າງຂອງບ້ານນັ້ນໄດ້ງ່າຍ ໃນບ້ານພິນເບກ່ອນຈະເຂົ້າສູ່ບໍລິເວນເດີ່ນບ້ານເຮົາຈະເຫັນເຮືອນ 4 ຫຼັງຕັ້ງຢູ່ ເຊິ່ງແມ່ນເຮືອນທີ່ຂະຫຍາຍອອກຈາກເຮືອນຍາວ ເນື່ອງຈາກການເພີ່ມຂຶ້ນຂອງຈຳນວນຄອບຄົວ.

ຢູ່ບໍລິເວນອ້ອມຮອບບ່ອນຢູ່ອາໄສນີ້ ຈຳເປັນຕ້ອງມີແມ່ນ້ຳເພື່ອໃຊ້ໃນການດຳລົງຊີວິດ ບັນດາສິ່ງແວດລ້ອມທີ່ມີຄຸນປະໂຫຍດຕໍ່ການດຳລົງຊີວິດນັ້ນເຊັ່ນວ່າ: ແມ່ນ້ຳ ຫ້ວຍນ້ຳ ຮ່ອມພູ ແລະ ພູເຂົາ ດັ່ງນີ້ເປັນຕົ້ນ ທຸກໆຢ່າງຈະຖືກຕັ້ງຊື່ໄວ້ໝົດ ແລະ ພວກເຂົາຈະໃຊ້ນຳກັນພາຍໃນບ້ານ ແລະ ບ້ານທີ່ໃກ້ຄຽງກັນ ໂດຍສະເພາະແລ້ວແມ່ນ້ຳແມ່ນສະຖານທີ່ ທີ່ຂາດບໍ່ໄດ້ຕໍ່ການດຳລົງຊີວິດປະຈຳວັນ ແລະ ເຮົາສາມາດໄດ້ເວົ້າວ່າເສັ້ນທາງໄປຫາບໍລິເວນ ແມ່ນ້ຳກໍ່ແມ່ນບໍລິເວນດຳລົງຊີວິດ ບໍລິເວນແມ່ນ້ຳບໍ່ເປັນພຽງແຕ່ເພື່ອ ການນຳໃຊ້ປະຈຳວັນເທົ່ານັ້ນ ແຕ່ເປັນພາກສ່ວນສຳຄັນ ແລະ ຂາດບໍ່ໄດ້ຂອງບໍລິເວນຢູ່ອາໄສ ແມ່ນ້ຳບໍ່ເປັນພຽງແຕ່ໃຊ້ໃນການແຕ່ງຢູ່ຄົວກິນ ການຊັກລ້າງ ຫຼື ອາບເທົ່ານັ້ນ ແຕ່ຍັງເປັນບ່ອນລອຍຫຼິ້ນຂອງເດັກນ້ອຍ ແລະ ເປັນແຫຼ່ງຫາປູຫາປານຳອີກ ໃນປະຈຸບັນຍັງຖືກນຳໃຊ້ເປັນບ່ອນຜະລິດກະແສໄຟຟ້ານຳອີກດ້ວຍ.

ບ້ານຕັ້ງໂກແລະບ້ານພິນເບນີ້ ຢູ່ໃນບໍລິເວນທາງເໜືອຂອງປ່າຂ້າງບ້ານ ແມ່ນທີ່ຕັ້ງຂອງບ່ອນຝັງສົບ "ປ໋ຽຄຸມຸຍ" ແລະ ຢູ່ທາງເໜືອຂອງບໍລິເວນຝັງສົບໄປອີກແມ່ນບ່ອນທີ່ຕັ້ງສານເຈົ້າຂອງຜີປ່າ, ນອກຈາກນີ້ເຖິງແມ່ນວ່າຄົນກະໂດ ຈະມີການແບ່ງທິດຕາເວັນອອກ ແລະ ທິດຕາເວັນຕົກຢ່າງຈະແຈ້ງ ຕາມການເຄື່ອນໄຫວຂອງຕາເວັນ ກໍ່ຕາມແຕ່ວິທີ

ການດັ່ງກ່າວນັ້ນບໍ່ໄດ້ເປັນຫຼັກການຫຍັງ ໃນການກຳນົດບໍລິເວນຂອງບ້ານ ແລະ ເຮືອນ ຖ້າສັງເກດເບິ່ງຮູບແບບຂອງ ບໍລິເວນທີ່ຢູ່ອາໄສແລ້ວ ບ້ານຕັ້ງໂກຈະມີສະຖານທີ່ແບບຈັດເປັນເສັ້ນຊື່ ແລະ ບ້ານພັນເບ ເປັນແບບວົງມົນ ແຕ່ວ່າ ທັງສອງບ້ານ ແມ່ນມີຄວາມຄິດໃນການເຮັດບ່ອນເຊື່ອມຕໍ່ລະຫວ່າງເດີ່ນບ້ານ ກັບ ທາງຍ່າງ ໃນບ້ານຄືກັນເຊັ່ນ:ເສັ້ນ ທາງຍ່າງໃນບ້ານ ແລະ ເດີ່ນບ້ານແມ່ນທາງດ້ານໜ້າ ແລະ ຈຳແນກກັບບໍລິເວນເນື້ອທີ່ທາງຫຼັງຢ່າງຈະແຈ້ງ ຢູ່ທາງ ເຂົ້າມ້ອງຕຸມ້ອຍ “ຫ້ອງຮັບແຂກ” ແມ່ນຢູ່ທາງດ້ານໜ້າ ແລະ ຫົ້ງ ແມ່ນຢູ່ກົງກັນຂ້າມກັບທາງເຂົ້າຢູ່ຂ້າງຝາ ສ່ວນ ເຮືອນນ້ອຍຂອງຫ້ອງແຕ່ງກິນ ຫຼື ຫ້ອງນອນຂອງລູກສາວທີ່ຍັງບໍ່ທັນແຕ່ງງານ ແມ່ນຢູ່ທາງຫຼັງ ເສົາທີ່ໃຊ້ເປັນບ່ອນຂ້າ ສັດໃນພິທີຕ່າງໆ ແມ່ນຢູ່ທາງກາງຂອງດ້ານໜ້າຂອງບ້ານ ແຕ່ວ່າໃນສະຖານທີ່ຂອງຮ້ານບູຊາເມື່ອງານສົບ ຫຼື ບ່ອນ ຈັດພິທີງານສົບ ແມ່ນຈະນຳໃຊ້ ບໍລິເວນທາງຫຼັງ ສ່ວນທາງໜ້າແມ່ນຫ້າມບໍ່ໃຫ້ໃຊ້ ເພາະສະນັ້ນທາງຍ່າງຂອງ ບ້ານ ຕັ້ງໂກ ແລະ ເດີ່ນກ້ວາງຂອງບ້ານພັນເບ ຈຶ່ງມີຄວາມແຕກຕ່າງກັນພຽງແຕ່ຮູບຮ່າງ ແຕ່ວ່າຄວາມຄິດໃນການຈັດບໍລິ ເວນຂອງເຮືອນແມ່ນຄືກັນ.

ເຖິງແມ່ນວ່າເຜົ່າກະໂດຈະເປັນສັງຄົມທີ່ມີລະບົບໃຫ້ທາງພໍ່ເປັນຫຼັກ ອີງຕາມການສຳຫຼວດແລ້ວກໍ່ບໍ່ພົບເຫັນຕົວ ຢ່າງບ້ານທີ່ມີແຕ່ 1 ຕະກຸນ ຈາກການສອບຖາມແລ້ວມີຄອບຄົວໜຶ່ງ (ຄອບຄົວຂອງຕະກຸນປະແລະ ໃນບ້ານຕັ້ງໂກ) ໄດ້ເຫຼົ່າວ່າ ໃນສະໄໝກ່ອນເຄີຍມີບ້ານທີ່ມີບັນດາຄອບຄົວຂອງຕະກຸນດຽວກັນຢູ່ ແຕ່ວ່າຈາກຜົນການ ສຳຫຼວດແລ້ວ ຄິດວ່າບັນດາໝູ່ບ້ານນັ້ນ ແມ່ນປະກອບດ້ວຍຫຼາຍຕະກຸນ ບ້ານຕັ້ງໂກແມ່ນປະກອບດ້ວຍ 10 ຕະກຸນ ບ້ານພັນເບ ມີ 5 ຕະກຸນ ຢູ່ໃນສອງບ້ານນີ້ ມີທັງຄອບຄົວໃຫຍ່ນ້ອຍລວມກັນຢູ່ ໃນປະຈຸບັນເກືອບທັງໝົດຂອງບັນດາຕະກຸນນ້ອຍ ນັ້ນ ແມ່ນຍົກຍ້າຍມາຢູ່ນຳເມື່ອເວລາ 30 ປີກ່ອນ ຖ້າເປັນຕະກຸນດຽວກັນແລ້ວ ສ່ວນຫຼາຍຕັ້ງເຮືອນໃກ້ກັນ ແລະແຕ່ ລະຕະກຸນຢູ່ເປັນກຸ່ມແບ່ງຈາກຕະກຸນອື່ນໃນບ້ານດຽວ.

ໃນນີ້ເມື່ອເບິ່ງຄວາມເປັນມາຂອງການແຍກເຮືອນ ກໍລະນີຕະກຸນປະແລະຢູ່ບ້ານຕັ້ງໂກ ມີເຮືອນລັກສະນະຍາວ ໃຫຍ່ຖືກມ້າງຍ້ອນເກົ່າ ແລະ ສ້າງເຮືອນຍາວນ້ອຍຢູ່ບໍລິເວນໃກ້ຄຽງແທນ ສ່ວນຕົວຢ່າງຂອງຕະກຸນປລິນ ຕະກຸນຕູ ເວນ ທີ່ຢູ່ບ້ານພັນເບນັ້ນ ຄອບຄົວຢູ່ໃນເຮືອນຍາວແມ່ນມີຈຳນວນເພີ້ມຂຶ້ນ ເຮັດໃຫ້ການຢູ່ອາໄສ ເກີດຄວາມຫຍຸ້ງ ຍາກ ດັ່ງນັ້ນຈຶ່ງແບ່ງອອກ ຍ້ອນເປັນດັ່ງນີ້ ໃນຊຸມປີຜ່ານມານີ້ບັນດາເຮືອນຍາວແມ່ນຖືກແຍກ ອອກເປັນເຮືອນຂອງ ຄອບຄົວນ້ອຍ ແຕ່ວ່າບັນດາຕະກຸນໄດ້ແຍກອອກມາກໍ່ປຸກເຮືອນໃກ້ກັນກັບຕະກຸນດຽວກັນ, ກໍລະນີ ນີ້ເຖິງແມ່ນວ່າ ຈະແຍກອອກຈາກເຮືອນຍາວກໍ່ຕາມ ແຕ່ກໍ່ຢູ່ບໍລິເວນໃກ້ກັນກັບຕະກຸນດຽວກັນ ໝາຍຄວາມວ່າ ຍັງມີການຍຶດໝັ້ນ ກັບການອາໄສຢູ່ເຮືອນຍາວ ເຖິງຢ່າງໃດກໍ່ຕາມຢູ່ໃນກຸ່ມຂອງຕະກຸນໜຶ່ງ ນັ້ນແມ່ນມີຫ້ອງມ້ອງຕູມ້ອຍ 1 ຫ້ອງ ຖ້າບໍ່ ລວມ ກໍລະນີຄອບຄົວທີ່ແຍກອອກຈາກກັນແລ້ວ ການໃຫ້ຄວາມສຳຄັນກັບການດຳລົງຊີວິດ ແລະ ປະເພນີໃນການຢູ່ ເຮືອນຍາວນັ້ນກໍ່ຍັງມີຢູ່ ແຕ່ດຽວນີ້ ກໍລະນີທີ່ມີການເຮັດຮ້ານບ່ອນຫ້ອຍຖ້ວຍ ໃສ່ກັບເຮືອນໃໝ່ຂອງຄອບຄົວທີ່ແບ່ງ ອອກມາເຊັ່ນ ເຮືອນຂອງຕະກຸນໂຕຣຍສະໄໝໃໝ່ ເຫດຜົນທີ່ເຮັດນັ້ນມີ 2 ອັນຄື: ທຳອິດແມ່ນອີງຕາມແບບລະ ບົບຂອງສັງຄົມກະໂດແລ້ວ ຖ້າຫາກຫຼາຍປີຜ່ານໄປແລ້ວການພົວພັນສາຍເລືອດຄົນລຸ້ນຕໍ່ມາ ນັ້ນກໍ່ມີຄວາມຈືດຈາງ ລົງໂດຍທຳມະຊາດ ຕ້ອງການສ້າງລະບົບການຈັດຕັ້ງຄົນໃໝ່ ອີກເຫດຜົນໜຶ່ງ ແມ່ນມີປະກົດການປ່ຽນແປງຂອງປະ ເພນີເຊັ່ນວ່າ ໄດ້ມີບັນດາຄົນທີ່ຍົກຍ້າຍໄປຢູ່ໃນຕົວເມືອງ ບ່ອນທີ່ມີຄວາມ ທັນສະໄໝຂຶ້ນ ດັ່ງນັ້ນການຢູ່ອາໄສ ແລະ ລະບົບຕະກຸນຂອງເຜົ່າກະໂດຈຶ່ງມີການປ່ຽນໄປ ໂດຍຫຼີກລ້ຽງບໍ່ໄດ້ ແລະ ການເຕົ້າໂຮມຂອງບັນດາຕະກຸນຕ່າງໆນັ້ນ ກໍ່ບໍ່ຄ່ອຍເຮັດຢ່າງເອົາຈິງເອົາຈັງຄືແຕ່ເກົ່າແລ້ວ, ແຕ່ກໍລະນີຕະກຸນປະແລະນັ້ນ ແມ່ນເຮືອນຍາວໄດ້ແຍກເປັນ 4 ຫຼັງ ແຕ່ຍັງຮັກສາປະເພນີຄື: ຢູ່ມ້ອງຕູມ້ອຍ (ຫ້ອງຮັບແຂກ) ມີຫົ້ງທີ່ຖ້ວຍຂອງໝົດທຸກຄົນໃນຕະກຸນ ແລະ ປະຕິບັດບຸນ ປະເພນີຕ່າງໆຢ່າງບໍ່ຂາດ, ສ່ວນການປ່ຽນແປງໃນຕະກຸນໂຕຣຍເກີດຂຶ້ນຍ້ອນສາຍເຫດດັ່ງກ່າວ.

2. ໂຄງສ້າງສັງຄົມທີ່ມີການຈຳກັດລຳດັບຂອງບໍລິເວນທີ່ຢູ່ອາໄສ ແລະ ບ້ານ

ເມື່ອສັງເກດສະພາບຂອງການເປັນດອງກັນແລ້ວ ກໍ່ສາມາດເຂົ້າໃຈເຖິງທີ່ຕັ້ງ ແລະ ການພົວພັນຂອງ ບັນດາ ເຮືອນແຕ່ລະຕະກຸນພາຍໃນບ້ານ ຖ້າເບິ່ງໂດຍລວມແລ້ວ ກໍລະນີທີ່ລູກສາວໄດ້ແຕ່ງດອງເປັນສະໄພ້ ຂອງບ້ານອື່ນ ນັ້ນຈະມີໜ້າຍກ່ວາ ການແຕ່ງດອງເປັນສະໄພ້ໃນບ້ານດຽວກັນ ມີແນວໂນ້ມວ່າການແຕ່ງດອງກັບຄົນບ້ານອື່ນ ມັກ ຖືກ ປະຕິບັດໂດຍໃນບ້ານ ຫຼື ຕະກຸນດຽວກັນເປັນປະເພນີມາຈົນເຖິງລຸ້ນຄົນປະຈຸບັນ ເຫດການແນວນີ້ອາດຈະເພື່ອ ສ້າງສາຍສຳພັນລະຫວ່າງບ້ານຕໍ່ບ້ານ ແລະ ຕະກຸນຕໍ່ຕະກຸນໃຫ້ໜັກແໜ້ນຕື່ມອີກ.

2-1. ໂຄງສ້າງສັງຄົມ ແລະ ບໍລິເວນທີ່ຢູ່ອາໄສ ຂອງບ້ານຕ້ງໂກ

(ຮູບ 6-1) ແມ່ນສະແດງການຮວບຮວມ ແລະການເຂົ້າເປັນອັນດຽວກັນ ຂອງແຕ່ລະຕະກຸນ ແລະສະແດງການ ເຕົ້າໂຮມ ແລະ ການຂະຫຍາຍຂອງລະບົບເຮືອນຍາວຂອງບ້ານຕ້ງໂກ ຢູ່ບ່ອນເໜືອສຸດແມ່ນບໍລິເວນ ຕະກຸນໂຕຣຍ ເຊິ່ງແມ່ນຕະກຸນໃຫຍ່ທີ່ສຸດ ແລະ ຢູ່ບ່ອນທາງເຂົ້າຂອງບ້ານແມ່ນບໍລິເວນຕະກຸນປະແລະ ເຊິ່ງໃຫຍ່ເປັນອັນດັບທີ 2 ຢູ່ໃນພາກສ່ວນທາງກາງຂອງບ້ານ ແມ່ນເຮືອນຂອງຕະກຸນປະຕະ ຕັ້ງຢູ່ບ່ອນເຊື່ອມຕໍ່ຂອງສອງຕະກຸນນັ້ນ ເຖິງແມ່ນ ວ່າບ້ານຕ້ງໂກຈະປະກອບມີ 10 ຕະກຸນ ແຕ່ວ່າອີກ 7 ຕະກຸນກໍ່ແມ່ນຕະກຸນນ້ອຍ ເຊິ່ງມີເຮືອນແຕ່ 1 ຫາ 2 ຫຼັງເທົ່າ ນັ້ນ ແລະ ປົນກັນຢູ່ໃນເຂດຂອງຕະກຸນປະຕະ ທາງກາງຂອງບ້ານ ເປັນສະຖານທີ ທີ່ເຮັດພິທີ ແລະ ງານບຸນຕ່າງໆ ມີ ເສົາຫລັກຂ້າຄວາຍ ຊຶ່ງຕັ້ງຢູ່ທາງທິດເໜືອເລັກນ້ອຍ ຄືກັບວ່າແມ່ນອານາເຂດຂອງຕະກຸນໂຕຣຍ.

ເພື່ອເປັນການທຳຄວາມເຂົ້າໃຈ ກ່ຽວກັບສາຍພົວພັນການແຕ່ງດອງ ລະຫວ່າງຄົນພາຍໃນບ້ານ ເຮົາໄດ້ສັງລວມ ສະແດງເປັນ(ຮູບ 6-2) ໂດຍອີງຕາມໂຄງຮ່າງບ້ານ ຕະກຸນໂຕຣຍ ຈະມີອາຍຸຫຼາຍກວ່າ 4 ຫາ 5 ຊົ່ວຄົນ ແລະ ໄດ້ຢູ່ ລວມນຳກັນ ເຊິ່ງໄດ້ສະແດງແບ່ງອອກເປັນ 2 ຈຸດ ໂດຍພິຈະລະນາຕາມເຊື້ອສາຍວົງຕະກຸນ ແລະ ຂອບເຂດການຢູ່ ອາໄສ ລູກສອນຊີ້ບອກລະຫວ່າງ 2 ຕະກຸນ ແມ່ນເລີ້ມຈາກຄອບຄົວຂອງສະໄພ້ເອງ ຫາບ່ອນທີ່ໄປເປັນສະໄພ້ ຢູ່ໃນ ຮູບນີ້ ໄດ້ສະແດງລາຍຊື່ຜູ້ແຕ່ງດອງຂອງແຕ່ລະຕະກຸນ ເຊິ່ງມີທັງຜູ້ທີ່ມີຊີວິດ ແລະ ຜູ້ເສຍຊີວິດ ຂອງຄົນບ້ານຕ້ງໂກ ລວມທັງຜູ້ທີ່ເປັນໝ້າຍ ຈຳນວນຄູ່ແຕ່ງດອງຢູ່ໃນບ້ານຕ້ງໂກ ມີທັງໝົດ 143 ຄູ່ ໃນນີ້ຄູ່ແຕ່ງດອງລະຫວ່າງ ບ້ານຕ່າງ ກັນມີ 91 ຄູ່ (ມີ 31ບ້ານ ຫຼື ເຂດ) ສ່ວນອີກ 52ຄູ່ ແມ່ນແຕ່ງດອງເອົາກັນຢູ່ໃນບ້ານດຽວກັນ ຮູບສະແດງແມ່ນບັນລະ ຍາຍເຖິງ ການພົວພັນຂອງຄອບຄົວ 52 ຄູ່ ຈາກຮູບນີ້ເຮົາຈະເຫັນຈຸດພິເສດຕໍ່ໄປນີ້.

1. ຢູ່ໃນ 3 ຕະກຸນໃຫຍ່ ໂຕຣຍ ປະແລະ ແລະ ປະຕະນີ້ ຄອບຄົວຕະກຸນໂຕຣຍ ແມ່ນ ເປັນຕະກຸນທີ່ໃຫຍ່ ແລະ ມີສາຍພົວພັນຢ່າງແໜ້ນແຟ້ນ ມີສະໄພ້ 27 ຄົນໃນບ້ານ ພິເສດແມ່ນຕະກຸນ ປະແລະ ມີສະໄພ້ທີ່ ມາຈາກຕະກຸນໂຕຣຍ ຢູ່ 9 ຄົນ ສາຍດຽວກັນ ນອກຈາກນີ້ ຕະກຸນໂຕຣຍ ມີສະໄພ້ ຕະກຸນຕ້ງໂກເຊິ່ງມີ ສາຍເລືອດມາຈາກເຜົ່າກະໂດ 4 ຄົນ ເຊິ່ງເຮັດໃຫ້ຕະກຸນໂຕຣຍໃຫຍ່ຂຶ້ນ ມັນເປັນທີ່ຈະແຈ້ງວ່າການພົວ ພັນກັນຂອງທັງ 3 ຕະກຸນນີ້ ແມ່ນເປັນໄປໂດຍມີການ ຮັບເອົາສະໄພ້ຂອງກັນແລະກັນ.
2. ມີ 6 ຕະກຸນນ້ອຍ ຍົກເວັ້ນຕະກຸນຕ້ງໂກ ບໍ່ມີສາຍພົວພັນການແຕ່ງດອງນຳກັນໃນ 6 ຕະກຸນນີ້ ແຕ່ວ່າມີ ສາຍພົວການແຕ່ງດອງກັບ ບັນດາ3 ຕະກຸນໃຫຍ່ຄື: ຕະກຸນໂຕຣຍ ຕະກຸນປະເລ ແລະ ຕະກຸນປະຕະ ຫາກຍົກເວັ້ນ ຕະກຸນຕິເມແລ້ວ ແມ່ນລ້ວນແຕ່ມີບັນດາຕະກຸນນ້ອຍ ທີ່ສ້າງສາຍສຳພັນການແຕ່ງດອງນຳ ກັນ ກັບຫຼາຍຕະກຸນໃຫຍ່ ຕົວຢ່າງ: ກໍລະນີຂອງຕະກຸນປວ້ຍ ແມ່ນມີສະໄພ້ຜູ້ໜຶ່ງໃຫ້ ແລະ ກໍ່ມີການຮັບ ສະໄພ້ ຜູ້ໜຶ່ງເອົາກັນກັບ 3 ຕະກຸນໃຫຍ່ ຈຶ່ງເຮັດໃຫ້ສາຍສຳພັນແໜ້ນແຟ້ນ ກໍລະນີຂອງ ຕະກຸນກາວາ ກໍ່ ມີການພົວພັນການແຕ່ງດອງ ກັບ ຕະກຸນໂຕຣຍຄືກັນ.

3. ກໍລະນີຂອງຕະກຸນນ້ອຍໄດ້ມີຕົວຢ່າງທີ່ເດັ່ນ ໃນການຮັບຮອງເອົາສະໄພ້ຈາກ 3 ຕະກຸນໃຫຍ່ ເຖິງແມ່ນວ່າກໍລະນີ ນີ້ຈະມີຢູ່ໜ້ອຍເຊັ່ນ: ຕະກຸນລະໄລ ແລະ ຕະກຸນອາແດງ ໄດ້ຮັບສະໄພ້ຈາກ 3 ຕະກຸນໃຫຍ່ ຝ່າຍດຽວ ແລະ ຕະກຸນຕິເນ (ມີພຽງ 1 ຄົນ) ຕະກຸນເປຣມ ມອບສະໄພ້ໃຫ້ 3 ຕະກຸນໃຫຍ່ຢ່າງຝ່າຍດຽວ ກໍລະນີຂອງຕະກຸນເປຣມແມ່ນຕະກຸນນ້ອຍ ມີແຕ່ເຮືອນຫຼັງດຽວແຕ່ວ່າໄດ້ສິ່ງສະໄພ້ໃຫ້ ຕະກູນປະແລະ ແລະຕະກຸນໂຕຣຍ ເຖິງ 5 ຄົນ ແລະ ບໍ່ໄດ້ເອົາສະໄພ້ຈາກທາງໃນບ້ານ ຢູ່ໃນຕະກຸນເປຣມນີ້ ມີສະໄພ້ 2 ຄົນທີ່ມີອາຍຸກາຍ 70 ປີ ແລະ ຖືໄດ້ວ່າເປັນຕະກຸນທີ່ໄດ້ຢູ່ໃນບ້ານຕັ້ງແຕ່ສະໄໝ ກ່ອນຍ້າຍມາເປັນບ້ານໃນປະຈຸບັນ ຖ້າບໍ່ນັບຕະກຸນເປຣມແລ້ວ ການທີ່ມີສາຍພົວພັນເປັນດອງ ຂອງຄອບຄົວນ້ອຍເຊິ່ງໄດ້ຮັບສະໄພ້ຈາກຕະກຸນໃຫຍ່ຂອງບ້ານຕ່າງໂກນີ້ ຫຼື ວ່າສິ່ງລູກສາວໄປເປັນສະໄພ້ໃຫ້ຕະກຸນໃຫຍ່ ຖືວ່າແມ່ນເປັນເງື່ອນໄຂທີ່ເຮັດໃຫ້ ຕະກຸນກາຍເປັນສະມະຊິກ ໜຶ່ງຂອງບ້ານ.

ບັນດາຈຸດພິເສດດັ່ງກ່າວ ໄດ້ຊີ້ບອກເຖິງການມີຜົນສະທ້ອນ ຂອງການມີຄວາມພົວພັນລະຫວ່າງຕະກຸນ ພ້ອມກັບ ການສ້າງອານາເຂດດຳລົງຊີວິດ ຂອງຕະກຸນທີ່ອາໄສຢູ່ໃນບໍລິເວນຂອງບ້ານກະໂດ ມັນອາດເວົ້າໄດ້ວ່າບໍລິເວນເນື້ອທີ່ບ້ານຕ່າງໂກມີລັກສະນະຂອງການພົວພັນກັນ ລະຫວ່າງບັນດາຕະກຸນໃຫຍ່ ແລະ ນ້ອຍ ຄືມີບໍລິເວນ 3 ຕະກຸນໃຫຍ່ ລຽນກັນ ແລະ ຢູ່ຂ້າງບໍລິເວນຕະກຸນໃຫຍ່ມີ 7 ຕະກຸນນ້ອຍຢູ່ ພ້ອມດຽວກັນນີ້ ກໍ່ສາມາດເວົ້າໄດ້ວ່າຮູບຮ່າງລັກສະນະຂອງບ້ານດັ່ງກ່າວ ແມ່ນລັກສະນະທີ່ເຮັດໃຫ້ສາຍພົວພັນທາງສາຍເລືອດຂອງບັນດາວົງຕະກຸນ ມີການຂະຫຍາຍໄປເລື້ອຍໆ.

2-2 ໂຄງສ້າງສັງຄົມ ແລະ ບໍລິເວນທີ່ຢູ່ອາໄສ ຂອງບ້ານພີນເບ

ໄດ້ມີການສຳຫຼວດບ້ານພີນເບ ຄືກັນກັບກໍລະນີຂອງບ້ານຕ່າງໂກ ບ້ານພີນເບແມ່ນມີຂະໜາດ ແລະ ຈຳນວນພົນລະເມືອງນ້ອຍກ່ວາ ແຕ່ວ່າມີຄວາມໜາແໜ້ນສູງ ດັ່ງທີ່ໄດ້ສະແດງຢູ່ໃນ(ຮູບ6-3) ເນື້ອທີ່ບໍລິເວນບ້ານແມ່ນມີດິນເປັນລັກສະນະທົ່ງພຽງ ແລະ ມີລັກສະນະຄືຮູບ 3 ແຈ ເຊິ່ງປະກອບດ້ວຍ ບ້ານຂອງຕະກຸນວຽນ ຕະກຸນປຣິນ ແລະ ຕະກຸນຕູເວນ ຕະກຸນນອ້ຍ ທີ່ມີເຮືອນພຽງ 1 ຫຼັງ ແມ່ນຕະກຸນຕະລໍ ແລະ ຕະກຸນດາງ ເຊິ່ງຍ້າຍຕື່ມເຂົ້າມາໃນບ້ານ ຫຼັງຈາກຕະກຸນຕະລໍ ແລະ ຕະກຸນດາງມີຂຶ້ນ ແຕ່ວ່າເຮືອນບໍ່ໄດ້ຢູ່ແຄມເດີ່ນບ້ານ ຢູ່ທີ່ທາງຫຼັງຂອງຕະກຸນປຣິນ ເຮືອນຍາວ 2 ຫຼັງ ຂອງຕະກຸນວຽນ ຢູ່ທາງຕາເວັນອອກສຽງເໜືອຂອງບ້ານ ແລະ ທາງຫຼັງເຮືອນຍາວ 2 ຫຼັງ ຂອງຕະກຸນວຽນ ບໍ່ເໝາະສົມຕັ້ງເຮືອນ ເພາະວ່າເປັນບໍລິເວນເຈ້ຍພູ ຢູ່ທາງຫຼັງເຮືອນມີຕົ້ນໄມ້ໃຫຍ່ ແລະ ຈາກນີ້ເປັນບໍລິເວນເຈ້ຍພູທີ່ບໍ່ຊັນ ແລະ ມີຫຍ້າປະມານ 200 ແມັດ ຈະຮອດແມ່ນ້ຳອາວາວ.

ບ້ານພີນເບແມ່ນມີປະຫວັດຍ້າຍບ້ານມາໄດ້ ຫຼາຍກ່ວາ 30 ປີເທົ່າກັບບ້ານຕ່າງໂກ ຜ່ານການສຳຫຼວດໂດຍການສອບຖາມຄົນພາຍໃນບ້ານ ລັກສະນະຂອງບ້ານກັບການປ່ຽນແປງ ຫຼັງຈາກການຍົກຍ້າຍບ້ານອາຍຸຂອງເຮືອນແລະ ວົງຕະກຸນ ຜ່ານມາສາມາດອະທິບາຍໄດ້ດັ່ງຕໍ່ໄປນີ້: ກ່ອນອື່ນເຮົາຈະເວົ້າວ່າ ເຮືອນທີ່ໄດ້ສ້າງແຕ່ເມື່ອສະໄໝລິເລີ່ມສ້າງຕັ້ງບ້ານມາ ແມ່ນມີພຽງເຮືອນຫຼັງດຽວ ເຊິ່ງເປັນຂອງຕະກຸນປຣິນ (ເຮືອນເລກທີ9)ເທົ່ານັ້ນ ໃນການກໍ່ສ້າງເຮືອນຫຼັງດັ່ງກ່າວ ແມ່ນໄດ້ນຳໃຊ້ໄມ້ໃຫຍ່ ເປັນຈຳນວນຫຼວງຫຼາຍ ແລະ ເຊິ່ງຈັດໄດ້ວ່າເປັນເຮືອນທີ່ມີລັກສະນະພິເສດໃນບັນດາເຮືອນຂອງເຜົ່າກະໂດ ເພາະວ່າໂດຍປົກກະຕິແລ້ວເຮືອນບໍ່ຄົງດົນທຸກໆ10ປາຍປີ ຕອ້ງມ້າງ ແລະ ສ້າງໃໝ່ ເມື່ອນັບທັ້ງບ້ານຕ່າງໂກແລ້ວ ເຮືອນດັ່ງກ່າວແມ່ນບໍ່ສາມາດຫາຊິມໄດ້ຢູ່ໃສອີກແລ້ວ.


ໃນເວລາເຕົ້າໂຮມກັນເປັນບ້ານນັ້ນ ມີຕະກຸນວຽນ ຢູ່ທາງທິດຕາເວັນອອກສຽງເໜືອ ຕະກຸນປຣິນ ແລະ ຕະກຸນຕູເວນ ຢູ່ທາງທິດໃຕ້ໄດ້ສ້າງເຮືອນຍາວຂຶ້ນຕາມລຳດັບ ໃນແຖວໜຶ່ງກ່ອນຂອງເນື້ອທີ່ລັກສະນະຮູບສາມແຈ (ມີທິດເໜືອ ແລະ ທິດໃຕ້) ບໍ່ໄດ້ປຸກເຮືອນຫຼາຍເປັນບໍລິເວນແບບເປີດໂລ່ງໄວ້ ແຕ່ວ່າໃນເວລານັ້ນກໍ່ມີແຜນການສ້າງ

ເຮືອນຢູ່ອາໄສແຖວນັ້ນ ແລະ ເມື່ອເວລາຜ່ານໄປ ຄອບຄົວທີ່ແຍກອອກຈາກ ຕະກຸນປຣິນ ໄດ້ສ້າງເຮືອນເທື່ອລະ ໜ້ອຍ ແລະ ໄດ້ປະກອບສ້າງຮູບສາມແຈຄື ໃນປະຈຸບັນ ເຫດການແນວນີ້ໝາຍຄວາມວ່າ ໄດ້ມີການຕັດສິນກຳນົດ ເນື້ອທີ່ຂອງເດີ່ນບ້ານ ແລະ ຈຳກັດ ຈຳນວນຫຼັງທີ່ສາມາດສ້າງໄດ້ຢູ່ຕາມແຄມເນື້ອທີ່ຮູບສາມແຈນັ້ນ ຍ້ອນແນວນີ້ 2 ຕະກຸນອື່ນ ກໍ່ມີຄວາມຄວາມຫຍຸ້ງຍາກໃນການຕັ້ງເຮືອນ ບໍລິເວນອ້ອມຮອບເຮືອນເຂົ້າເຈົ້າກໍ່ເລີຍຕ້ອງສ້າງເຮືອນ ຢູ່ ແຖວທາງເຂົ້າຂອງບ້ານ ໂດຍສະເພາະແລ້ວກໍລະນີຂອງຕະກຸນຕູເວນ ຊຶ່ງຢູ່ໃນເງື່ອນໄຂການປຸກເຮືອນທີ່ຄວາມຫຍຸ້ງ ຍາກຄືລອງກ້ວາງຕໍ່ກັບບໍລິເວນເດີ່ນແຄບຢູ່ແລ້ວ ແລະ ໄດ້ແຍກຂະຫຍາຍເຮືອນອອກຢູ່ດ້ານຫຼັງເຮືອນເດີມ ຊຶ່ງແມ່ນ ແຖວໃກ້ໆຖະໜົນ ມີພຽງແຕ່ເຮືອນເລກທີ 6 ຊຶ່ງເປັນເຮືອນຕະກຸນຕູເວນ ຢູ່ນອກອານາເຂດຂອງຕະກຸນເອງ ຢູ່ ທີ່ທາງທິດຕາເວັນຕົກສຽງເໜືອຂອງອານາເຂດຕະກຸນ ທີ່ອ້ອມຮອບບໍລິເວນເດີ່ນບ້ານ ເຮົາຄາດໄດ້ວ່າເຫດຜົນຂອງ ເຫດການນີ້ຄື: ເມຍຂອງຄອບຄົວຢູ່ເຮືອນເລກທີ 6 ມາຈາກ ຕະກຸນວຽນ ຢູ່ເຮືອນເລກທີ 1 ເປັນລູກສາວຂອງຫົວໜ້າ ເຮືອນຢູ່ບ້ານພັນເບ ບໍ່ຄ່ອຍມີການແຕ່ງກັນໃນບ້ານຄືເຫດການດັ່ງກ່າວ ຢ່າງໃດກໍ່ຕາມການຈັດຕັ້ງໂຄງສ້າງບ້ານດັ່ງ ກ່າວສະແດງໃຫ້ເຫັນວ່າ ຕະກຸນຕູເວນ ຢູ່ໃນສະພາບທີ່ສະດວກໃນການດຳລົງຊີວິດ ແລະ ເຮັດພິທີການຕ່າງໆ.


ເພື່ອເປັນການທຳຄວາມເຂົ້າໃຈ ກ່ຽວກັບການພົວພັນຂອງແຕ່ລະຕະກຸນ ດັ່ງດຽວກັນນັ້ນ(ຮູບ6-4)ໄດ້ຖືກສະແດງ ຂຶ້ນມາເພື່ອອະທິບາຍການຈັດລຳດັບ ຂອງການພົວພັນການແຕ່ງດອງຂອງເຮືອນຢູ່ໃນບໍລິເວນບ້ານ ແຕ່ວ່າໃນກໍລະ ນີຕະກຸນວຽນນີ້ ຄອບຄົວທັງໝົດເຊິ່ງຢູ່ມາໄດ້ຫຼາຍລຸ້ນຄົນແມ່ນມີຢູ່ທຸກໆເຮືອນ ແລະ ສ່ວນກໍລະນີ ຕະກຸນປຣິນແມ່ນ ສອງຄອບຄົວ ເຮືອນເລກທີ 4 ແລະ 5 ມີການພົວພັນກັບເຮືອນເລກທີ 9 ເຊິ່ງເປັນເຮືອນຫຼັກມາໄດ້ ຫຼາຍລຸ້ນຄົນແລ້ວ ລູກສອນທີ່ຕໍ່ຕະກຸນ ແມ່ນສະແດງເຖິງການພົວພັນການແຕ່ງດອງບ່ອນເລີ່ມຕົ້ນ ຂອງຕະກຸນທີ່ເມຍເກີດ ແລະ ຕໍ່ໄປ ແມ່ນຕະກຸນທີ່ເຂົ້າເປັນສະໃພ້ຮູບທີ່ຕິດຄັດ ແມ່ນອະທິບາຍຕາມອາຍຸຂອງເວລາການສຳຫຼວດກ່ຽວກັບ ຕົວຢ່າງ ທັງ ໝົດຂອງການພົວພັນການແຕ່ງດອງ ທີ່ສາມາດເກັບກຳມາໄດ້ ໃນບ້ານພັນເບ ລວມທັງພໍ່ແມ່ຜູ້ທີ່ໄດ້ລ່ວງລັບໄປແລ້ວ ແລະ ຄົນໃນລຸ້ນປະຈຸບັນ ແຕ່ວ່າອາຍຸຂອງຜູ້ຕາຍແມ່ນຖືກບັນທຶກແບບຄາດເດົາເອົາ ຈາກບັນດາຮູບສາມາດສະຫຼຸບ ໄດ້ຄື:

1) ສຳລັບບ້ານພັນເບ ແມ່ນແຕກຕ່າງກັບບ້ານຕົ້ງໂກ ແລະ ບໍ່ມັກການແຕ່ງງານກັບຄົນໃນບ້ານ ໃນທັງໝົດ50ຄູ່ ມີຄູ່ແຕ່ງດອງກັບບ້ານອື່ນເຖິງ 45 ຄູ່ ສ່ວນຄູ່ພາຍໃນມູ່ບ້ານມີພຽງແຕ່ 4 ຄູ່ ເຊິ່ງບໍ່ຮອດ 10% ແຕ່ຜູ້ຍິງທີ່ຕາຍ ຈາກຜົວໄປມີພຽງ 1 ຄົນເທົ່ານັ້ນ ຍິ່ງໄປກ່ວານີ້ ໂດຍອີງຕາມການສອບຖາມແລ້ວ ຜູ້ຍິງທີ່ເຮົາຮູ້ເຊື້ອສາຍມີຜູ້ ໜຶ່ງແລະ ທັງໝົດມີພຽງ 6 ຄູ່ເທົ່ານັ້ນ ເມື່ອທຽບກັບບ້ານຕົ້ງໂກທີ່ມີຄູ່ແຕ່ງງານ ລະຫວ່າງຄົນພາຍໃນບ້ານເຖິງ 40% ແລ້ວເຫັນວ່າຍັງມີໜ້ອຍຫຼາຍ ບ້ານພັນເບ ມີ 3 ຕະກຸນໃຫຍ່ ເຊິ່ງຢູ່ມາດົນຕັ້ງແຕ່ສະໄໝຍົກຍ້າຍບ້ານ ມາແຕ່ເປັນຕະກຸນທີ່ມີຄວາມສຳພັນການແຕ່ງດອງຈິດຈາງ ແລະ ບໍ່ເລິກເຊິ່ງ 45 ຄູ່ທີ່ແຕ່ງດອງກັບ ຄົນນອກ ບ້ານ ແລະ ບ້ານເກີດຂອງສະໃພ້ທັງໝົດມີ 25 ບ້ານ ແລະ ມີຫຼາຍກໍລະນີ ທີ່ຢູ່ຮວມກັນໃນຕະກຸນດຽວເຊັ່ນ ມາຈາກບ້ານປັນໄຕ(9 ຕົວຢ່າງ) ບ້ານລາວາ(5 ຕົວຢ່າງ) ບ້ານຕະລະ(5 ຕົວຢ່າງ) ແລະອື່ນໆ ບ້ານເກີດຂອງ ບັນດາສະໃພ້ຈະມີຫຼາກຫຼາຍຂຶ້ນ ໝາຍເຖິງສາຍພົວພັນກັບນອກບ້ານບໍ່ໄດ້ເປັນສາຍສຳພັນລະຫວ່າງຕະກຸນ ສະເພາະ.

2) ເມື່ອສັງເກດເບິ່ງ 4 ຄູ່ ທີ່ແຕ່ງກັນພາຍໃນບ້ານ ເຫັນວ່າອາຍຸຂອງສະໃພ້ແມ່ນນ້ອຍປະມານ 20-30 ປີ ສ່ວນ 2 ຄູ່ ທີ່ໄດ້ແຕ່ງດອງມາຕັ້ງແຕ່ອາດີດປະມານ 60 -80 ປີ ເຊິ່ງໄດ້ຢູ່ຮ່ວມກັນຫຼາຍກວ່າ ເຄິ່ງສັດຕະວັດແລ້ວ (ຮູບ6-4) ໄດ້ສະແດງວ່າລະຫວ່າງປະຈຸບັນກັບອາດີດ ສາຍພົວພັນການແຕ່ງດອງກັນໃນບ້ານ ປ່ຽນແປງເປັນ ທິດປີ້ນກັນບ້ານພັນເບແມ່ນບ້ານນ້ອຍ ດັ່ງນັ້ນເພື່ອຮັກສາສັງຄົມຈຶ່ງຖືວ່າການແຕ່ງດອງກັນກັບຄົນນອກບ້ານ ມີຄວາມສຳຄັນ ໃນສະພາບດັ່ງກ່າວນີ້ ຍັງມີການແຕ່ງດອງຢູ່ພາຍໃນບ້ານ ຜົນການສຳຫຼວດນັ້ນ



(ຮູບ 6 -1) ສະແດງກຸ່ມຕະກຸນຂອງຄົນ ໃນບ້ານຕ້ງໂກ



- ລູກສອນ ແມ່ນສະແດງທິດທາງທີ່ຍ້າຍໄປເປັນລູກສະໃພ້.
- ລູກສອນໃຫຍ່ ແມ່ນບອກຈຳນວນຂອງລູກໃພ້ ຈາກນອກບ້ານ

ແຕ່ງກັບຄົນໃນບ້ານ	52 ຕົວຢ່າງ
ແຕ່ງກັບຄົນນອກບ້ານ	91 ຕົວຢ່າງ

(ຮູບ 6-2) ສາຍພົວພັນທາງຄອບຄົວຂອງຄົນໃນບ້ານຕ້ງໂກ

ມີໜ້ອຍ ບໍ່ພຽງພໍຈຶ່ງບໍ່ໄດ້ມີຄວາມເຫັນຢ່າງແໜ້ນແຟ້ນ ແຕ່ວ່າອາດຈະເວົ້າໄດ້ວ່າ ການແຕ່ງດອງຢູ່ພາຍໃນ ບ້ານຂອງກໍລະນີ້ບ້ານພິນເບ ແມ່ນເພື່ອຮັກສາຄວາມສົມດຸນ ໃນສາຍພົວພັນການແຕ່ງດອງທີ່ຖືກຈຳກັດ ເຖິງ ວ່າໂຄງສ້າງບ້ານພິນເບບໍ່ໄດ້ສະທ້ອນຄວາມສຳພັນ ລະຫວ່າງແຕ່ລະຕະກຸນໂດຍກົງຄືກັບບ້ານຕົງໂກກໍ່ຕາມ ບັນດາຕະກຸນ ໄດ້ສ້າງບໍລິເວນຂອບເຂດການດຳລົງຊີວິດເປັນຕະກຸນ ເປັນກຸ່ມ ນອກຈາກກໍລະນີຂອງຕະກຸນ ຕູເວນ ເຊິ່ງມີເຮືອນຢູ່ບ່ອນຫ່າງ ແລະ ເບ້ືອງກົງກັນຂ້າມຂອງເດີ່ນບ້ານ ບໍລິເວນອານາເຂດທີ່ອ້ອມຮອບເດີ່ນ ບ້ານຖືກແບ່ງ ແລະ ໃຊ້ໃນການດຳລົງຊີວິດດ້ວຍແຕ່ລະຕະກຸນຢ່າງຈະແຈ້ງ ສະພາບແນວນີ້ໄດ້ສະແດງວ່າ ຍັງຄົງມີການດຳລົງຊີວິດແບບຢູ່ໃນເຮືອນຍາວ ໃນສະພາບປະຈຸບັນຂອງຄົນເຜົ່າກະໂດ ຄວາມສຳພັນການ ແຕ່ງດອງ ພາຍໃນບ້ານຈະເປັນແນວໃດກໍ່ຕາມ ແຕ່ປະເພນີຕາມດຳລົງຊີວິດ ລະບົບເຮືອນຍາວຍັງສືບທອດ ມາຢ່າງແໜ້ນແຟ້ນ ແລະ ໃຫ້ອິດທິພົນຕໍ່ກັບໂຄງສ້າງບ້ານໃນຕະກຸນຫຼາຍຂຶ້ນ.

2-3. ໂຄງສ້າງສັງຄົມ ແລະ ບໍລິເວນທີ່ຢູ່ອາໄສ ຂອງເຜົ່າກະໂດ

ໃນນີ້ບໍ່ພຽງແຕ່ຮູບຮ່າງຂອບເຂດຂອງບ້ານຕົງໂກ ແລະ ບ້ານພິນເບ ທີ່ມີຄວາມແຕກຕ່າງກັນເທົ່ານັ້ນ ແຕ່ໃນ ທາງໂຄງສ້າງສັງຄົມແລ້ວແມ່ນມີຄວາມແຕກຕ່າງກັນຫຼາຍ ດັ່ງທີ່ໄດ້ບັນຍາຍມາກ່ອນນີ້ສາມາດເວົ້າໄດ້ວ່າຄວາມຄິດ ໃນການຈັດແຈງເນ້ືອທີ່ ບໍລິເວນບ້ານແມ່ນຄືກັນ ແຕ່ຖ້າສັງເກດເບ່ິງໂຄງສ້າງສັງຄົມຂອງສອງບ້ານ ກ່ຽວກັບເລ້ືອງ ສາຍສຳພັນການແຕ່ງດອງແລ້ວ ເຫັນວ່າມີຄວາມແຕກຕ່າງກັນຫຼາຍ ຄຽງຄູ່ກັນນີ້ ເຖິງຈະເວົ້າວ່າມີການນິຍົມເອົາສະ ໃພ້ມາຈາກບ້ານອ່ືນ ແຕ່ກໍລະນີຂອງບ້ານຕົງໂກ ກໍ່ມີການປ່ຽນແປງກົດເກນເທ່ືອລະໜ້ອຍ ໃນການມີສາຍພົວພັນ ແຕ່ງດອງຊ່ຶງຮັບເອົາສະໃພ້ພາຍໃນບ້ານ ສ່ວນກໍລະນີບ້ານພິນເບ ເຫັນໄດ້ວ່າການແຕ່ງດອງ ກັບຄົນໃນບ້ານແມ່ນບໍ່ ຖືກສະໜັບສະໜູນ ແຕ່ການແຕ່ງດອງກັບຄົນນອກບ້ານແມ່ນຖືກສະໜັບສະໜູນ.

ນອກຈາກນ້ີເມ່ືອລວມທັງ ຂໍ້ມູນຂອງບ້ານທ່ີໄດ້ສຳຫຼວດແລ້ວ ຢູ່ບ້ານກະໂດນ້ັນ ໃນໝ່ໍໆນ້ີແມ່ນຢູ່ໃນໄລຍະກຳລັງ ມີການປ່ຽນແປງ ເຊ່ິງເຮືອນຍາວໄດ້ຖືກແຍກເຮັດເປັນເຮືອນຍາວກາງ ແລະເຮືອນນ້ອຍ ເຖິງແມ່ນວ່າການແບ່ງຕ່ືອນ້ີ ຈະມີລັກສະນະວິທີດກໍ່ຕາມ ປະເພນີຂອງເຮືອນທ່ີມີທ້ຳບູຊາ ກໍ່ຍັງມີຢູ່ເຮືອນຂອງຫົວໜ້າຕະກຸນ ເພາະສະນ້ັນເຖິງ ແມ່ນວ່າ ມີການປ່ຽນການຢູ່ອາໄສຈາກເຮືອນຍາວຫຼັງດຽວ ມາເປັນແບບມີເຮືອນຍາວກາງ ແລະ ເຮືອນນ້ອຍ ກໍ່ຕາມ ແຕ່ບັນດາປະເພດຕ່າງໆ ເຊ່ັນ ການສ້າງທ້ຳກໍ່ຍັງຖືກສືບຕໍ່ປະຕິບັດຢູ່.


3. ການປະກອບຂອງເນ້ືອທ່ີຂອງເຮືອນຍາວ ແລະ ການຢູ່ອາໄສ

ອີງຕາມການສຳຫຼວດສອບຖາມແລ້ວ ເວົ້າກັນວ່າເຮືອນຍາວທ່ີມີຂະໜາດຍາວຫຼາຍ ເຮືອນໃນແຕ່ກ່ອນມັນບໍ່ມີ ຄວາມຈຳເປ້ັນ ທ່ີຈະສົມທຽບກັບບ້ານຍາວຂອງບ້ານປ້ັນໄຕກໍ່ໄດ້ ແລະ ເປ້ັນທ່ີແນ່ນອນວ່າເປ້ັນເວລາສິບໆປ ກ່ອນນ້ີ ແຕ່ລະຕະກຸນຂອງເຜົ່າກະໂດແມ່ນອາໄສຢູ່ເຮືອນຍາວຂອງໃຜມັນ ແຕ່ວ່າຈາກການສອບຖາມແລ້ວ ບໍ່ສາມາດທ່ີຈະ ສັງລວມລັກສະນະຂອງເນ້ືອທ່ີບໍລິເວນ ແລະ ຮູບຮ່າງຂອງເຮືອນໃນແຕ່ກ່ອນໄດ້ ຢູ່ໃນການສຳຫຼວດສ່ວນປະກອບ ຂອງເນ້ືອທ່ີບໍລິເວນເຮືອນຍາວ ແລະ ວິທີການຢູ່ອາໄສຂອງສອງບ້ານນ້ີ ໄດ້ມີການຄາດເດົາສະພາບ ແລະ ການຢູ່ອາ ໄສຂອງເຮືອນຍາວໃຫຍ່ໃນສະໄໝກ່ອນ ໂດຍໄດ້ຄາດເດົາ ຂ້ັນຕອນການປ່ຽນແປງ ແລະ ການປ່ຽນແປງຂອງວິທີ ການ ຢູ່ອາໄສໃນເຮືອນ.


3-1. ການຢູ່ອາໄສທ່ີມີການປ່ຽນແປງຫຼາຍແບບ ແລະ ເຮືອນຍາວຂອງບ້ານຕົງໂກ

ເຮືອນຍາວຂອງບ້ານຕົງໂກນ້ີ ປະກອບມ ີ 2ປະເພດ ແບບທ ຳອິດແມ່ນຈະມ ີບ ັນດາຫ ້ອງຕ ່ ຽງເປ ັນແຖວດ ຽວ

ກັນ (ຕໍ່ລຽນກັນແລະ ເປັນແຖວດຽວ) ແບບທີ 2 ແມ່ນ ຈະມີທາງຍ່າງ ຫຼື ບໍລິເວນໂລ່ງແບ່ງລະຫວ່າງຫ້ອງຝັ່ງທາງໜ້າ ແລະ ທາງຫຼັງ (ຕໍ່ລຽນກັນ ແລະ ເປັນສອງແຖວ).



(ຮູບ 6-3) ບັນດາຕະກຸນໃນບ້ານພິນເບ



- ລູກສອນ ແມ່ນທິດທາງທີ່ຍ້າຍໄປເປັນສະໄພ້ ຕົວເລກໃນວົງມົນແມ່ນອາຍຸ.
- ລູກສອນເສັ້ນຂາດ ແມ່ນສະໄພ້ເສຍຊີວິດແລ້ວ.
- ລູກສອນໃຫຍ່ຈາກທາງນອກ ແມ່ນບອກຈຳນວນຂອງລູກໃພ້ ມາຈາກບ້ານອື່ນ.

(ຮູບ 6-4) ສາຍພົວພັນການແຕ່ງງານ ລະຫວ່າງຕະກຸນໃນບ້ານພິນເບ

- **ເຮືອນຍາວແບບ ແຖວດຽວ**

ສຳລັບເຮືອນຍາວປະເພດນີ້ ໄດ້ມີຕົວຢ່າງທີ່ເດັ່ນຢູ່ທາງເໜືອຂອງບ້ານທີ່ຕັ້ງຢູ່ ໃນອານາເຂດຂອງຕະກຸນ ໂຕຣຍ ເຊິ່ງແມ່ນເຮືອນນໍ້າເບີ 36 ແລະ 31 ນອກຈາກນີ້ ຢູ່ທາງພາກໃຕ້ແມ່ນເຮືອນນໍ້າເບີ 11 ຂອງຕະກຸນ ປະຕະແລະ ຕະກຸນປ້ວຍ ເຮືອນນໍ້າເບີ26 ເຊິ່ງຕັ້ງຢູ່ທາງຂ້າງຂອງເຮືອນຕະກຸນໂຕຣຍ ແລະ ບໍ່ມີຂະໜາດຍາວ ເທົ່າໃດ ແຕ່ມີລັກສະນະເປັນແບບແຖວດຽວ ນອກຈາກນີ້ ເຮືອນທີ່ມີຫ້ອງປະມານ 2 ຫາ 3 ຫ້ອງສ່ວນຫຼາຍ ກໍ່ ແມ່ນເປັນແບບແຖວດຽວ ເຮືອນຂອງຕະກຸນໂຕຣຍແມ່ນມີ 2 ຫຼັງ ເຊິ່ງສ້າງມາແຕ່ປີ 1992 ເຮືອນຂອງຕະກຸນ ປະຕະແມ່ນສ້າງໃນປີ1995 ຕະກຸນປ້ວຍສ້າງໃນປີ1992 ແລະ ເຮືອນທັງໝົດນີ້ກໍ່ບໍ່ເກົ່າປານໃດ ເຖິງແມ່ນວ່າ ເຮືອນນໍ້າເບີ 33 ຂອງ ຕະກຸນໂຕຣຍແມ່ນສ້າງຂຶ້ນເປັນຂອງຄອບຄົວດຽວ ແລະ ມີທຶ່ງບູຊາກໍ່ຕາມເວົ້າກັນວ່າຢູ່ ທາງຫຼັງຂອງເຮືອນນໍ້າເບີ 36 ເຄີຍມີເຮືອນຍາວທີ່ມີຂະໜາດ 100 ແມັດ ແລະ ມີຄອບຄົວຢູ່ຕັ້ງວ່າ 42 ຄອບ ຄົວ ຢູ່ໃນນີ້ ເຄີຍມີຄອບຄົວທີ່ຢູ່ມາໄດ້ 12 ປີ ກ່ອນທີ່ຈະມ້າງເຮືອນ 30 ຄອບຄົວ ແມ່ນມາແບ່ງກັນຢູ່ອ້ອມບໍລິ ເວນເຮືອນນໍ້າເບີ 36 ເຊິ່ງມີຢູ່ 6 ຫຼັງ ອີກ 9 ຄອບຄົວ ແມ່ນຍົກຍ້າຍໄປຢູ່ໃນຕົວເມືອງສະໜ້ອຍ.

ຈຸດພິເສດຂອງບໍລິເວນສະຖານທີ່ເຮືອນແບບແຖວດຽວແມ່ນ: ຄວາມກວ້າງ(ທາງເບື້ອງຂວາງຂອງເຮືອນ) ແມ່ນແຄບ ແລະ ຍາວພຽງກັນໄປເຮືອນປ້ວຍມີພຽງ 2.7ແມັດ ເຮືອນປະຕະມີພຽງ 2.9 ແມັດ ຄວາມຍາວແມ່ນ 37.2 ແມັດ ແລະ ຂອງເຮືອນຍາວຕະກຸນໂຕຣຍ ນໍ້າເບີ 36 ກໍ່ມີພຽງ 3.7 ແມັດ ຢູ່ທາງໃນມີລັກສະນະຂັ້ນຕໍ່ກັນ ດ້ວຍຝາເຊິ່ງບໍ່ເຖິງເພດານ ແລະ ມີຫຼັງຄາຊັ້ນ 50 ອົງສາ ເຖິງແມ່ນວ່າຢູ່ບໍລິເວນພາຍໃນ ຈະແບ່ງເປັນລ່ອກ ນ້ອຍໆແບບງ່າຍໆ ແຕ່ສາມາດຮູ້ສຶກໄດ້ເຖິງ ຄວາມເປັນເຮືອນຍາວອັນດຽວກັນ ໂດຍມີເພດານຮ່ວມກັນ ແລະ ບັນດາລ່ອກທີ່ແບ່ງນັ້ນກໍ່ບໍ່ຮອດກ້ອງຫຼັງຄາ ຖ້າບໍ່ນັບຫ້ອງທີ່ໃຊ້ໄວ້ຮັບແຂກແລ້ວ ບັນດາຫ້ອງທີ່ເຫຼືອ ແມ່ນເປັນ ບໍລິເວນຂອງຫ້ອງແຕ່ລະຄອບຄົວ ສາມາດຮູ້ໄດ້ໂດຍສັງເກດຈາກການ ແບ່ງເຂດຂອງເຕົາໄຟທີ່ມີພື້ນຢູ່ໃຕ້ຫຼັງ ຄາອັນດຽວກັນນີ້ ຫ້ອງຂອງຜົວເມຍ(ລວມທັງຜົວເມຍທີ່ມີລູກຢູ່ນຳ ພໍ່ລູກ ຫຼື ແມ່ລູກ)ຈະລຽນກັນເປັນແຖວດຽວ ແລະ ຈະມີຮູບຮ່າງຕໍ່ກັນດ້ວຍທາງຜ່ານເປັນສາຍ ຢູ່ທາງໜ້າແຕ່ລະຫ້ອງຈະມີທາງເຂົ້າອອກມີຂອບປະຕູເປັນ ຮູບແອນລິບ ເຊິ່ງເຮັດດ້ວຍໄມ້ໄຜ່ຢ່າງສວຍງາມ ແລະ ຢູ່ພາຍໃນຫ້ອງຝາຈະສານໄມ້ໄຜ່ໃສ່ເຊັ່ນດຽວກັນ.

ກ່ຽວກັບຄອບຄົວຂອງໂຕຣຍທີ່ຢູ່ເຮືອນເບີ36 ໂດຍອີງຕາມການສອບຖາມແລ້ວ ຍັງມີຄົນທີ່ບໍ່ສາມາດນຳ ຮອຍເຊື້ອສາຍໄດ້ ອາໄສຢູ່ ໃນຫ້ອງທີ່ຫ່ວາງມີ 3 ຄອບຄົວ ທີ່ບໍ່ແມ່ນພີ່ນ້ອງໃກ້ກັນ ອາໄສຢູ່ແລະໃນນີ້ 3 ມີ ຄອບຄົວ ຍ້າຍທີ່ໄປຢູ່ເມືອງສະໜ້ອຍ ແລະ ອາໄສຢູ່ລຽບຕາມເສັ້ນທາງໃຫຍ່ ແລະ ມີອີກ 3 ຫ້ອງຈະເປັນຫ້ອງ ຫ່ວາງ ຍ້ອນເຂົາເຈົ້າຍ້າຍບ້ານ ນອກຈາກນີ້ ເຮືອນນໍ້າເບີ 31 ແມ່ນເປັນອັນດັບທີ 2 ຮອງຈາກ ເຮືອນເບີ 36 ແຕ່ໃນປະຈຸບັນນີ້ ມີຜົວ:ເມຍເຖົ້າອາໄສຢູ່ພຽງຫຼັງໜຶ່ງ ໃນເມື່ອກ່ອນມີບັນດາລູກຂອງນ້ອງຊາຍ 2 ຄົນ ຢູ່ນຳກັນ (ຄູ່ 2 ອ້າຍນ້ອງ ທີ່ເມຍຕາຍປະ) ໄດ້ຍ້າຍມາປຸກເຮືອນຍາວຢູ່ໃກ້.

ໃນເຮືອນຍາວສັ້ນຂອງຕະກຸນປ້ວຍ ແລະ ຕະກຸນປະຕະນີ້ ມີຄອບຄົວທີ່ຢູ່ນຳກັນເປັນອ້າຍນ້ອງກັນ ແລະ ເປັນພີ່ນ້ອງສະໜິດ ເຊິ່ງບໍ່ຄືກັບກໍລະນີຂອງຕະກຸນໂຕຣຍ ຖ້າຫາກສັງເກດເບິ່ງວິທີການຢູ່ອາໄສ ຂອງເຂົ້າເຈົ້າ ແລ້ວ ຜູ້ເຖົ້າທີ່ຢູ່ຫ້ອງໃກ້ຫ້ອງຮັບແຂກ ຫຼື ຫ້ອງຂ້າງທີ່ຕັ້ງຫົ້ງ ຈະເປັນຫົວໜ້າເຮືອນຄ້າຍຄືກັນກັບເຮືອນຍາວ ອີກແບບໜຶ່ງ ວິທີການຢູ່ຂອງເຮືອນເບີ 11 ຂອງປະຕະ ແລະ ເບີ26 ຂອງປ້ວຍ ຫ້ອງຂອງຜົວເມຍ ທີ່ຢູ່ຖັດຈາກ ຫ້ອງຫົວໜ້າເຮືອນ ຫຼື ຫ້ອງຜູ້ເຖົ້າ ບັນດາຫ້ອງຖັດໄປນັ້ນຈະຖືກຈັດໄວ້ຕາມລຳດັບ ສະຫຼຸບແລ້ວຢູ່ໃນເຮືອນ ຍາວນັ້ນ ຫ້ອງນ້ອງຕູ້ນ້ອຍ ຫຼື ຫ້ອງຮັບແຂກ ຈະຖືເປັນສຳຄັນ ແລະ ບັນດາຫ້ອງຊ້າຍຂວາຖັດກັນໄປຈະມີ ຄວາມສຳຄັນຕາມລຳດັບ.

- **ເຮືອນຍາວແບບ ສອງແຖວ**

ອີກທາງໜຶ່ງ ໃນຕົວຢ່າງຂອງເຮືອນຍາວແບບສອງແຖວນີ້ ຢູ່ໃນອານາເຂດຂອງຕະກຸນປະແລະ ທີ່ຕັ້ງຢູ່ທາງໃຕ້ຂອງບ້ານ ແລະ ຕະກຸນໂຕຣຍເຮືອນເບີ19 ແລະ ເຮືອນເບີ25 ຂອງຕະກຸນໂຕຣຍຢູ່ທາງໃຕ້ ເຮືອນເບີ 20 ຕະກຸນປະຕະ ແລະ ຕະກຸນປະແລະ ມີ 4 ຫ້ອງ ສ້າງໃນປີ 2002 ຕະກຸນໂຕຣຍເບີ19 ສ້າງຂຶ້ນໃນປີ 1997 ເຮືອນເບີ 25 ສ້າງຂຶ້ນປີ 2002 ເມື່ອປຽບທຽບແລ້ວແມ່ນຖືກສ້າງໃນໝໍ່ໆນີ້ ແຕ່ວ່າເຮືອນເບີ 20 ຂອງຕະກຸນປະຕະ ແມ່ນສ້າງຂຶ້ນໃນປີ1984 ແລະຖືກສ້າງຄືນເປັນສິບໆປີແລ້ວ ໃນເມື່ອກ່ອນເຊິ່ງທັງໝົດລວມໄດ້ປະມານ 20 ປີ ເພາະສະນັ້ນອາຍຸຂອງການສ້າງ ຈຶ່ງບໍ່ສາມາດພິສູດໄດ້ວ່າ ເຮືອນສອງແຖວຈະໃໝ່ກ່ວາ ເຮືອນແບບແຖວດຽວ.

ຈຸດພິເສດຂອງເຮືອນແບບສອງແຖວດຽວແມ່ນ:ສຳຄັນທີ່ສຸດກໍ່ແມ່ນຊ່ວງຂອງເຮືອນກ້ວາງ ຄວາມຊັນຂອງຫຼັງຄາແມ່ນມີໜ້ອຍ, ເມື່ອສັງເກດເບິ່ງເຮືອນທັງ 4 ຫຼັງຂອງ ຕະກຸນປະແລະ ເຫັນໄດ້ວ່າ ເຮືອນເບີ 1ແລະ ເບີ 2 ມີຄວາມກ້ວາງ 5 ແມັດ ເຮືອນເບີ 3 ແລະ 4 ກວ້າງ 5.3 ແມັດ ເມື່ອເບິ່ງຂອງຕະກຸນໂຕຣຍແມ່ນ ເຮືອນເບີ 19 ກ້ວາງ 5.1 ແມັດ, ເຮືອນເບີ 25 ກວ້າງ 5.4 ແມັດ ແລະ ເຮືອນເບີ 20 ມີອາຍຸການສ້າງເກົ່າ ແລະ ມີຄວາມກ້ວາງ 4.5 ແມັດ, ເມື່ອເບິ່ງຮູບຕັດທາງດ້ານໃນແລ້ວ ເຮືອນເບີ 20 ຕະກຸນປະຕະ ເຊິ່ງມີຄວາມກ້ວາງໜ້ອຍກ່ອນໝູ່ນັ້ນ ບ່ອນທີ່ແບ່ງບໍລິເວນຂອງຫ້ອງທັງສອງຟາກນັ້ນບໍ່ໄດ້ຢູ່ເຄິ່ງກາງເຮືອນ ແຕ່ແບ່ງເຄິ່ງທາງໜ້າ 2.5 ແມັດ ແລະ ເຄິ່ງທາງໃນ 2 ແມັດ, ນອກນີ້ ເຮືອນເບີ 19 ແລະ ເບີ25 ກໍ່ແບ່ງລັກສະນະດຽວກັນລົງໄປຮອດຫ້ອງເຮືອນ ເມື່ອລວມທັງຕະກຸນປະຕະແລ້ວ ເຫັນໄດ້ວ່າຕົວຢ່າງຂອງການແບ່ງດັ່ງກ່າວ ເປັນແບບງ່າຍໆ ແລະ ເຮັດຫ້ອງລ່ວງກັນເລີຍເຊິ່ງບໍ່ໄດ້ຊຶ່ງບໍ່ໄດ້ແບ່ງເປັນທາງທຽວ, ຕໍ່ເນື້ອໃນດັ່ງກ່າວນີ້ສຳລັບເຮືອນເບີ 2 ຂອງຕະກຸນປະແລະ ຢູ່ແຕ່ລະບ່ອນຈະຖືກແບ່ງບ່ອນກາງທາງຍ່າງ ແລະ ເມື່ອບໍ່ນັບຫ້ອງຮັບແຂກຢູ່ທາງກາງຂອງເຮືອນຈະມີທາງຍ່າງແບບສະໄໝໃໝ່ທຽວຫາແຕ່ລະຫ້ອງ ໂດຍບໍ່ຈຳເປັນຕ້ອງຜ່ານຫ້ອງຂອງຄົນອື່ນ ຄືກັບກໍລະນີເຮືອນແຖວດຽວ ເລື່ອງຄວາມກ້ວາງຂອງບັນດາຫ້ອງນັ້ນ ໂດຍອີງໃສ່ຕົວຢ່າງຫ້ອງແລ້ວ ຄວາມກ້ວາງຂອງຫ້ອງຈະຖືກແບ່ງໂດຍອີງຕາມຄວາມຈຳເປັນ.

ເມື່ອເບິ່ງເຖິງວິທີການຢູ່ອາໄສແລ້ວແມ່ນມີລັກສະນະທີ່ສັບສົນກ່ວາ ກໍລະນີຂອງເຮືອນຍາວແຖວດຽວ, ໃນຕົວຢ່າງຂອງເຮືອນເບີ 20 ຂອງຕະກຸນປະຕະ ຈາກລຸ້ນທີ່ຫ້າ ຕ່ຳສຸດແມ່ນສີ່ຊົ່ວຄົນ ໄດ້ອາໄສຢູ່ເຮືອນຫຼັງດຽວກັນ ແຕ່ວ່າລຸ້ນທີສອງມີຄູ່ຜົວເມຍ ຊຶ່ງປະຈຸບັນຍັງແຕ່ເມຍ ກໍ່ອາໄສຢູ່ນຳກັນໃນເຮືອນເບີ20 ເຊັ່ນດຽວກັນ ກ່ອນລຸ້ນທີ່ສີ່ ຊຶ່ງແມ່ນອ້າຍນ້ອງກັນຈະມີຫ້ອງແບ່ງຢາຍຊ້າຍແລະຂວາ ການແບ່ງຫ້ອງຕ່າງໆ ຈະມີລຳດັບຈາກຫ້ອງຂອງຜູ້ເຖົ້າອາວຸໂສສູງສຸດ ຫາ ຫ້ອງຂອງຜູ້ໜຸ່ມສຸດ ນອກຈາກນີ້ຈຳນວນຫ້ອງແມ່ນບໍ່ພໍກັນແລະໄດ້ມີການສ້າງເຮືອນຂຶ້ນ ໄດ້ຕັ້ງຢູ່ທາງຂ້າງຊຶ່ງແມ່ນເຮືອນຍາວເບີ 22 ທີ່ມີຫ້ອງຢູ່ 4 ຫ້ອງ ແຕ່ວ່າສີ່ຄູ່ຜົວເມຍແລະ ຄອບຄົວທີ່ມີລູກນ້ອຍທີ່ຍ້າຍໄປຢູ່ເຮືອນໃໝ່ນັ້ນ ແມ່ນບໍ່ມີຄວາມສຳພັນແໜ້ນແຟ້ນກັນເທົ່າໃດ ຕົວຢ່າງນີ້ແມ່ນສະແດງສາຍພົວພັນສັງຄົມທີ່ແໜ້ນແຟ້ນ ບົນພື້ນຖານຂອງສາຍເລືອດດຽວກັນຂອງຝ່າຍພໍ່ ຍັງສາມາດເວົ້າໄດ້ວ່າແມ່ນການສະແດງເຖິງ ຄວາມແໜ້ນແຟ້ນຂອງການດຳລົງຊີວິດ ຢູ່ຮ່ວມກັນຂອງແຕ່ລະຕະກຸນເຊິ່ງມີເຮືອນຍາວເປັນແກ່ນສານໃນການເຕົ້າໂຮມກັນວົງຕະກຸນ.

ເມື່ອສັງເກດເບິ່ງຕົວຢ່າງຂອງເຮືອນແບບ 2 ແຖວຫຼັງອື່ນແລ້ວ ໃນກໍລະນີຂອງເຮືອນນ້ຳເບີ 19 ແລະ ເຮືອນເບີ 25 ຂອງຕະກຸນໂຕຣຍ ແລະ ເຮືອນເບີ 2 ຂອງຕະກຸນປະແລະ ແຫ່ງມີວິທີການຢູ່ອາໄສທີ່ສັບສົນກ່ວາ ກໍລະນີຂອງເຮືອນເບີ19 ຂອງຕະກຸນໂຕຣຍ ໃນບັນດາລູກຫຼານສີ່ອ້າຍນ້ອງທີ່ຕາຍແລ້ວ ແມ່ນມີລູກຂອງອ້າຍຜູ້ທີສາມຍ້າຍອອກໄປປຸກເຮືອນນ້ອຍຢູ່ ສ່ວນລູກຫຼານຂອງອ້າຍນ້ອງອີກສາມຄົນທີ່ເຫຼືອນັ້ນແມ່ນຍັງອາໄສຢູ່ນຳ

ກັນ ເມຍສອງຄົນຂອງອ້າຍກົກ ແລະ ເມຍຂອງອ້າຍຜູ້ທີສອງ ແມ່ນແຍກຫ້ອງກັນຢູ່ ສອງຟາກຂອງຫ້ອງມ້ອງຕຸມ້ອຍ ແລະ ບັນດາລູກໜ້ານຂອງເຂົາ ກໍ່ຢູ່ຖັດໄປຕໍ່ຈາກຫ້ອງຂອງເຂົາເຈົ້າ ແຕ່ວ່າຄູ່ຜົວເມຍເຊິ່ງແມ່ນລູກຂອງນ້ອງຜູ້ທີສີ່ ທີ່ຕາຍໄປແລ້ວແມ່ນມີສອງຄູ່ຜົວເມຍ ແບ່ງກັນຢູ່ທາງສົ້ນຊ້າຍ ແລະ ຂວາຂອງເຮືອນ ເຮືອນເບີ 25ຂອງຕະກຸນໂຕຣຍມີສາມລຸ້ນ ເຊິ່ງມີໂຄງສ້າງທີ່ສັບສົນ ໂດຍມີໜ້ານ ແລະບັນດາຍາດພີ່ນ້ອງຂອງສາມອ້າຍນ້ອງອາໄສຢູ່ ແຕ່ວ່າສຳລັບກໍລະນີ ຂອງຄອບຄົວຫົວໜ້າເຮືອນ ແມ່ນຜູ້ເຖົ້າອາວຸໂສຢູ່ທາງຂ້າງ ຂອງຫ້ອງຮັບແຂກເຊິ່ງຢູ່ໃກ້ກັບຫົ້ງ ແຕ່ບັນດາລູກຊາຍບໍ່ໄດ້ຢູ່ນຳເຮືອນຫຼັງນີ້ ພວກເຂົາເຈົ້າທັງສອງຄອບຄົວ ແມ່ນປຸກເຮືອນນ້ອຍຢູ່ນຳກັນຢູ່ໃກ້ໆ .

ນອກຈາກນີ້ ຍັງມີເຮືອນເບີ 2 ຂອງຕະກຸນປະເລະ ເຊິ່ງມີໂຄງຮ່າງຂອງການຢູ່ອາໄສແບບເຕົ້າໂຮມກັນມາຮອດປີ2002ນີ້ ໄດ້ມີເຈັດອ້າຍນ້ອງ (ໃນເວລາສຳຫຼວດມີພຽງສີ່ຄົນ) ລວມທັງເຂົາເຈົ້າ ກໍ່ມີລູກໜ້ານຂອງຄົນລຸ້ນທີສາມ ເຄີຍອາໄສຢູ່ໃນເຮືອນຍາວໃຫຍ່ແຕ່ໃນປະຈຸບັນແມ່ນແຍກກັນຢູ່ 4 ຫຼັງຄາເຮືອນ ແລະ ຢູ່ໃນເຮືອນເບີ2 ເຊິ່ງຍາວ30 ແມັດ ມີບັນດາລູກຂອງສີ່ອ້າຍນ້ອງອາໄສຢູ່ ທາງທິດເໜືອຂອງມ້ອງຕູມ້ອຍແມ່ນ ອານາເຂດດຳລົງຊີວິດ ຂອງສຳລັບຫົວໜ້າເຮືອນ ເຊິ່ງແມ່ນລູກຊາຍຜູ້ທີສາມ ກຳລັງເຮັດໜ້າທີ່ຢູ່ ແຕ່ຢູ່ທາງໃຕ້ແມ່ນມີບັນດາຄອບຄົວຂອງອ້າຍກົກທີ່ໄດ້ຕາຍລ່ວງລັບໄປແລ້ວ ລວມມີຜົວເຊິ່ງເປັນລູກຊາຍຜູ້ທີຫົກແລະເມຍ, ເມຍຂອງລູກຊາຍຜູ້ທີເຈັດໄດ້ຕາຍແລ້ວ ແລະ ໄດ້ແບ່ງກັນອາໄສຢູ່ ເຊິ່ງບໍ່ແມ່ນການຢູ່ອາໄສທີ່ສົມປົນກັນ ອີກທາງໜຶ່ງ ເຖິງແມ່ນວ່າ ອີກສາມອ້າຍນ້ອງຈະແຍກກັນຢູ່ເຮືອນຍາວຄົນລະຫຼັງແຕ່ ສີ່ຄູ່ຜົວເມຍ ເຊິ່ງເປັນລູກຂອງອ້າຍຜູ້ທີສອງ ແມ່ນບໍ່ອາໄສຢູ່ໃນເຮືອນເບີ 3 ແລະ ໄດ້ອາໄສຢູ່ 2 ຫ້ອງ ຂອງເຮືອນເບີ 1, ນອກນີ້ ຫົວໜ້າເຮືອນຂອງຕະກຸນປະເລະ ຍັງມີເຮືອນຫຼາຍຢູ່ເມືອງສະໜ້ວຍ ເຊິ່ງບໍ່ໄດ້ອາໄສຢູ່ ໂດຍປົກກະຕິແລ້ວ ລູກຊາຍຜູ້ທີສີ່ ທີ່ຢູ່ເຮືອນເບີ 4 ຈະມາເຮັດພິທີຕ່າງໆ ຢູ່ມ້ອງຕູມ້ອຍຂອງເຮືອນເບີ 2 ເຖິງແມ່ນວ່າທັງໝົດຕະກຸນປະເລະຈະແຍກກັນຢູ່ເຮືອນ4 ຫຼັງ ແຕ່ການອາໄສເຮືອນ4 ຫຼັງ ຂອງຕະກຸນປະແລະ ແມ່ນບໍ່ສາມາດແບ່ງອານາເຂດໄດ້ ແລະ ມີການຢູ່ອາໄສເຮືອນຍາວໂດຍສືບຕໍ່ມາແຕ່ດັ່ງເດີມຢ່າງແໜ້ນແຟ້ນ.

- **ເຮືອນຍາວກາງ**

ອີກທາງໜຶ່ງຢູ່ໃນບ້ານຕົ້ງໂກນີ້ ມີບັນດາກຸ່ມຄອບຄົວນ້ອຍດຳລົງຊີວິດຢູ່ໃນເຮືອນຍາວກາງເຊິ່ງມີໂຄງຮ່າງແຕກຕ່າງກັບລະບົບເຊື້ອສາຍວົງຕະກຸນນ້ອຍ ແລະການນຳໃຊ້ທີ່ແຕກຕ່າງກັບເຮືອນຍາວ ໃນນີ້ມີຫຼາຍຕົວຢ່າງໃຫ້ເຫັນເຊັ່ນ ໃນບ້ານຍາວກາງຫຼັງໜຶ່ງ ລວມມີ 3 ຫາ 4 ຄອບຄົວ ປະກອບດ້ວຍຜົວເມຍ ແລະ ລູກຂອງຍາດພີ່ນ້ອງໃກ້ຄຽງ ຂອງບັນດາອ້າຍນ້ອງທີ່ໄດ້ກ່າວມາກ່ອນນັ້ນ, ເມື່ອເບິ່ງເຮືອນຈາກແຜນຜັງທາງເທິງລົງມາ ຈະມີແຖວລັກສະນະເປັນສອງແຖວ ໃນບັນດາເຮືອນດັ່ງກ່າວມີ: ເຮືອນເບີ3ຂອງຕະກຸນປະເລະ ແລະ ເຮືອນເບີ 14 ຂອງຕະກຸນປະຕະ ເຮືອນເບີ 15 ຂອງຕະກຸນລະໄລ ເຮືອນເບີ 22 ຂອງຕະກຸນປ້ວຍ ເຮືອນເບີ 27 ເຮືອນ ເບີ 33 ແລະ ເຮືອນເບີ 35 ຂອງຕະກຸນໂຕຣຍ, ບັນດາເຮືອນທັງໝົດນີ້ ແມ່ນຖືກສ້າງຂຶ້ນໃນໝໍ່ໆນີ້ ບັນດາຮູບຮ່າງມີຄວາມແຕກຕ່າງກັນໜ້ອຍຫາຫຼາຍ ແຕ່ເມື່ອເບິ່ງແຜນຜັງແລ້ວ ຢູ່ທາງໜ້າຈະມີຫ້ອງຮັບແຂກ ທີ່ກ້ວາງ ແລະຍາວ ສ່ວນຢູ່ທາງຫຼັງແມ່ນມີບັນດາຫ້ອງນອນຕ່າງໆແບ່ງກັນຢູ່ເຊິ່ງບໍ່ມີເຕົາໄຟ ແຕ່ລະຫ້ອງຈະມີທາງເຂົ້າຫາໂດຍກົງຈາກຫ້ອງຮັບແຂກ ເຊິ່ງນີ້ເປັນຈຸດພິເສດຢ່າງໜຶ່ງຂອງເຮືອນຍາວກາງ ສ່ວນບໍລິເວນຂອງສະຖານທີ່ຄົວກິນ ແມ່ນຈະມີຢູ່ສົ້ນຂອງເຮືອນຢູ່ຂ້າງ ໜຶ່ງຕິດກັບທາງກ້ວາງຂອງເຮືອນ ຫຼື ທັງສອງຂ້າງ ກໍລະນີ ມີຢູ່ສົ້ນໜຶ່ງຂອງເຮືອນ ແມ່ນເຮືອນເບີ 33 ແລະເຮືອນເບີ 35.

ເພາະສະນັ້ນດັ່ງທີ່ໄດ້ກ່າວມາແລ້ວວ່າ ບັນດາເຮືອນຍາວກາງມີລັກສະນະພິເສດ ທາງດ້ານໂຄງສ້າງ ແລະ

ແຕກຕ່າງກັບເຮືອນຍາວຢ່າງເຫັນໄດ້ແຈ້ງ ສຳລັບກໍລະນີຂອງເຮືອນຍາວ ແມ່ນບັນດາຫົວໜ່ວຍຄອບຄົວຈະແບ່ງກັນຕາມຈຳນວນຂອງເຕົາໄຟ ແລະ ຢູ່ບ່ອນດັ່ງກ່າວຈະເປັນບ່ອນດຳລົງຊີວິດທຸງຕົ້ມຄົວກິນ ລວມທັງເປັນບ່ອນນອນຕາມປົກກະຕິ ແຕ່ສຳລັບເຮືອນຍາວກາງແມ່ນບໍ່ມີບ່ອນເຮັດກິນຢູ່ໃນຫ້ອງນອນ ສະຫຼຸບແລ້ວຫ້ອງນອນຂອງເຮືອນຍາວແມ່ນເປັນທີ່ຕັ້ງຫຼັກ ຂອງການດຳລົງຊີວິດຜົວເມຍ ແລະ ລູກ ສ່ວນຫ້ອງຂອງເຮືອນຍາວກາງໂດຍທົ່ວໄປແລ້ວຈະມີຄວາມເປັນຫ້ອງນອນໜາຍກ່ວາແລະຂະໜາດກໍ່ນ້ອຍ ດັ່ງນັ້ນຫ້ອງຮັບແຂກທີ່ກ້ວາງຢູ່ທາງໜ້ານັ້ນ ເຖິງແມ່ນວ່າຈະໃຊ້ເປັນບ່ອນຮັບແຂກແຕ່ໃນມື້ປົກກະຕິແລ້ວ ກໍ່ຍັງນຳໃຊ້ເປັນບ່ອນອາໄສໃນເວລາຕອນສວຍ ແລະຍັງເປັນບ່ອນນອນໃນເວລາກາງຄືນ ຂອງລູກສາວຫຼືລູກຊາຍທີ່ແຍກກອກຈາກຫ້ອງຂອງພໍ່ແມ່ ນອກຈາກນີ້ບໍລິເວນທີ່ແຍກອອກຈາກເຮືອນ ກໍ່ເປັນບ່ອນຄົວກິນຢູ່ແຈເຊິ່ງຢູ່ເຮືອນຍາວຈະມີການຄົວຢູ່ແຕ່ລະຫ້ອງໃຜມັນ ແຕ່ຫ້ອງຂອງເຮືອນຍາວກາງແມ່ນແບ່ງເປັນ 3 ປະເພດ.

- **ເຮືອນນ້ອຍທີ່ບໍ່ສົມບູນແບບ**

ນອກຈາກ3 ກໍລະນີຂ້າງເທິງແລ້ວ ຍັງມີເຮືອນນ້ອຍທີ່ມີແຕ່ຫ້ອງດຽວສຳລັບ1 ຄອບຄົວ ຫຼື ຂັ້ນແບບງ່າຍໆ ແບ່ງເປັນ 2 ຫ້ອງ ເຊິ່ງມີກໍລະນີຂອງຄອບຄົວຂອງນ້ອງຊາຍຜູ້ນ້ອຍ ແລະ ນ້ອງຊາຍອາໄສຢູ່ນຳກັນເຊິ່ງກໍລະນີແບບນີ້ແມ່ນມີໜ້ອຍ, ສ່ວນຮູບຮ່າງແລະຂະໜາດຂອງບ້ານນັ້ນ ແມ່ນມີໜ້ອຍແບບ ການຢູ່ອາໄສໃນເຮືອນນ້ອຍນີ້ ສາເຫດກໍ່ແມ່ນຍ້ອນໄດ້ມີການຈັດແຈງບັນດາຄອບຄົວໃໝ່ມີການເພີ້ມຂຶ້ນຂອງຈຳນວນຄອບຄົວ ຍ້ອນການແຕ່ງດອງ ແລະ ການເພີ້ມຂອງຈຳນວນອ້າຍນ້ອງລູກເຕົ້າ ເມື່ອເຫຼືອຈາກເຮືອນຍາວກໍ່ຈະແຍກມາຢູ່ເຮືອນຍາວກາງແລະ ເຮືອນນ້ອຍ ເຖິງຢ່າງໃດກໍ່ຕາມເວລາເຮັດເຮືອນຍາວຄືນໃໝ່ ແມ່ນໃນປະຈຸບັນມີແນວໂນ້ມໃນການແຍກໄປປຸກເປັນເຮືອນຍາວກາງ ແລະ ເຮືອນນ້ອຍ ເຊິ່ງລັກສະນະຂອງເຮືອນກໍ່ມີການພັດທະນາໃຫ້ເປັນແບບສະໄໝໃໝ່ຫຼາຍຂຶ້ນ ແຕ່ວ່າໃນປະຈຸບັນນີ້ ເນື້ອທີ່ບໍລິເວນເຮືອນນ້ອຍກໍ່ຍັງບໍ່ສາມາດ ຮອງຮັບເອົາການຢູ່ອາໄສໄດ້ຢ່າງເຕັມສ່ວນເທື່ອ ແລະ ບໍ່ສາມາດເຮັດເປັນບໍລິເວນນຳໃຊ້ໄດ້ ຄືກັບເຮືອນຍາວກາງ ແລະ ເຮືອນຍາວ.

3-2. ຈຸດສັງເກດປະເພນີການຢູ່ອາໄສໃນເຮືອນຍາວ ຢູ່ບ້ານພີນເບ

ສຳລັບເຮືອນຍາວຂອງບ້ານພີນເບ ຈຸດພິເສດຂອງແຜນຜັງເຮືອນ ແລະ ວິທີການຢູ່ອາໄສແມ່ນມີຄວາມຄ້າຍຄືກັບບ້ານຕົ້ງໂກແລະມີພາກສ່ວນທີ່ມີລັກສະນະຄືກັບຈຸດພິເສດຂອງກະໂດຫຼາຍບ່ອນ ສ່ວນທີ່ມີຄວາມແຕກຕ່າງຫຼາຍກັບຕົວຢ່າງຂອງຕົ້ງໂກແມ່ນ ໂຄງສ້າງແຜນຜັງຂອງເຮືອນ ຢູ່ບ້ານຕົ້ງໂກຈະບໍ່ມີເຮືອນຍາວກາງສະໄໝໃໝ່ ທີ່ໄດ້ປຸກແຍກອອກມາຈາກເຮືອນຍາວ ເມື່ອລຽງລຳດັບທັງໝົດ17 ຕົວຢ່າງແລ້ວ ແມ່ນມີເຮືອນທີ່ມີ 25 ແມັດ ຫາເຮືອນນ້ອຍທີ່ມີຫ້ອງດຽວ ຢູ່ບ່ອນຫວ່າງຂອງບັນດາເຮືອນຍາວແຖວດຽວ ແມ່ນມີເຮືອນຍາວສອງແຖວປົນຢູ່ 2 ຫຼັງ ເຮືອນ 2ແຖວເຊິ່ງບໍ່ທັນສົມບູນເທື່ອ ແລະ ຢູ່ທັງສອງເບື້ອງມີຫ້ອງນ້ອຍບ່ອນລະຫ້ອງ ເວລາເຮືອນຍາວໃຫຍ່ຖືກມ້າງປຸກຄືນ ຄວາມຍາວຈະຫຼຸດລົງ ແລະ ຕັ້ງຢູ່ໃກ້ໆເຮືອນຍາວເກົ່າ ເຊິ່ງເປັນການປ່ຽນແປງແບບທຳມະດາ.

- **ເຮືອນຍາວແບບ ແຖວດຽວ**

ມີເຮືອນເບີ1 ເຮືອນເບີ3 ແລະ ເຮືອນເບີ14 ຂອງຕະກຸນວຽນ ຊຶ່ງຖືກສ້າງຄືນໃໝ່ໃນປີ 1994, ກ່ອນໜ້ານີ້ແມ່ນໄດ້ຢູ່ໃນເຮືອນຍາວໃຫຍ່ນຳກັນ, ລວມທັງໝົດຕະກຸນແມ່ນແບ່ງອອກເປັນ 3 ຫຼັງ ແລະ ມີທົ່ງຢູ່ລະຫວ່າງກາງ ເຖິງແມ່ນວ່າຄວາມຍາວຂອງເຮືອນຈະມີຄວາມແຕກຕ່າງກັນ ແຕ່ແຜນຜັງທາງໃນແມ່ນມີລັກສະນະຄ້າຍກັນຄວາມກ້ວາງຂອງຫ້ອງແມ່ນ3.8 ແມັດ ຫາ3.9ແມັດ ແລະ ຈະຖືກແບ່ງເປັນຂັ້ນໆຕາມທາງຍາວຂອງເຮືອນ ບ່ອນເຕົາໄຟຈະແບ່ງບໍລິເວນທັງໝົດທຸກຫ້ອງ ແລະ ຢູ່ທາງໜ້າ(ເບື້ອງເດີ່ນບ້ານ) ແມ່ນເປັນບ່ອນທາງຢ່າງເຂົ້າ

ອອກຕໍ່ກັນກັບຫ້ອງອື່ນ ແລະ ມີຂະໜາດເທົ່າໆກັນ ໂຄງສ້າງດັ່ງກ່າວແມ່ນບໍ່ມີຄວາມແຕກຕ່າງຫຍັງກັບເຮືອນຍາວແຖວດຽວ ສຳລັບບ້ານຕັ້ງໂກ ເມື່ອເບິ່ງວິທີຢູ່ອາໄສແລ້ວ ໃນເມື່ອກ່ອນຕັ້ງແຕ່ລຸ້ນສຸດທ້າຍ ຈາກລຸ້ນທີຫ້າ ນັບຄືນຫຼັງ ແມ່ນໄດ້ອາໄສຢູ່ນຳກັນ ຈາກນັ້ນໃນຕອນປຸກເຮືອນຄືນໃໝ່ ແມ່ນໄດ້ຢູ່ແຍກກັນຕອນລຸ້ນທີ 4 ເຊິ່ງ ແບ່ງອອກເປັນ3 ຫຼັງ ແລະ ຫ້ອງນອນທີ່ເປັນເຂດຄອບຄົວນ້ອຍ ຈະຖືກສອດດ້ວຍທາງຜ່ານຢ່າງເປັນລະບຽບ.

ແຕ່ວ່າ ຢູ່ໃນເຮືອນເບີ 2 ຂອງຕະກຸນວຽນ ທີ່ຖືກແຍກສ້າງອອກມາໃນປີ 1999 ແມ່ນມີຫ້ອງນ້ອຍຢູ່ສອງ ສົ້ນຂອງເຮືອນ ແລະ ບໍ່ມີເຕົາໄຟຢູ່ໃນຫ້ອງ ແຕ່ຈະມີຢູ່ບໍລິເວນ ທາງກາງເຮືອນເຊິ່ງແມ່ນບໍລິເວນຫ້ອງຮັບແຂກ ບ້ານພີນເບເປັນຕົວຢ່າງພຽງໜຶ່ງດຽວເທົ່ານັ້ນ ທີ່ຫ້ອງຜົວເມຍ ແລະ ບໍລິເວນບ່ອນເຮັດກິນ ແມ່ນແຍກກັນຢູ່ແຕ່ ບໍລິເວນບ່ອນເຕົາໄຟແມ່ນຈະເປັນບໍລິເວນດຽວກັບບ່ອນຮັບແຂກ ທັງເປັນບ່ອນເຮັດຢູ່ເຮັດກິນ ແລະ ເປັນບ່ອນ ຢູ່ຕອນສວາຍຂອງຄອບຄົວ ເຊິ່ງແຕກຕ່າງກັບການຢູ່ອາໄສ ໃນເຮືອນຍາວກາງຂອງບ້ານຕັ້ງໂກທີ່ໄດ້ກ່າວມາ ກ່ອນນັ້ນ.

